# ແຜນຈັດສັນ

# ການນໍາໃຊ້ທີ່ດິນ

ບ້ານຫ້ວຍຄໍ້, ບ້ານແກ້ງໂດນ ແລະ ບ້ານສອງຄອນ - ການຄຸ້ມຄອງຈັດສັນທີ່ດິນ ແລະ ການປະເມີນການພັດທະນາທີ່ສົມບູນແບບ ເພື່ອການວາງແຜນແບບຍືນຍົງ.

## ບົດລາຍງານ ວິຊາການ



### ຈັດຕັ້ງປະຕິບັດໂດຍ

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫລວງພະບາງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

## "ບ້ານແກ້ງໂດນ" ເມືອງສອງຄອນ, ແຂວງ ສະຫວັນນະເຂດ




**ກະກຽມໂດຍ:**

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ

ທັນວາ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າເມືອງ

ເລກທີ 669/ຈມ
ເມືອງສອງຄອນ, ວັນທີ 16 ທັນວາ 2025

# ຂໍ້ຕົກລົງ

## ຂອງເຈົ້າເມືອງ ສອງຄອນ

**ວ່າດ້ວຍ ການຮັບຮອງ ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ, ເມືອງສອງຄອນ ແຂວງສະຫວັນນະເຂດ**

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາາ 2025, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນ ຂອງ ບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ, ສະບັບເລກທີ 497/ຫກສມ, ວັນທີ 12 ທັນວາ 2025.

### ເຈົ້າເມືອງ ຕົກລົງ:

ມາດຕາ 1: ເຫັນດີຮັບຮອງແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2015.

ມາດຕາ 2: ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດ ໄປຕາມແຜນທີ່ກຳນົດໄວ້ ແລະ ແຜນສະບັບນີ້ ເປັນນິຕິກຳຄຸ້ມຄອງ ເພື່ອຮັບປະກັນສິດໃນການນຳໃຊ້ໃນອານາຄົດ.

ມາດຕາ 3: ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຜນການດັ່ງກ່າວ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມຮັບປະກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກຳ ແລະ ປ່າໄມ້, ທຸກການປ່ຽນແປງ ຫຼື ການຫັນປ່ຽນປະເພດການນຳໃຊ້ທີ່ດິນ ຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກຳນົດ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າເມືອງ

ແຂວງສະຫວັນນະເຂດ
ເຈົ້າເມືອງ ເມືອງສອງຄອນ

ແກ້ວສົມສັກ ພົມມະຈັກ

## ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2022 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະ ນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ ສະບັບນີ້ ຈະເປັນເອກະສານນິຕິກຳພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານແກ້ງໂດນ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮອບຮອມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ກະຊວງກະສິກຳ ແລະ ສິ່ງແວດ ລ້ອມ, ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ ແລະ ອົງການປົກຄອງເມືອງສອງຄອນ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເອດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນສະບັບນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງສອງຄອນ, ວັນທີ 12 ທັນວາ 2025

ຫົວໜ້າຫ້ອງການ

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ

ກັນຍາ ຊານຸລາດ

# ສັງລວມຫຍໍ້

ບ້ານແກ້ງໂດນ  ຕັ້ງຫ່າງຈາກເທດສະບານເມືອງສອງຄອນ ໄປທາງທາງໃຈກາງຂອງເມືອງ ປະມານ 13 ກິໂລແມັດ ມີໄລຍະທາງແຕ່ປະມານ 13 ກິໂລແມັດ, ມີເນື້ອທີ່ທັງໝົດ ມີ 1,481.6867 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງສອງຄອນ ດັ່ງຂໍ້ມູນລະອຽດລຸ່ມນີ້: ທິດເໜືອ: ຕິດກັບ ບ້ານຫົວຫາດ ແລະ ບ້ານໜອງເດີ່ນ, ທິດຕາເວັນອອກ: ຕິດກັບບ້ານດອນຂຽວ, ທິດໃຕ້: ຕິດກັບ ບ້ານໂນນຄຳສູງ ແລະ ທິດຕາເວັນຕົກ: ຕິດກັບ ບ້ານໂນນສະຫວ່າງ.

ບ້ານ ແກ້ງໂດນ ມີ 1 ຊົນເຜົ່າຄື: ຊົນເຜົ່າ, ລາວ, ສາດສະໜາພຸດ, ປະກອບ ມີ 228  ຫຼັງຄາເຮືອນ, ມີ 193 ຄອບຄົວ ມີພົນລະເມືອງທັງໝົດ 1226  ຄົນ,    ຍິງ 635 ຄົນ. ຊາວບ້ານປະກອບອາຊີບກະສິກຳເປັນຕົ້ນຕໍຄື: ແມ່ນຍຶດຖືເອົາການເຮັດນາ, ຄ້າຂາຍ, ເຮັດຕູ້ເຄື່ອງເພື່ອເປັນລາຍຮັບ ແລະ ສຳຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຂອງປະຊາຊົນພາຍໃນບ້ານ ແມ່ນມາຈາກ 2 ແຫຼ່ງຕົ້ນຕໍຄື: ແມ່ນອາຊີບເຮັດນາ ແລະ ຄ້າຂາຍເປັນຕົ້ນ.

ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ  ບ້ານແກ້ງໂດນ ປະກອບມີ 6 ປະເພດການນຳໃຊ້ຫຼັກ ຊຶ່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກຳ ມີປະມານ  228.03 ເຮັກຕາ ກວມເອົາ 15,39% (ໃນນີ້ ດິນນາ ແລະ ດິນປູກພືດກະສິກຳທົ່ວໄປ), ເຂດດິນປຸກສ້າງ ມີເນື້ອທີ່ 60.62 ເຮັກຕາ ກວມເອົາ 4.09% (ໃນນີ້ມີດິນປຸກສ້າງບຸກຄົນ, ດິນປຸກສ້າງລັດເປັນຈຳນວນຫຼາຍ,   ໂຮງຮຽນ,   ຫ້ອງການບ້ານ ແລະ ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທຳ ມີເນື້ອທີ່ 22,31 ເຮັກຕາ ກວມເອົາ 1.51% (ໃນນີ້ມີປ່າມະເຫສັກ ແລະ ປ່າຊ້າ), ເຂດດິນປ່າໄມ້ ມີເນື້ອທີ່ 981,58 ເຮັກຕາ ກວມເອົາ 66,25%  (ໃນນີ້ມີ ປ່າຊົມໃຊ້ທົ່ວໄປ ແລະ ປ່າຜະລິດແຂວງ,ປ່າສະຫງວນຂອງບ້ານ, ), ທີ່ດິນໂຍທາທິການ 12,75ເຮັກຕາ. ກວມເອົາ 0.86% (ໃນນີ້, ເສັ້ນທາງພາຍໃນບ້ານ, ທາງເຊື່ອມຕໍ່ລະຫວ່າງບ້ານ, ດິນສະຫງວນທາງ) ແລະ ທີ່ດິນບໍລິເວນນ້ຳ ມີເນື້ອທີ່ 176.391 ເຮັກຕາ ກວມເອົາ 11,90% (ໃນນີ້, ເຊບັງຫຽງ, : ຫ້ວຍພໍ່ໃຫ່ຍແປະ, ຫ້ວຍຢາງ, ຫ້ວຍເກາະ, ຫ້ວຍກະເຫຼືອງ, ຫ້ວຍຢາງກຸດ, ຫ້ວຍບ້ານ, ຫ້ວຍທ່າປ່ານ ແລະ ດິນສະຫງວນແຄມນ້ຳ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນຳໃຊ້ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິ່ເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ຮ່ວມກັບຄະນະກຳມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສຳຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນ້ຳ,  ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ,  ຍັງກວມລວມໄປເຖິງການກວດກາການນຳໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນ້ຳ - ສັດປ່າ ແລະ ການກະທຳທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

# ສາລະບານ


ຄຳນຳ.....I
ສັງລວມຫຍໍ້.....II
ສາລະບານຕາຕະລາງ.....III
ສາລະບານຮູບພາບ.....IV
I. ຈຸດປະສົງ ແລະ ລະດັບຄາດໝາຍ.....1
1.1. ຈຸດປະສົງ.....1
1.2. ລະດັບຄາດໝາຍ.....1
1.3. ຂັ້ນຕອນໃນການຈັດຕັ້ງປະຕິບັດ.....2
1.4. ວິທີການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Soflware ຫຼື Program ຕ່າງເຂົ້າຊ່ວຍ.....2
II. ສະພາບລວມຂອງບ້ານ.....4
2.1. ປະຫວັດຄວາມເປັນມາຂອງບ້ານ.....4
2.2. ດ້ານການປົກຄອງ.....5
2.3. ເຂດຄຸ້ມຄອງຂອງບ້ານ.....5
2.4. ຂໍ້ມູນດ້ານເສດຖະກິດ-ສັງຄົມ.....8
2.4.1. ການປະກອບອາຊີບ.....8
2.4.2. ແຫລ່ງລາຍຮັບຂອງປະຊາຊົນ.....8
2.4.3. ດ້ານການນຳໃຊ້ທີ່ດິນ.....8
III. ການຈັດສັນການນຳໃຊ້ທີ່ດິນ.....9
3.1 ການກຳນົດເຂດການນຳໃຊ້ທີ່ດິນຂອງບ້ານ.....9
3.1.1. ການກຳນົດເຂດທີ່ດິນກະສິກຳ.....10
3.1.2. ການກຳນົດເຂດດິນປຸກສ້າງ.....10
3.1.3. ການກຳນົດທີ່ດິນວັດທະນາທຳ.....10
3.1.4. ການກຳນົດທີ່ດິນ ປກສ-ປກຊ.....10
3.1.5. ການກຳນົດທີ່ດິນປ່າໄມ້.....10
3.1.6. ການກຳນົດເຂດທີ່ອຸດສາຫະກຳ.....10
3.1.7. ການກຳນົດນົດທີ່ດິນຄົມມະນາຄົມ.....10
3.1.8. ການກຳນົດນົດທີ່ດິນບໍລິເວນນໍ້າ.....10
IV. ທິດທາງການວາງແຜນພັດທະນາທີ່ດິນ.....13
4.1. ທ່າແຮງໃນການພັດທະນາຂອງບ້ານ.....13
4.2. ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານ.....14
V. ລະບຽບການໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ.....15
5.1. ການຄຸ້ມຄອງທີ່ດິນກະສິກຳ.....15
5.2. ການຄຸ້ມຄອງທີ່ດິນປຸກສ້າງ.....15
5.3. ການຄຸ້ມຄອງທີ່ດິນປ່າໄມ້.....15
5.4. ການຄຸ້ມຄອງທີ່ດິນຄົມມະນາຄົມ.....15
5.5. ການຄຸ້ມຄອງທີ່ດິນວັດທະນາທຳ.....15

5.6. ການຄຸ້ມຄອງທີ່ດິນບໍລິເວນນໍ້າ ........ 15
VI. ການຫັນປ່ຽນປະເພດທີ່ດິນ ........ 16
VII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ........ 16
6.1. ການຈັດຕັ້ງ ........ 16
6.2. ບຸກຄະລາກອນ ........ 16
6.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ........ 16
6.4. ຂອບເຂດສິດ ........ 17
6.5. ລະບອບແບບແຜນວິທີເຮັດວຽກ ........ 17
6.6. ການຕິດຕາມກວດກາ ........ 17
ເອກະສານອ້າງອີງ ........ 18
ເອກະສານຊ້ອນທ້າຍ ........ 19
ເອກະສານຊ້ອນທ້າຍທີ 1: ແບບຟອມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານແກ້ງໂດນ ........ 20
ເອກະສານຊ້ອນທ້າຍທີ 2: ບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ ........ 27
ເອກະສານຊ້ອນທ້າຍທີ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ ........ 30
ເອກະສານຊ້ອນທ້າຍທີ 4: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດກ່ຽວກັບການລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ ........ 33
ເອກະສານຊ້ອນທ້າຍທີ 5: ຂໍ້ຕົກລົງທ່ານເຈົ້າເມືອງສອງຄອນວ່າດ້ວຍການແຕ່ງຕັ້ງພະນັກງານ ລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ ........ 34
ເອກະສານຊ້ອນທ້າຍທີ 6: ບົດບັນທຶກກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ. ........ 36
ເອກະສານຊ້ອນທ້າຍທີ 7: ໜັງສືສະເໜີ ກ່ຽວກັບພິຈາລະນາອະນຸມັດແຜນຈັດສັນການນາໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ. ........ 39

# ສາລະບານຕາຕະລາງ

ຕາຕະລາງ 1: ໄລຍະເວລາໃນການຈັດຕັ້ງປະຕິບັດແຕ່ເລີ່ມຕົ້ນຈົນສຳເລັດ ........ 3
ຕາຕະລາງ 2: ເຄື່ອງມື ແລະ ອຸປະກອນຮັບໃຊ້ວຽກງານ ........ 4
ຕາຕະລາງ 3: ຄ່າພິກັດບ້ານແກ້ງໂດນ ກັບ ຫົວຫາດ ກຸ່ມລະບົບ WGS 84 ........ 6
ຕາຕະລາງ 4: ຄ່າພິກັດບ້ານແກ້ງໂດນ ກັບ ບ້ານດອນຂຽວ ກຸ່ມລະບົບ WGS 84 ........ 6
ຕາຕະລາງ 5: ຄ່າພິກັດ ບ້ານແກ້ງໂດນ ກັບບ້ານ ໂນນຄຳສູງ ກຸ່ມລະບົບ WGS 84........ 6
ຕາຕະລາງ 6: ຄ່າພິກັດ ບ້ານແກ້ງໂດນ ກັບບ້ານ ໂນນສະຫວ່າງ ກຸ່ມລະບົບ WGS 84........ 7
ຕາຕະລາງ 7: ປູກພືດ ແລະ ສຳຮອງລ້ຽງມາແມ່ນລ້ຽງສັດ ແລະ ອື່ນໆ........ 8
ຕາຕະລາງ 8 : ເນື້ອທີ່ການນຳໃຊ້ທີ່ດິນປະຈຸບັນ, ບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ........ 8
ຕາຕະລາງ 9: ເນື້ອທີ່ການຈັດສັນທີ່ດິນແຕ່ລະປະເພດ, ບ້ານ ແກ້ງໂດນ, ເມືອງສອງຄອນ ແຂວງສະຫວັນນະເຂດ... 11
ຕາຕະລາງ 10: ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ດິນຂອງແຜນຈັດສັນທີ່ດິນ ........ 12

# ສາລະບານຮູບພາບ

ຮູບທີ 1: ສະພາບພູມສັນຖານບ້ານ ບ້ານແກ້ງໂດນ, ເມືອງສອງຄອນ ແຂວງສະຫວັນນະເຂດ ............................ 5
ຮູບທີ 2: ແຜນທີ່ຂອບເຂດຄຸ້ມຄອງ ບ້ານແກ້ງໂດນ, ເມືອງ ສອງຄອນ, ແຂວງສະຫວັນນະເຂດ .......................... 7
ຮູບທີ 3: ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ຂອງ ບ້ານ ແກ້ງໂດນ, ເມືອງສອງຄອນ, ແຂວງ ສະຫວັນນະເຂດ......... 9
ຮູບທີ 4: ແຜນທີ່ ການຈັດສັນທີ່ດິນຂອງ ບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ .................. 12
ຮູບທີ 5 : ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງ ການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ ........................................................................................................................... 13
ຮູບທີ 6: ສະແດງເຖິງຄວາມແຕກຕ່າງການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ................................. 13

# I. ຈຸດປະສົງ ແລະ ລະດັບຄາດໝາຍ

## 1.1. ຈຸດປະສົງ

ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດ ໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນ ໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນ ກໍ່ຕ້ອງໃຫ້ສອດຄອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະເຂດ. ດັ່ງນັ້ນ, ຈຸດປະສົງຂອງການວາງແຜນສຳຫຼວດຈັດສັນທີ່ດິນຕ້ອງໄດ້ເລັ່ງໃສ່ໃນຂົງເຂດວຽກງານຫຼັກລຸ່ມນີ້:

1) ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງຕະຫຼອດໄປ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ສາມາດນຳຜົນປະໂຫຍດ ສູງສຸດມາໃຫ້ ປະເທດຊາດ.
2) ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີ່ດິນປ່າໄມ້ແບບຊະຊາຍ, ການສວຍໂອກາດເອົາທີ່ດິນຂອງ ລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ.
3) ເພື່ອຊຸກຍູ້ ແລະ ສົ່ງເສີມໃຫ້ແກ່ການລົງທຶນເຂົ້າໃນການພັດທະນາທີ່ດິນຢ່າງຮອບດ້ານຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.
4) ເພື່ອຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນຳໃຊ້ທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ໃນຂອບເຂດທົ່ວປະເທດແລ້ວນາສະເໜີໃຫ້ລັດຖະບານພິຈາລະນາ ແລະ ສະພາແຫ່ງຊາດຮັບຮອງເອົາ.

## 1.2. ລະດັບຄາດໝາຍ

1). ເຮັດໃຫ້ມີລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເຮັດໃຫ້ມີລະບຽບຫຼັກການ ແລະ ມາດຕະການ ໃນການຕິດຕາມກວດກາການນຳໃຊ້ທີ່ດິນ.
2). ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍ ຊຶ່ງມີຄວາມເປັນເອກະພາບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການ ປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.
3). ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງ ກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທາມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ.
4). ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ-ສັງຄົມ ໃຫ້ດີຂຶ້ນເປັນກ້າວໆ.
5). ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ຂອບເຂດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢ່າງຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບ ກົດໝາຍທີ່ວາງໄວ້.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອີງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສໍາຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນໍາໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນໍາໃຊ້ທີ່ດິນ ແລະຊັບພະຍາກອນ ທໍາມະຊາດ ຢູ່ໃນແຕ່ລະທ້ອງຖິ່ນໄດ້.

## 1.3. ຂັ້ນຕອນໃນການຈັດຕັ້ງປະຕິບັດ

### 1.3.1. ຂັ້ນຕອນເປີດກອງປະຊຸມຂັ້ນບ້ານ

ເພື່ອເຜີຍແຜ່ກ່ຽວກັບຈຸດປະສົງໃນການຈັດສັນທີ່ດິນຂັ້ນບ້ານ-ກຸ່ມບ້ານ ເພື່ອໃຫ້ປະຊາຊົນເຂົ້າໃຈໃນການຈັດຕັ້ງປະຕິບັດວຽກງານຈັດສັນທີ່ດິນ.

### 1.3.2. ຂັ້ນຕອນສໍາຫຼວດ ແລະ ແຕ້ມແຜນທີ່

1. ລົງພື້ນທີ່ເພື່ອກໍານົດຈຸດຂອບເຂດການຄຸ້ມຄອງບ້ານ, ແຕ່ລະບ້ານທີ່ມີຊາຍແດນຕິດຈອດກັນພ້ອມທັງເຮັດບົດບັນທຶກ.
2. ສ້າງແຜນທີ່ຂອບເຂດການຄຸ້ມຄອງບ້ານ ແລະ ສິ່ງຂໍ້ມູນຄໍາເວົ້າ ແລະ ຄ່າພິກັດທາງດ້ານຂອບເຂດແຕ່ ບ້ານໃຫ້ໜ່ວຍງານສັງລວມເພື່ອເຮັດບົດບັນທຶກຂອບເຂດການຄຸ້ມຄອງບ້ານລວມບ້ານທັງໝົດທີ່ມີຂອບເຂດການ ຄຸ້ມຄອງຕິດຈອດກັນ.
3. ລົງສໍາຫຼວດຜັງທາງ ແລະ ປະເພດການນໍາໃຊ້ທີ່ດິນຂອງບ້ານ.
4. ແຕ້ມ ແລະ ສ້າງແຜນທີ່ການນໍາໃຊ້ທີ່ດິນໃນປະຈຸບັນ ແລະ ແຜນທີ່ຈັດສັນການນໍາໃຊ້ທີ່ດິນຂອງບ້ານພ້ອມ ທັງສິ່ງຂໍ້ມູນທາງເນື້ອທີ່ຂອງດິນແຕ່ລະປະເພດໃຫ້ໜ່ວຍງານສັງລວມເພື່ອປະກອບໃນແຜນຈັດສັນ.

### 1.3.3. ຂັ້ນຕອນສັງລວມຂໍ້ມູນ ແລະ ສ້າງແຜນຈັດສັນການນໍາໃຊ້ທີ່ດິນຂອງບ້ານ

1. ເກັບກໍາຂໍ້ມູນເສດຖະກິດ - ສັງຄົມບ້ານ ແລະ ປະເພດການນາໃຊ້ທີ່ດິນຂອງບ້ານ
2. ສ້າງບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານລວມພ້ອມທັງສະເໜີການຕົກລົງ ແລະ ເຊັນເອົາຮັບຮອງເອົາບົດບັນທຶກຂອບເຂດແດນບ້ານ.
3. ສ້າງແຜນຈັດສັນການນໍາໃຊ້ທີ່ດິນຂອງບ້ານ ແລະ ເຮັດບົດບັນທຶກເພື່ອສະເໜີການຮັບຮອງເອົາແຜນຈັດສັນການນໍາໃຊ້ທີ່ດິນຂອງບ້ານ.
4. ສັງລວມຂໍ້ມູນທັງໝົດຂອງບ້ານເປັນຕົ້ນຂໍ້ມູນທາງດ້ານເອກະສານ ແລະ ຂໍ້ມູນການແຕ້ມ ເຂົ້າໃນຖານຂໍ້ມູນຂອງບ້ານ (Master Planning).

## 1.4. ວິທີການຈັດຕັ້ງປະຕິບັດ ລວມທັງການນໍາໃຊ້ Soflware ຫຼື Program ຕ່າງເຂົ້າຊ່ວຍ

1. ຄູ່ມືການວາງແຜນຈັດສັນທີ່ດິນຂັ້ນບ້ານ ແລະ ກຸ່ມບ້ານ
2. ບົດແນະນໍາກ່ຽວກັບບາດກ້າວ ແລະ ຂັ້ນຕອນໃນການສໍາຫຼວດວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນ.
3. ຄູ່ມືການນໍາໃຊ້ GPS 65s
4. ຄູ່ມືການນໍາໃຊ້ Program ArcMap 10.4

5. ຄູ່ມືການນຳໃຊ້ຊັ້ນເລເຢີ ໃນວຽກງານການຈັດສັນວາງແຜນການນຳໃຊ້ທີ່ດິນ (ສະບັບປັບປຸງໃໝ່)

**ບັນດາໂປແກຣມທີ່ສຳຄັນ**

1. ໂປຣແກມ ArcMap 10.XX
2. ໂປຣແກມ MapSource
3. ໂປຣແກມ Google Earth
4. ໂປຣແກມ Microsoft Word & Excel
5. ໂປຣແກມ DNR Garmin.

ຕາຕະລາງ 1: ໄລຍະເວລາໃນການຈັດຕັ້ງປະຕິບັດແຕ່ເລີ່ມຕົ້ນຈົນສຳເລັດ

| ລຳດັບ | ໜ້າວຽກ | ພາກສ່ວນ |
|---|---|---|
| 1 | • ເປີດກອງປະຊຸມ ສະເໜີຈຸດປະສົງຕໍ່ ອຳນາດການປົກຄອງບ້ານ<br>• ສະເໜີ ອະທິບາຍວິທີການ, ບາດກ້າວ, ຂັ້ນຕອນ ແລະ ເຜີຍແຜ່ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບວຽກງານ ຈັດສັນທີ່ດິນຂັ້ນບ້ານເພື່ອໃຫ້ອົງການປົກຄອງບ້ານ ໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 2 | • ເກັບກຳຂໍ້ມູນຕາມແບບພິມສຳພາດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານ<br>• ປ້ອນຂໍ້ມູນຈາກແບບພິມເຂົ້າຖານຂໍ້ມູນ ໃຫ້ນຳເອົາຂໍ້ມູນທີ່ເກັບກຳໄດ້ຈາກແຫຼ່ງຂໍ້ມູນຕ່າງໆ ເຂົ້າຖານຂໍ້ມູນຄອມພິວເຕີ້<br>• ແຈ້ງເຊີນອົງການປົກຄອງບ້ານອ້ອມຂ້າງ ທີ່ມີເຂດແດນຕິດກັບບ້ານທີ່ກຳລັງຈັດຕັ້ງປະຕິບັດ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 3 | • ເປີດກອງປະຊຸມ ເພື່ອກຳນົດເຂດຄຸ້ມຄອງບ້ານ, ບັນທຶກເປັນຂໍ້ຄວາມລະອຽດໃນແຕ່ລະທິດ, ໂດຍຕົກລົງເຫັນດີລະຫວ່າງບ້ານຕໍ່ບ້ານ ພ້ອມທັງເຊັນບົດບັນທຶກຮ່ວມກັນ<br>• ລົງກວດກາພື້ນທີ່ເຂດຄຸ້ມຄອງຂອງບ້ານຕໍ່ບ້ານ ຕາມບົດບັນທຶກ ໂດຍນຳໃຊ້ GPS ເກັບກຳຈຸດຄ່າພິກັດ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 4 | • ກຳນົດ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ເຂົ້າໃນຖານຂໍ້ມູນຄອມພິວເຕີ້, ໃຫ້ຖືກຕ້ອງຕາມເຕັກນິກວິຊາການທີ່ໄດ້ກຳນົດໄວ້;<br>• ຮັບຮອງ ແລະ ຢັ້ງຢືນເຂດຄຸ້ມຄອງບ້ານ, ໂດຍການນຳຂໍ້ມູນທີ່ໄດ້ມາສ້າງບົດບັນທຶກ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ລົງລາຍເຊັນຢັ້ງຢືນໃນແຕ່ລະບ້ານ ທີມງານວິຊາການເຕັກນິກ, ຫ້ອງການ ຊສ ເມືອງ, ຮັບຮູ້ໂດຍທ່ານເຈົ້າເມືອງ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 5 | • ລົງສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນປະຈຸບັນຂອງບ້ານ ນຳໃຊ້ເຄື່ອງມື GPS ແລະ ແບບພິມບັນທຶກພາກສະໜາມຂອງທີມງານວິຊາການ | • ທີມງານວິຊາການ<br>• ອຳນາດການ |

| | | |
|---|---|---|
| | | ປົກຄອງບ້ານ |
| 6 | • ສັງລວມຂໍ້ມູນ ແລະ ກໍານົດປະເພດທີ່ດິນປະຈຸບັນຂອງບ້ານ ປ້ອນຂໍ້ມູນທີ່ໄດ້ຈາກພາກສະໜາມ ເຂົ້າໃນຄອມພິວເຕີ້ແຕ້ມແຜນທີ່ການນໍາໃຊ້ທີ່ດິນປະຈຸບັນຂອງບ້ານ<br>• ກວດກາຄວາມລະອຽດທາງດ້ານເຕັກນິກຂອງແຜນທີ່,ຄິດໄລ່ເນື້ອທີ່ປະເພດທີ່ດິນ, ສ້າງແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ | • ທີມງານວິຊາການ |
| 7 | • ເປີດກອງປະຊຸມປຶກສາຫາລື ເພື່ອສ້າງແຜນຈັດສັນທີ່ດິນ ລະຫວ່າງທີມງານວິຊາການກັບອົງການຈັດຕັ້ງຂັ້ນບ້ານເພື່ອກໍານົດເຂດ ແລະ ປະເພດທີ່ດິນທີ່ຈະໄດ້ຈັດສັນ ນໍາໃຊ້ທີ່ດິນໃນອະນາຄົດຂອງບ້ານ ພ້ອມທັງເຮັດບົດບັນທຶກ ແລະ ສ້າງແຜນທີ່ຈັດສັນທີ່ດິນຂອງບ້ານ<br>• ເປີດກອງປະຊຸມ ຜ່ານແຜນຈັດສັນທີ່ດິນຂອງບ້ານ ເພື່ອປະກອບຄໍາເຫັນໃສ່ຮ່າງແຜນຈັດສັນທີ່ດິນໃນເບື້ອງຕົ້ນພ້ອມທັງສ້າງບົດບັນທຶກຄວາມເປັນເອກະພາບ | • ທີມງານວິຊາການ<br>• ອໍານາດການປົກຄອງບ້ານ |

ຕາຕະລາງ 2: ເຄື່ອງມື ແລະ ອຸປະກອນຮັບໃຊ້ວຽກງານ

| ລ/ດ | ບັນດາເຄື່ອງມື | ຈໍານວນ |
|---|---|---|
| 1 | ເຄື່ອງ Computer Notebook | 2 ໜ່ວຍ |
| 2 | ເຄື່ອງ Printer | 1 ຊຸດ |
| 3 | ກ້ອງຖ່າຍຮູບ | 1 ໜ່ວຍ |
| 4 | GPS Map 60,62,65 | 2 ໜ່ວຍ |
| 5 | LCD + ຈໍ | 2 ໜ່ວຍ |
| 6 | ລົດໃຫ່ຍ | 1 ຄັນ |

# II. ສະພາບລວມຂອງບ້ານ

## 2.1. ປະຫວັດຄວາມເປັນມາຂອງບ້ານ

ບ້ານແກ້ງໂດນ ຕາມການບອກເລົ່າຈາກປາກຕໍ່ປາກສືບມາຂອງຫຼາຍຮຸ່ນຄົນວ່າ: ກ່ອນຈະການມາເປັນບ້ານແກ້ງໂດນ ແມ່ນເລີ່ມຈາກພຽງສອງຄອບຄົວທີ່ໄດ້ມາຕັ້ງຫຼັກປັກຖານສ້າງບ້ານແປງເມືອງຂອງຕົນຂຶ້ນທີ່ຕັ້ງຢູ່ແຄມຝັ່ງເຊບັ້ງຫຽງຕອນໃຕ້ໃນຊ່ວງປີ ຄສ 1550, ເຊິ່ງສອງຄອບຄົວນັ້ນຊື່ວ່າ: ພໍ່ເຖົ້າພົມມະເທບ ແລະ ແມ່ເຖົ້າສີກາ ແລະ ຄອບຄົວພໍ່ເຖົ້າຈັນຊົມພູ ແລະ ແມ່ເຖົ້າຈໍາປາ ເຊິ່ງສອງຄອບຄົວດັ່ງກ່າວແມ່ນເປັນອ້າຍ, ເອື້ອຍນ້ອງກັນ ເຊິ່ງໄດ້ຍ້າຍມາແຕ່ບ້ານກຸດຫີນ, ເມືອງອາດສະພອນ. ຕົກມາຮອດປີ 1572 ໄດ້ເລີ່ມມີການຂະຫຍາຍເຮືອນອອກສູ່ບໍລິເວນກວ້າງ. ມາຮອດປີ ຄສ 1775 ຊີວິດການເປັນຢູ່ກໍ່ໄດ້ຮັບການພັດທະນາຂຶ້ນຕາມລໍາດັບເຊັ່ນ: ມີວັດວາອາຮາມ, ມີການຖາງເນື້ອທີ່ການຜະລິດຈາກການຖາງໄຮ່ແບບໝູນວຽນ ແລະ ໄດ້ຫັນມາເປັນເນື້ອທີ່ນາປີຕາມເງື່ອນໄຂຂອງແຕ່ລະຄອບຄົວ. ຕົກມາຮອດປີ ຄສ 1780 ເປັນຊ່ວງຂອງການຮຸກຮານຂອງສັກດີນາສະຫຍາມ ເຊິ່ງເຮັດໃຫ້ຊາວບ້ານແກ້ງໂດນໄດ້ແຕກເປັນກຸ່ມໜີໄປຢູ່ເຂດຕ່າງໆ ແລະ ສ່ວນໜຶ່ງໄດ້ຖືກເກນໄປເປັນຂ້າທາດຢູ່ສະຫຍາມ. ຮອດປີ 1890

ກ່ອນຈັກກະພັດຝຣັ່ງເຂົ້າມາຢຶດຄອງເຫັນວ່າການຜະລິດຂອງຊາວບ້ານແກ້ງໂດນແມ່ນມີການບຸກເບີກພື້ນທີ່ເປັນຫຼັກແຫຼ່ງ ແລະ ຜ່ານມາຫຼາຍປີແລ້ວໄດ້ສ້າງເປັນຕາແສງແກ້ງໂດນໃນປີ 1903 ລວມມີ 12 ບ້ານ. ຈາກນັ້ນພາຍຫຼັງປົດປ່ອຍ ປີ 1990 ທົ່ວເຂດແກ້ງໂດນກໍ່ກັບຄືນສູ່ສະພາບປົກກະຕິ. ປະຊາຊົນແຕ່ລະບ້ານກໍ່ທຳມາຫາກິນຢ່າງສະຫງົບສຸກຈົນມາຮອດປະຈຸບັນ. ດັ່ງສະແດງໃນຮູບພາບລຸ່ມນີ້:



ຖ່າຍພາບໂດຍ: ທີມງານໂຄງການ IWRM-EbA

ຮູບທີ 1: ສະພາບພູມສັນຖານ ບ້ານແກ້ງໂດນ, ເມືອງສອງຄອນ ແຂວງສະຫວັນນະເຂດ

## 2.2. ດ້ານການປົກຄອງ

ບ້ານແກ້ງໂດນ ຕັ້ງຫ່າງຈາກເທດສະບານເມືອງສອງຄອນ ໄປທາງທາງໃຈກາງຂອງເມືອງ ປະມານ 13 ກິໂລແມັດ ມີໄລຍະທາງແຕ່ປະມານ 13 ກິໂລແມັດ, ມີເນື້ອທີ່ທັງໝົດ ມີ 1,481.6867 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງສອງຄອນ ດັ່ງຂໍ້ມູນລະອຽດລຸ່ມນີ້: ທິດເໜືອ: ຕິດກັບ ບ້ານຫົວຫາດ ແລະ ບ້ານໜອງເດີ່ນ, ທິດຕາເວັນອອກຕິດກັບບ້ານດອນຂຽວ, ທິດໃຕ້ຕິດກັບ ບ້ານໂນນຄຳສູງ ແລະ ທິດຕາເວັນຕົກຕິດກັບບ້ານໂນນສະຫວ່າງ.

## 2.3. ເຂດຄຸ້ມຄອງຂອງບ້ານ

ບ້ານແກ້ງໂດນ ມີຂອບເຂດຄຸ້ມຄອງຕິດກັບບ້ານຕ່າງໆຄື:

❖ ***ທິດເໜືອ: ບ້ານແກ້ງໂດນ ຕິດກັບ 1 ບ້ານຄື: ບ້ານຫົວຫາດ*** ຊຶ່ງເລີ່ມແຕ່ຫ້ວຍຄຳມູດ (ເຊບັ້ງຫຽງ) ເລາະຂຶ້ນໄປຈົນຮອດປາກຫ້ວຍເປາະ, ແລ້ວຂຶ້ນໄປໃສ່ວັງເດືອນຫ້າ, ຈົນໄປຮອດໜອງແສງ, ຈາກນັ້ນຕັດໄປໃສ່ຂີ້ວແປ້ນ ເປັນເຂດແດນລະຫວ່າງບ້ານແກ້ງໂດນ ແລະ ບ້ານຫົວຫາດ ລວມໄລຍະທັງໝົດ 4930 ແມັດ. ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 3: ຄ່າພິກັດບ້ານແກ້ງໂດນ ກັບ ຫີອຫາດ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532662 | 1790838 | ຫ້ວຍຄຳມູດ (ເຊບັ້ງຫຽງ) | 0 |
| 2 | 533911 | 1791760 | ປາກຫ້ວຍເປາະ | 1580 |
| 3 | 534693 | 1791939 | ວັງເດືອນຫ້າ | 832 |
| 4 | 535656 | 1792655 | ໜອງແສງ | 1199 |
| 5 | 536920 | 1792217 | ຂີວແປ້ນ | 1319 |
| **ລວມໄລຍະ** | | | | 4930 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

❖ ***ທິດຕາເວັນອອກ: ບ້ານແກ້ງໂດນ ຕິດກັບ ບ້ານ ດອນຂຽວ*** ເລີ່ມແຕ່ຂີວແປ້ນ ເປັນຈຸດຕັດກັນຂອງ 3 ບ້ານ ຄື: ບ້ານດອນຂຽວ, ບ້ານໜອງເດີນ ແລະບ້ານແກ້ງໂດນ, ລັດລົງມາໃສ່ ປາກຮ່ອງພໍ່ໃຫ່ຍແປະ ຕັດລົງໃສ່ປ້າຍວັງສະຫງວນ ແລະ ລຽບຕາມເຊບັ້ງຫຽງ ມາໃສ່ປ້າຍວັງສະຫງວນ ແມ່ນສຸດທີ່ມີຊາຍແດນຕິດກັບບ້ານຫີອຫາດ ມີໄລຍະທັງໝົດ 3115 ແມັດ. ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 4: ຄ່າພິກັດບ້ານແກ້ງໂດນ ກັບ ບ້ານດອນຂຽວ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48 ) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 536920 | 1792217 | ຂີວແປ້ນ | 0 |
| 2 | 536647 | 1790129 | ປາກຮ່ອງພໍ່ໃຫ່ຍແປະ | 2102 |
| 3 | 536640 | 1789474 | ປ້າຍວັງສະຫງວນ1 | 694 |
| 4 | 536723 | 1789159 | ປ້າຍວັງສະຫງວນ2 | 359 |
| **ລວມໄລຍະ** | | | | 3115 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

❖ ***ທິດໃຕ້: ບ້ານ ແກ້ງໂດນ ຕິດກັບ ບ້ານ ໂນນຄຳສູງ***: ເລີ່ມແຕ່ປ້າຍຫວັງສະຫງວນ2 ຕັດຂ້າມຟາກໄປໃສ່ຫ້ວຍຍາງ ແລະ ຫ້ວຍຢາງເອົາຫ້ວຍຍາງເປັນແດນ, ຈົນໄປຮອດປາກຫ້ວຍຄຳມ່ວງໄຂ່ ມີໄລຍະ 4323 ແມັດ.ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 5: ຄ່າພິກັດ ບ້ານແກ້ງໂດນ ກັບບ້ານ ໂນນຄຳສູງ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 536723 | 1789159 | ປ້າຍວັງສະຫງວນ2 | 0 |
| 2 | 536634 | 1788988 | ປາກຫ້ວຍຍາງ | 193 |
| 3 | 536099 | 1788719 | ຫ້ວຍຍາງ | 597 |
| 4 | 534368 | 1787728 | ປາກຫ້ວຍຄຳມ່ວງໄຂ່ | 3551 |
| **ລວມໄລຍະ** | | | | 4323 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

❖ ***ທິດຕາເວັນຕົກ: ບ້ານ ແກ້ງໂດນ ຕິດກັບ ບ້ານ ໂນນສະຫວ່າງແມ່ນ***ເລີ່ມແຕ່ປາກຫ້ວຍຄຳມ່ວງໄຂ່ ລຽບຕາມລຳຫ້ວຍຢາງ ມາຮອດສົ້ນນາພໍ່ເຖົ້າບຸນກອງ, ຕັດຂຶ້ນໃສ່ເຮືອນພໍ່ໃຫ່ຍໂຈມ, ຕັດຂຶ້ນມາໃສ່ປ່າມະເຫສັກ, ລົງຕາມຮ່ອງຖ້ຳພະ ຈົນຮອດປາກຮ່ອງຖ້ຳພະ, ແລ້ວເລາະເຊບັ້ງຫຽງ ຈົນຮອດຫ້ວຍຄຳມູດ ສຸດຊາຍແດນບ້ານແກ້ງໂດນກັບບ້ານໂນນສະຫວ່າງ ມີໄລຍະທັງໝົດ 5298 ແມັດ. ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 6: ຄ່າພິກັດ ບ້ານແກ້ງໂດນ ກັບບ້ານ ໂນນສະຫວ່າງ ກຸ່ມລະບົບ WGS 84

| **ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48 )** | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 534368 | 1787728 | ປາກຫ້ວຍຄຳມ່ວງໄຂ່ | 0 |
| 2 | 533534 | 1788201 | ນາພໍ່ເຖົ້າບຸນກອງ | 1902 |
| 3 | 533060 | 1789060 | ເຮືອນພໍ່ໃຫ່ຍໂຈມ | 982 |
| 4 | 533123 | 1789529 | ປ່າມະເຫສັກ | 255 |
| 5 | 533137 | 1789686 | ປາກຮ່ອງຖ້ຳພະ | 646 |
| 6 | 532662 | 1790838 | ຫ້ວຍຄຳມູດ(ເຊບັ້ງຫຽງ) | 1513 |
| **ລວມໄລຍະ** | | | | 5298 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025




(ແຫຼ່ງຂໍ້ມູນ: ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປີ 2025)

ຮູບທີ 2: ແຜນທີ່ຂອບເຂດຄຸ້ມຄອງ ບ້ານແກ້ງໂດນ, ເມືອງ ສອງຄອນ, ແຂວງສະຫວັນນະເຂດ

### 2.4. ຂໍ້ມູນດ້ານເສດຖະກິດ-ສັງຄົມ

#### 2.4.1. ການປະກອບອາຊີບ

ປະຊາຊົນສ່ວນໃຫຍ່ຂອງບ້ານແກ້ງໂດນ ແມ່ນຍຶດຖືເອົາການເຮັດນາ, ປູກຢາງບົງ, ປູກຕົ້ນແຄມເຮັດສວນ. ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 7: ປູກພືດ ແລະ ສໍາຮອງລ້ຽງມາແມ່ນລ້ຽງສັດ ແລະ ອື່ນໆ

| ລ/ດ | ການປະກອບອາຊີບ | ຈໍານວນຄົນ | ໝາຍເຫດ |
|---|---|---|---|
| 01 | ເຮັດນາ, ເຮັດສວນ | 540 | |
| 03 | ກໍາມະກອນ | 30 | ບໍ່ມີ |
| 04 | ພະນັກງານລັດ | 7 | |
| 05 | ນັກຮຽນ ນັກສຶກສາ | 79 | |
| 06 | ອາຊີບອື່ນໆ | **0** | ບໍ່ມີ |
| **ລວມທັງໝົດ:** | | | |

#### 2.4.2. ແຫລ່ງລາຍຮັບຂອງປະຊາຊົນ

ແຫຼ່ງລາຍຮັບຂອງປະຊາຊົນພາຍໃນບ້ານ ແມ່ນມາຈາກ 2 ແຫຼ່ງຕົ້ນຕໍຄື: ແມ່ນອາຊີບເຮັດນາ, ຄ້າຂາຍ ແລະ ອື່ນໆ.

#### 2.4.3. ດ້ານການນໍາໃຊ້ທີ່ດິນ

ສະພາບການນໍາໃຊ້ທີ່ດິນໃນປະຈຸບັນຂອງບ້ານ, ອີງການການວິເຄາະຂໍ້ມູນຂອງບ້ານເຫັນໄດ້ ວ່າປະຊາຊົນພາຍໃນບ້ານ ແມ່ນຖືເອົາການຜະລິດກະສິກໍາ, ເປັນອາຊີບຕົ້ນຕໍ ດັ່ງນັ້ນເປີເຊັນ ການນໍາໃຊ້ທີ່ດິນກວມເອົາເນື້ອທີ່ 228.52 ເຮັກຕ້າ ເທົ່າກັບ 15.42 % ເປີເຊັນ ເນື້ອທີ່ທັງໝົດພາຍໃນບ້ານ 2240,2246 ເຮັກຕາ. ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 8 : ເນື້ອທີ່ການນໍາໃຊ້ທີ່ດິນປະຈຸບັນ, ບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

| ລໍາດັບ | ປະເພດທີ່ດິນ | ລະຫັດດິນ | ເນື້ອທີ່ (ຮຕ) | ເປີເຊັນ % |
|---|---|---|---|---|
| **I** | **ທີ່ດິນກະສິກໍາ** | **A** | **228.52** | **15.42** |
| 1 | ດິນນາ | A_1 | 208.3425 | 14.06 |
| 2 | ທີ່ດິນປູກພືດກະສິກໍາ ທົ່ວໄປ | A_2 | 20.1794 | 1.36 |
| **II** | **ທີ່ດິນປຸກສ້າງ** | **B** | **16.7007** | **1.13** |
| 1 | ດິນປຸກສ້າງບຸກຄົນ | B_1 | 15.0945 | 1.02 |
| 2 | ທີ່ດິນປຸກສ້າງລັດ | B_2 | 1.6062 | 0.108 |
| **III** | **ທີ່ດິນວັດທະນະທໍາ** | **C** | **22.58** | **1.52** |
| 1 | ທີ່ດິນສິ່ງປຸກສ້າງທາງ, ວັດທະນະທໍາ | C_1 | 15.2020 | **1.03** |
| 2 | ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ | C_2 | 7.3796 | **0.50** |
| **V** | **ທີ່ດິນປ່າໄມ້** | **F** | **1,054.68** | **71.18** |

| | | | | |
|---|---|---|---|---|
| 1 | ທີ່ດິນປ່າຊົມໃຊ້ທົ່ວໄປ | F_1 | 398.6430 | 26.90 |
| 2 | ທີ່ດິນປ່າຜະລິດແຂວງ | F_12 | 656.0377 | 44.28 |
| **VI** | **ທີ່ດິນຄົມມະນາຄົມ** | **R** | **12.49** | **0.84** |
| 1 | ທີ່ດິນທາງດິນແດງ ແລະ ທາງປູຢາງ | R_2 | 12.4859 | 0.84 |
| **VII** | **ທີ່ດິນບໍລິເວນນ້ຳ** | **W** | **146.716** | **9.90** |
| 1 | ທີ່ດິນແມ່ນ້ຳ, ຫ້ວຍນ້ຳ | W_1 | 126.3302 | 8.53 |
| 2 | ທີ່ດິນໜອງນ້ຳທຳມະຊາດ | W_2 | 20.3857 | 1.38 |
| **ລວມທັງໝົດ** | | | **1,481.6867** | **100.00** |

ແຫຼ່ງຂໍ້ມູນ: ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ປີ 2025

ຮູບທີ 3: ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ຂອງ ບ້ານ ແກ້ງໂດນ, ເມືອງສອງຄອນ, ແຂວງ ສະຫວັນນະເຂດ

# III. ການຈັດສັນການນຳໃຊ້ທີ່ດິນ

## 3.1 ການກຳນົດເຂດການນຳໃຊ້ທີ່ດິນຂອງບ້ານ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ແມ່ນໄດ້ຈັດແບ່ງອອກເປັນ 8 ປະເພດດັ່ງນີ້:

### 3.1.1. ການກຳນົດເຂດທີ່ດິນກະສິກຳ

ປະຊາຊົນສ່ວນຢູ່ພາຍໃນບ້ານແກ້ງໂດນ ສ່ວນໃຫ່ຍແມ່ນມີອາຊີບ ກະສິກຳເຮັດນາເປັນຕົ້ນ, ປູກຝັງ, ແລະ ເຮັດສວນແບບປະສົມປະສານ ແລະ ການລ້ຽງສັດ ເຂດເຮັດກະສິກຳສ່ວນຫຼາຍແມ່ນຢູ່ກະຈາຍພາຍໃນບ້ານລຽບຕາມສາຍຫ້ວຍ ແລະ ແຄມສາຍເຊບັ້ງຫຽງ.

### 3.1.2. ການກຳນົດເຂດດິນປຸກສ້າງ

ເຂດທີ່ດິນປຸກສ້າງ ບ້ານແກ້ງໂດນ ປະກອບມີ: ດິນຫ້ອງການບ້ານ, ດິນໂຮງຮຽນ, ແລະ ດິນປຸກສ້າງທີ່ຢູ່ອາໄສບຸກຄົນ, ສ່ວນຫຼາຍແມ່ນຕັ້ງຢູ່ໃຈກາງບ້ານ ມີເສັ້ນທາງພາຍໃນບ້ານ ເສັ້ນທາງເຂົ້າບ້ານ 1 ເສັ້ນຈົນໄປຮອດເຊບັ້ງຫຽງ, ໄດ້ກຳນົດດິນແຮ່ຂະຫຍາຍປຸກສ້າງໄວ້ເພື່ອອານາຄົດ 1 ແຫ່ງ ຢູ່ໃກ້ກຳບ່ອນສະຫງວນເພື່ອບ່ອນສຳນັກສົງ ແລະ ໄດ້ກຳນົດ ບ່ອນລີ້ໄພເມື່ອງເວລາມີນ້ຳຖ້ວມຕ່າງໆ 1 ແຫ່ງຢູ່ໃຈກາງບ້ານ.

### 3.1.3. ການກຳນົດທີ່ດິນວັດທະນາທຳ

ປະຊາຊົນພາຍໃນ ບ້ານແກ້ງໂດນ ແມ່ນໄດ້ນັບຖືສາສະໜາພຸດ, ສະນັ້ນ ດິນວັດທະນາທຳ ບ້ານແກ້ງໂດນຈຶ່ງມີຢູ່ 3 ແຫ່ງ ຄື: ປ່າມະເຫສັກ 1 ແຫ່ງ, ປ່າຊ້າ 1ແຫ່ງ, ວັດ 1ແຫ່ງ ແລະ ບ່ອນສະຫງວນໄວ້ເຮັດສຳນັກສົງ 1 ແຫ່ງ ຄື: ຈຸດທີ 1 ປ່າມະເຫສັກແມ່ນຕັ້ງຢູ່ດ້ານທິດຕາເວັນຕົກຂອງບ້ານມີເນື້ອທີ່ບໍ່ຫຼາຍ, ຈຸດທີ 2 ປ່າຊ້າແມ່ນຕັ້ງຕັ້ງທາງເຂົ້າບ້ານຢູ່ທາງທິດຕາເວັນຕົກຊ່ຽງໃຕ້ຂອງບ້ານ, ຈຸດທີ 3 ແມ່ນ ດິນວັດ ແມ່ນຕັ້ງຢູ່ໃຈກາງຂອງບ້ານ, ຈຸດທີ 4 ແມ່ນບ່ອນສະຫງວນໄວ້ເຮັດສຳນັກສົງ ແມ່ນຕັ້ງຢູ່ໃຈກາງຂອງບ້ານໃກ້ກັບໜອງປາຝາ.

### 3.1.4. ການກຳນົດທີ່ດິນ ປກສ-ປກຊ

ການກຳນົດທີ່ດິນ ປກສ-ປກຊ ຢູ່ພາຍໃນບ້ານແກ້ງໂດນ ແມ່ນບໍ່ມີຫ້ອງການ ຕຳຫຼວດ-ທະຫານ ຈຶ່ງບໍ່ໄດ້ກຳນົດ.

### 3.1.5. ການກຳນົດທີ່ດິນປ່າໄມ້

ທີ່ດິນປ່າໄມ້ຂອງບ້ານແກ້ງໂດນ, ສ່ວນໃຫຍ່ແມ່ນເປັນປ່າເລົ່າທີ່ປະຊາຊົນຈັບຈອງນຳໃຊ້ລ້ຽງສັດ ແລະ ທຳການຜະລິດ ແລະ ບ້ານແກ້ງໂດນ ຢູ່ຟາກເຊແມ່ນໄດ້ຖືກ ເຂດປ່າຜະລິດຂອງແຂວງ ດັ່ງນັ້ນທາງອຳນາດການປົກຄອງບ້ານໄດ້ມີການກຳນົດ ປ່າສະຫງວນບ້ານ ຢູ່ 2 ແຫ່ງ ຢູ່ຟາກເຊເບື້ອງນັ້ນ ເພື່ອຮັກສາລະບົບນິດເວດຂອງບ້ານໄວ້.

### 3.1.6. ການກຳນົດເຂດທີ່ອຸດສາຫະກຳ

ການກຳນົດທີ່ດິນອຸດສາຫະກຳ ຢູ່ພາຍໃນບ້ານແກ້ງໂດນ ແມ່ນບໍ່ມີໂຮງຈັກໂຮງງານ ຈຶ່ງບໍ່ໄດ້ກຳນົດ.

### 3.1.7. ການກຳນົດນິດທີ່ດິນຄົມມະນາຄົມ

ແມ່ນໄດ້ກຳນົດເອົາ 1 ເສັ້ນຄື: ເສັ້ນທີ 1 ແມ່ນ ຄືທາງເຂົ້າບ້ານຕິດທາງ 13ໃຕ້ ຈົນມາຮອດວັດຂອງບ້ານ ແມ່ນໄດ້ກຳນົດເອົາ ເບື້ອງລະ 6 ແມັດ ຈາກໃຈກາງທາງ, ສ່ວນທາງນ້ອຍຕ່າງໆພາຍໃນບ້ານແມ່ນຫຍັງບໍທັນໄດ້ກຳນົດ.

### 3.1.8. ການກຳນົດນິດທີ່ດິນບໍລິເວນນ້ຳ

ແມ່ນໄດ້ກຳນົດເອົາ ສາຍເຊບັ້ງຫຽງ, ຫ້ວຍ, ໜອງທຳມະຊາດ ພາຍໃນບ້ານມີ ເຊບັ້ງຫຽງ 01 ແຫ່ງ, ໜອງທຳມະຊາດ ຫຼາຍແຫ່ງ, ແລະ ມີ 07 ຫ້ວຍ ຄື: ຫ້ວຍພໍ່ໃຫ່ຍແປະ, ຫ້ວຍຢາງ, ຫ້ວຍເກາະ, ຫ້ວຍກະເຫຼືອງ, ຫ້ວຍຢາງກຸດ, ຫ້ວຍບ້ານ, ຫ້ວຍທ່າປ່ານ.

ສຳລັບ ເຊບັ້ງຫງຽງ ແມ່ນເຊີ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 25 ແມັດ ເພື່ອປ້ອງກັນການເຊາະເຈື່ອນຂອງດິນໃນອານາຄົດ ແລະ ໄດ້ກຳນົດວັງສະຫງວນຂອງບ້ານ ຢູ່ທາງທິດໃຕ້ຂອງບ້ານ. ດັ່ງສະແດງໃນຕາຕະລາງລຸ່ມນີ້:

ຕາຕະລາງ 9: ເນື້ອທີ່ການຈັດສັນທີ່ດິນແຕ່ລະປະເພດ, ບ້ານ ແກ້ງໂດນ, ເມືອງສອງຄອນ ແຂວງສະຫວັນນະເຂດ

| ລຳດັບ | ປະເພດທີ່ດິນ | ລະຫັດດິນ | ເນື້ອທີ່ (ຮຕ) | ເປີເຊັນ % |
|---|---|---|---|---|
| **I** | **ດິນກະສິກຳ** | **AZ** | **228.03** | **15.39** |
| 1 | ທີ່ດິນນາ | A_1 | 208.3366 | 14.06 |
| 2 | ທີ່ດິນປູກພືດກະສິກຳ ທົ່ວໄປ | A_2 | 19.6946 | 1.33 |
| **II** | **ດິນປຸກສ້າງ** | **BZ** | **60.6254** | **4.09** |
| 1 | ດິນປຸກສ້າງບຸກຄົນ | BZ_1 | 14.6362 | 0.99 |
| 2 | ທີ່ດິນປຸກສ້າງລັດ ແລະ ດິນລວມບ້ານ | BZ_2 | 31.3989 | 2.119 |
| 3 | ທີ່ດິນແຮຂະຫຍາຍ ປຸກສ້າງ | BZ_3 | 14.5903 | 0.985 |
| **III** | **ດິນວັດທະນະທຳ** | **CZ** | **22.31** | **1.51** |
| 1 | ທີ່ດິນສິ່ງປຸກສ້າງທາງວັດທະນະທຳ | CZ_1 | 15.1905 | 1.03 |
| 2 | ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ | CZ_2 | 7.1227 | 0.48 |
| **IV** | **ດິນປ່າໄມ້** | **FZ** | **981.58** | **66.25** |
| 1 | ທີ່ດິນປ່າຊົມໃຊ້ທົ່ວໄປ | FZ_1 | 341.5058 | 23.05 |
| 2 | ທີ່ດິນປ່າຜະລິດແຂວງ | FZ_12 | 582.6653 | 39.32 |
| 3 | ທີ່ດິນປ່າສະຫງວນຂອງບ້ານ | FZ_24 | 57.4060 | 3.87 |
| **V** | **ດິນໂຍທາທິການ** | **RZ** | **12.75** | **0.86** |
| 1 | ທີ່ດິນທາງດິນແດງ ແລະ ທາງປູຢາງ | RZ_2 | 12.4378 | 0.84 |
| 2 | ທີ່ດິນແຮຂະຫຍາຍເສັ້ນທາງ | RZ_3 | 0.3113 | 0.02 |
| **VI** | **ດິນບໍລິເວນນ້ຳ** | **WZ** | **176.391** | **11.90** |
| 1 | ທີ່ດິນແມ່ນ້ຳ, ຫ້ວຍນ້ຳ | WZ_1 | 117.5822 | 7.94 |
| 2 | ທີ່ດິນໜອງນ້ຳທຳມະຊາດ | WZ_2 | 20.3464 | 1.37 |
| 3 | ທີ່ດິນສະຫງວນແຄມນ້ຳ | WZ_4 | 38.4622 | 2.60 |
| **ລວມທັງໝົດ** | | | **1,481.6867** | **100.00** |

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ປີ 2025

ຮູບທີ 4: ແຜນທີ່ ການຈັດສັນທີ່ດິນຂອງ ບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ

ຕາຕະລາງ 10: ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ດິນຂອງແຜນຈັດສັນທີ່ດິນ

| ຊື່ດິນ | ເນື້ອທີ ປັດຈຸບັນ | ເນື້ອທີ່ ຈັດສັນ | ເນື້ອທີ່ ຫຼຸດ-ເພີ່ມ | ເປີເຊັນ ດິນປະຈຸບັນ | ເປີເຊັນ ດິນຈັດສັນ | ເປີເຊັນ ຫຼຸດ-ເພີ່ມ |
|---|---|---|---|---|---|---|
| ດິນກະສິກຳ | 228.52 | 228.03 | 0.49 | 15.42 | 15.39 | 0.03 |
| ດິນປຸກສ້າງ | 16.70 | 60.63 | -43.92 | 1.13 | 4.09 | -2.96 |
| ດິນວັດທະນະທຳ | 22.58 | 22.31 | 0.27 | 1.52 | 1.51 | 0.02 |
| ດິນປກສ-ປກຊ | 0.00 | 0.00 | 0.00 | 0.00 | 0.00 | 0.00 |
| ດິນປ່າໄມ້ | 1054.68 | 981.58 | 73.10 | 71.18 | 66.25 | 4.93 |
| ດິນອຸດສາຫະກຳ | 0.00 | 0.00 | 0.00 | 0.00 | 0.00 | 0.00 |
| ດິນຄົມມະນາຄົມ | 12.49 | 12.75 | -0.26 | 0.84 | 0.86 | -0.02 |
| ດິນບໍລິເວນນໍ້າ | 146.72 | 176.39 | -29.67 | 9.90 | 11.90 | -2.00 |

ແຫຼ່ງຂໍ້ມູນ: ຫອ້ງການກະສິກຳ ແລະ ສິ່ງແວດລ້ອມ ປີ 2025




| | ດິນກະສິກຳ | ດິນປູກສ້າງ | ດິນວັດທະນະທຳ | ປກສ-ປກຊ | ດິນປ່າໄມ້ | ດິນອຸດສາຫະກຳ | ດິນໂຍທາທິການ | ດິນບໍລິເວນນ້ຳ |
|---|---|---|---|---|---|---|---|---|
| ດິນປະຈຸບັນ | 228.522 | 16.701 | 22.582 | 0.000 | 1054.681 | 0.000 | 12.486 | 146.716 |
| ດິນຈັດສັນ | 228.031 | 60.625 | 22.313 | 0.000 | 981.577 | 0.000 | 12.749 | 176.391 |

ຮູບທີ 5 : ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງ ການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ




ຮູບທີ 6: ສະແດງເຖິງຄວາມແຕກຕ່າງການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ

# IV. ທິດທາງການວາງແຜນພັດທະນາທີ່ດິນ

## 4.1. ທ່າແຮງໃນການພັດທະນາຂອງບ້ານ

ບ້ານ ແກ້ງໂດນ ແມ່ນ ເປັນບ້ານໜຶ່ງທີ່ມີຄວາມອຸດົມສົມບູນດ້ານຊັບພະຍາກອນທຳມະຊາດ, ພູຜາປ່າໄມ້, ແມ່ນ້ຳລຳເຊ, ເຊິ່ງເປັນທ່າແຮງໃຫ້ແກ່ການສົ່ງເສີມການລົງທຶນດ້ານກະສິກຳຕິດພັນກັບການທ່ອງທ່ຽວທາງທຳມະຊາດ, ຮີດຄອງປະເພນີ ແລະ ວັດທະນະທຳ ທີ່ເປັນເອກະລັກຂອງປະຊາຊົນບັນດາເຜົ່າ ແລະ ມີມູນເຊື້ອໃນການຜະລິດ ປູກຝັງ-ລ້ຽງສັດ ເຊິ່ງມີເນື້ອທີ່ທຳການຜະລິດ 211.41 ເຮັກຕາ ກວມເອົາ 10.57 ເປີເຊັນຂອງເນື້ອທີ່ທັງໝົດ 1900.400 ເຮັກຕາ. ເໝາະແກ່ການ ປູກເຂົ້າ, ປູກພືດ ແລະ ປູກໄມ້ອຸດສາຫະກຳເປັນສິນຄ້າ.

ທາງບ້ານກໍ່ໄດ້ກຳນົດເອົາພື້ນທີ່ເພື່ອສ້າງຕະຫລາດ ເພື່ອເປັນການບໍລິການ, ຄ້າຂາຍ ພາຍໃນບ້ານ ແລະ ອີກຢ່າງໜຶ່ງບ້ານແກ້ງໂດນ ແມ່ນບ້ານທີ່ຈະສ້າງໃຫ້ເປັນບ້ານພັດທະນາຮອບດ້ານຈະຕ້ອງມີທຸກຢ່າງໃຫ້ຄົບວົງຈອນ ແລະ ກຳນົດໃຫ້ມີການຂະຫຍາຍເສັ້ນທາງໃໝ່.

ພາຍໃນບ້ານໄດ້ເຫັນດີເປັນເອກະພາບກັນສ້າງສະຖານທີ່ຖິ້ມຂີ້ເຫຍື້ອ ເນື່ອງຈາກວ່າປະຊາກອນພາຍໃນບ້ານນັບມື້ນັບເພີ່ມຂຶ້ນ, ດັ່ງນັ້ນບັນຫາມົນລະພິດ ແລະ ສິ່ງເສດເຫຼືອຕ່າງໆກໍ່ເກີດຂຶ້ນໄປຕາມໆກັນ. ສະນັ້ນທາງບ້ານກໍ່ໄດ້ເຫັນຄວາມສຳຄັນທີ່ຈະຕ້ອງຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ ພາຍໃນບ້ານໃຫ້ດີຂຶ້ນເປັນກ້າວໆໄປ.

### 4.2. ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ກໍ່ຄືຂອງເມືອງ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານແມ່ນມີ 1 ໂຄງການ ແລະ 13 ບຸລິມະສິດຕົ້ນຕໍດັ່ງລຸ່ມນີ້:

1. ການຜະລິດເຂົ້າ: ໂດຍເລັ່ງໃສ່ຂະຫຍາຍເພີ່ມເນື້ອທີ່ນາຢູ່ເຂດທີ່ມີລະບົບຊົນລະປະທານ ແລະ ເຂດທີ່ມີເງື່ອນໄຂ ຢູ່ເຂດບ້ານແກ້ງໂດນ.

2. ປູກພືດສະບຽງອາຫານ: ພືດຜັກກິນຫົວ ມີ: ຂີງ, ຂ່າ, ຫົວສີໄຄ, ຫວາຍ, ເຜືອກ, ມັນດ້າງ, ມັນເພົາ, ມັນສຳຄູ, ຖົ່ວດິນ, ມັນຕົ້ນ, ຜັກທຽມ, ຜັກບົ່ວຫົວແດງ...

– ພືດຜັກກິນໝາກໃຫ້ໄດ້ ໝາກເຂືອ, ໝາກແຕ້ງ, ໝາກເລັ່ນ, ໝາກຖົ່ວ, ຖົ່ວພູ, ຖົ່ວແຂກ, ໝາກແຕງ, ໝາກຮຸ່ໝາກພັກ, ໝາກນໍ້າ, ໝາກເຜັດ, ສາລີ, ໝາກອຶ, ໝາກບວບ ແລະ ໝາກມັງກອນ

3. ປູກພືດ ແລະ ໄມ້ອຸດສາຫະກຳເປັນສິນຄ້າ: ຊຸກຍູ້,ສົ່ງເສີມປະຊາຊົນປູກພືດ ແລະ ປູກໄມ້ອຸດສະຫະກຳຂາຍເປັນສິນຄ້າ ປ້ອນໂຮງງານປຸງແຕ່ງພາຍໃນແລະ ສົ່ງອອກຕາມເງື່ອນ ແລະ ທ່າແຮງ: ສົ່ງເສີມການປູກມັນຕົ້ນ ແລະ ຢາສູບ

4. ຊຸກຍູ້ສົ່ງເສີມການລ້ຽງສັດ: ຊຸກຍູ້ຜູ້ປະກອບການ ສ້າງຕັ້ງຮ້ານຂາຍຢາ ແລະ ອຸປະກອນການແພດປິ່ນປົວສັດລ້ຽງ

5. ປັບປຸງ ແລະ ຂະຫຍາຍຊົນລະປະທານ ແນ່ໃສ່ສົ່ງເສີມການຜະລິດໃນລະດູແລ້ງ ແລະ ຮັກສາແຫຼ່ງນໍ້າໃຫ້ຍືນຍົງ

– ສຸມໃສ່ປັບປຸງ ແລະ ຂະຫຍາຍລະບົບຊົນລະປະທານ ເພື່ອສະໜອງນໍ້າໃຫ້ແກ່ເນື້ອທີ່ການຜະລິດ ໂດຍເລັ່ງປັບປຸງ, ສ້ອມລະບົບຊົນລະປະທານ, ບຳລຸງຮັກສາລະບົບຄອງເໜືອງທີ່ມີຢູ່ແລ້ວໃຫ້ມີຄວາມຮັບປະກັນນຳໃຊ້ໄດ້ ແລະ ກໍ່ສ້າງລະບົບທໍ່ສົ່ງນໍ້າຊົນລະປະທານຫ້ວຍແກ້ງໂດນ.

– ໂຄງການກໍ່ສ້າງລະບົບນໍ້າລິນ: ສະໜັບສະໜູນໂດຍ: ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ.

6. ສູ້ຊົນຕິດຕາມຄຸ້ມຄອງລາຄາສິນຄ້າຕາມທ້ອງຕະຫຼາດ: ສ້າງເງື່ອນໄຂໃຫ້ຊຸມຊົນ ແລະ ບ້ານທີ່ຢູ່ຫ່າງໄກສອກຫຼີກໄດ້ເຂົ້າເຖິງການແລກປ່ຽນຊື້ຂາຍສິນຄ້າ ດ້ວຍການຊຸກຍູ້ສົ່ງເສີມຜູ້ປະກອບການ ຈັດຕະຫຼາດນັດຕາມ

7. ສົ່ງເສີມການສ້າງຜະລິດຕະພັນພູມປັນຍາຊາວບ້ານໃຫ້ກາຍເປັນສິນຄ້າ: ສ້າງ, ປັບປຸງ ແລະ ສົ່ງເສີມຫົວໜ່ວຍຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

8. ສ້າງຄວາມເຂັ້ມແຂງ ແລະ ຄຸ້ມຄອງຄວາມສ່ຽງໄພພິບັດທາງທຳມະຊາດ, ປັບປຸງລະບົບເຕືອນໄພລ່ວງໜ້າ, ການຟື້ນຟູຫຼັງໄພພິບັດ: ປັບປຸງພື້ນຖານໂຄງລ່າງການປ້ອງກັນຫຼຸດຜ່ອນໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງໃຫ້ບ້ານແກ້ງໂດນ.

9. ແກ້ໄຂບັນຫາ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ: ສະໜອງອຸປະກອນສິ່ງອຳນວຍຄວາມສະດວກ, ອຸປະກອນການຮຽນໃຫ້ພຽງພໍ.

## V. ລະບຽບການໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ

ພາຍຫຼັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ ແລະ ສ້າງເປັນແຜນ ທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວມອບແຜນຈັດສັນທີ່ດິນດັ່ງກ່າວ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ, ບັນດາຂະແໜງການຕ່າງໆຂອງເມືອງ ແລະ ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້, ກວດກາຕິດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງລະບຽບກົດໝາຍໃນການຄຸ້ມຄອງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວນີ້ ໃຫ້ໄດ້ຮັບຜົນດີ. ດັ່ງລາຍລະອຽດລຸ່ມນີ້:

### 5.1. ການຄຸ້ມຄອງທີ່ດິນກະສິກຳ

ທີ່ດິນກະສິກຳປະກອບມີ: ດິນນາ, ດິນສວນປູກພືດຕ່າງໆ ແລະ ດິນກະສິກຳທົ່ວໄປທີ່ໄດ້ກຳນົດໄວ້ແຜນ ທີ່ຈັດສັນ ແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນປະເພດອື່ນ, ຫ້າມຈັບຈ່ອງ ແລະ ຖົມທີ່ດິນກະສິກຳ ເພື່ອຈຸດປະສົງອື່ນໆ ຖ້າຈະຫັນປ່ຽນທີ່ດິນກະສິກຳໄປເປັນປະເພດອື່ນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

### 5.2. ການຄຸ້ມຄອງທີ່ດິນປຸກສ້າງ

ທີ່ດິນປຸກສ້າງປະກອບມີ: ດິນປຸກສ້າງປະຈຸບັນ, ດິນປຸກສ້າງໃໝ່, ແລະ ດິນໂຮງຮຽນ,ຫ້ອງການບ້ານ ແລະ ດິນປຸກສ້າງອື່ນໆຂອງບຸກຄົນ ການຄຸ້ມຄອງປົກປັກຮັກສາ ແມ່ນປະຕິບັດຕາມລະບຽບກົດໝາຍຂອງ ພາກ ສ່ວນທີ່ກ່ຽວຂ້ອງວາງອອກ.

### 5.3. ການຄຸ້ມຄອງທີ່ດິນປ່າໄມ້

ທີ່ດິນປ່າໄມ້ປະກອບມີ: ປ່າຊົມໃຊ້ຂອງບ້ານ, ປ່າປ້ອງກັນ ແລະ ປ່າສະຫງວນຫວງຫ້າມ ການຄຸ້ມຄອງແມ່ນມອບໃຫ້ອຳນາດການປົກຄອງບ້ານເປັນຜູ້ຄຸ້ມຄອງຕາມລະບຽບຂອງຂະແໜງການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

### 5.4. ການຄຸ້ມຄອງທີ່ດິນຄົມມະນາຄົມ

ການຄຸ້ມຄອງ ແລະ ປົກປັກຮັກສາ ແມ່ນມອບໃຫ້ອຳນາດການປົກຄອງບ້ານ ແລະ ຂະແໜງໂຍທາທິການ ທີ່ກ່ຽວຂ້ອງຕິດຕາມກວດກາປະຕິບັດຕາມລະບຽບ ແລະ ກົດໝາຍຢ່າງເຂັ້ມງວດ.

### 5.5. ການຄຸ້ມຄອງທີ່ດິນວັດທະນາທຳ

ທີ່ດິນວັດທະນາທຳ ປະກອບມີ: ດິນປ່າມະເຫສັກ, ດິນປ່າຊ້າ ການຄຸ້ມຄອງແມ່ນ ບ້ານເປັນຜູ້ຄຸ້ມຄອງ ຕາມລະບຽບ ກົດໝາຍ ຫ້າມນຳໃຊ້ທີ່ດິນດັ່ງກ່າວໃນຈຸດປະສົງອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

### 5.6. ການຄຸ້ມຄອງທີ່ດິນບໍລິເວນນ້ຳ

ການຄຸ້ມຄອງທີ່ດິນບໍລິເວນນ້ຳໃຫ້ປະຕິບັດດັ່ງນີ້: ແມ່ນໄດ້ກຳນົດເອົາສາຍເຊ, ຫ້ວຍ ແລະ ຮ່ອງ, ພາຍໃນບ້ານແມ່ນໄດ້ກຳນົດເອົາ ແມ່ນໄດ້ກຳນົດເອົາ ສາຍເຊບັ້ງຫຽງ, ຫ້ວຍ, ໜອງທຳມະຊາດ ພາຍໃນບ້ານມີ ເຊບັ້ງຫຽງ 01 ແຫ່ງ, ໜອງທຳມະຊາດ ຫຼາຍແຫ່ງ, ແລະ ມີ 07 ຫ້ວຍ ຄື: ຫ້ວຍພໍ່ໃຫ່ຍແປະ, ຫ້ວຍປາງ, ຫ້ວຍເກາະ, ຫ້ວຍກະເຫຼືອງ, ຫ້ວຍປາງກຸດ, ຫ້ວຍບ້ານ, ຫ້ວຍທ່າປ່ານ.

ສຳລັບ ເຊບັ້ງຫຽງ ແມ່ນເຊິ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 25 ແມັດ ເພື່ອປ້ອງກັນການເຊາະເຈື່ອນຂອງດິນໃນອານາຄົດ ແລະ ໄດ້ກຳນົດວັງສະຫງວນຂອງບ້ານ ຢູ່ທາງທິດໃຕ້ຂອງບ້ານ

## VI. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນໍາໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກໍານົດໄວ້ໃນບົດແຜນຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນໍາສະເພາະສະບັບເລກທີ່໑໐໙໕/ກຊສ,ລົງວັນທີ 18 ມິຖຸນາ 2024).

## VII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ. ດັ່ງນັ້ນ, ອໍານາດການປົກຄອງເມືອງ, ອໍານາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນໍາ-ນໍາພາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນດັ່ງນີ້:

### 6.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ ຂອງບ້ານຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕໍາແໜ່ງທີ່ສໍາຄັນໃນອໍານາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນໍາ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07).

### 6.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼອນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

### 6.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄໍາສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນໍາໃຊ້ທີ່ດິນ ແລະ ປ່າໄມ້.
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທໍາການຜະລິດ ໃຫ້ແຕ່ລະຄອບຄົວ, ຊີ້ນໍາແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້, ຟື້ນຟູປ່າ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ.
- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສໍາຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນໍ້າ, ສັດປ່າ, ແຫຼ່ງນໍ້າ ແລະ ສິ່ງແວດລ້ອມທໍາມະຊາດ ໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ.
- ຕິດຕາມ, ເກັບກໍາສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ.
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ.
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນໍ້າ, ສັດນໍ້າ, ສັດປ່າ ແລະ ສິ່ງແວດລ້ອມທໍາມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ.

- ສົ່ງເສີມການເຮັດອາຊີບກະສິກຳຄົງທີ່ ໃຫ້ປະຊາຊົນໃນບ້ານຕົນ ແນໃສ່ຈຳກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທຳລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທຳມະຊາດ ເຮັດໃຫ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ.

### 6.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວອັນບໍ່ດີທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນໍ້າ ແລະ ສິ່ງແວດ ລ້ອມເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ສະກັດກັ້ນທຸກການກະທຳ ທີ່ເປັນການທຳລາຍ ຕໍ່ຊັບພະຍາກອນປ່າໄມ້, ສັດນໍ້າ, ສັດປ່າ ແລະ ແຫຼ່ງນໍ້າຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ .
- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

### 6.5. ລະບອບແບບແຜນວິທີເຮັດວຽກ

- ລະບອບແບບແຜນວິທີເຮັດວຽກ ຂອງຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ມີດັ່ງນີ້:
- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ເຮັດວຽກຢ່າງມີແຜນການ, ມີແຜນກິດຈະກຳລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າໝາຍ ແລະຄາດໝາຍແຕ່ລະໄລຍະ.
- ການເຄື່ອນໄຫວວຽກງານບົນພື້ນຖານການປະສານສົມທົບຢ່າງແໜ້ນແຟ້ນ, ມີຄວາມເປັນເອກະພາບພາຍໃນ.
- ທຸກໜ້າວຽກຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້ຜົນເສຍລວມທັງສາເຫດຕ່າງໆຢ່າງຖືກຕ້ອງ ແທດເໝາະກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານ, ຂໍຄຳເຫັນ ແລະທິດຊີ້ນຳຈາກຂັ້ນເທິງເປັນປະຈຳ.

### 6.6. ການຕິດຕາມກວດກາ

ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນ ໄດ້ມີການຈັດພິທີປະກາດມອບຮັບ. ການຕິດຕາມກວດກາ ແມ່ນເພື່ອເປັນການກະຕຸ້ນ ແລະເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວ ກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງ ກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈາລະນາຄືນ ແລະ ດັດແປງ ເພື່ອໃຫ້ອີງການຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີໃນໄລຍະທຳອິດຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງ ເຊັ່ນ: ແຂວງ, ເມືອງ, ກຸ່ມບ້ານຕະຫລອດຮອດໂຄງການທີ່ກ່ຽວຂ້ອງ.

# ເອກະສານອ້າງອີງ


1. ກົດໝາຍ ວ່າດ້ວຍ ປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
2. ກົດໝາຍ ວ່າດ້ວຍ ທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
3. ກົດໝາຍ ວ່າດ້ວຍ ທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
4. ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017, 2020 ແລະ 2022
5. ດຳລັດ ວ່າດ້ວຍ ປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດ ວ່າດ້ວຍ ທີ່ດິນບໍລິເວນນໍ້າ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍທີ 1: ແບບຟອມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານແກ້ງໂດນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ແບບພິມເກັບກຳຂໍ້ມູນ
# ເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານແກ້ງໂດນ

## 1. ປະຫວັດຄວາມເປັນມາບ້ານ

ບ້ານແກ້ງໂດນ: ຕາມການບອກເລົ່າຈາກປາກຕໍ່ປາກສືບມາຂອງຫຼາຍຮຸ່ນຄົນວ່າ: ກ່ອນຈະການມາເປັນບ້ານແກ້ງໂດນ ແມ່ນເລີ່ມຈາກພຽງສອງຄອບຄົວທີ່ໄດ້ມາຕັ້ງຫຼັກປັກຖານສ້າງບ້ານແປງເມືອງຂອງຕົນຂຶ້ນ ທີ່ຕັ້ງຢູ່ແຄມຝັ່ງເຊບັ້ງຫຽງຕອນໃຕ້ໃນຊ່ວງປີ ຄສ 1550, ເຊິ່ງສອງຄອບຄົວນັ້ນຊື່ວ່າ: ພໍ່ເຖົ້າພົມມະເທບ ແລະ ແມ່ເຖົ້າສີກາ, ແລະຄອບຄົວພໍ່ເຖົ້າຈັນຊົມພູ ແລະ ແມ່ເຖົ້າຈຳປາ ເຊິ່ງສອງຄອບຄົວດັ່ງກ່າວແມ່ນເປັນອ້າຍ, ເອື້ອຍນ້ອງກັນ ເຊິ່ງໄດ້ຍ້າຍມາແຕ່ບ້ານກຸດຫີນ, ເມືອງອາດສະພອນ. ຕົກມາຮອດປີ 1572 ໄດ້ເລີ່ມມີການຂະຫຍາຍເຮືອນອອກສູ່ບໍລິເວນກວ້າງ. ມາຮອດປີ ຄສ 1775 ຊີວິດການເປັນຢູ່ກໍ່ໄດ້ຮັບການພັດທະນາຂຶ້ນຕາມລຳດັບເຊັ່ນ: ມີວັດວາອາຮາມ, ມີການຖາງເນື້ອທີ່ການຜະລິດຈາກການຖາງໄຮ່ແບບໝູນວຽນ ແລະ ໄດ້ຫັນມາເປັນເນື້ອທີ່ນາປີຕາມເງື່ອນໄຂຂອງແຕ່ລະຄອບຄົວ. ຕົກມາຮອດປີ ຄສ 1780 ເປັນຊ່ວງຂອງການຮຸກຮານຂອງສັກດີນາສະຫຍາມ ເຊິ່ງເຮັດໃຫ້ຊາວບ້ານແກ້ງໂດນໄດ້ແຕກເປັນກຸ່ມໜີໄປຢູ່ເຂດຕ່າງໆ ແລະ ສ່ວນໜຶ່ງໄດ້ຖືກເກນໄປເປັນຂ້າທາດຢູ່ສະຫຍາມ. ຮອດປີ 1890 ກ່ອນຈັກກະພັດຝຣັ່ງເຂົ້າມາຍຶດຄອງເຫັນວ່າການຜະລິດຂອງຊາວບ້ານແກ້ງໂດນແມ່ນມີການບຸກເບີກພື້ນທີ່ເປັນຫຼັກແຫຼ່ງ ແລະ ຜ່ານມາຫຼາຍປີແລ້ວໄດ້ສ້າງເປັນຕາແສງແກ້ງໂດນໃນປີ 1903 ລວມມີ 12 ບ້ານ. ຈາກນັ້ນພາຍຫຼັງປົດປ່ອຍ ປີ 1990 ທົ່ວເຂດແກ້ງໂດນກໍ່ກັບຄືນສູ່ສະພາບປົກກະຕິ. ປະຊາຊົນແຕ່ລະບ້ານກໍ່ທຳມາຫາກິນຢ່າງສະຫງົບສຸກຈົນມາຮອດປະຈຸບັນ.

- ❖ ປະກອບມີ 14 ໜ່ວຍ, ມີ 228 ຫຼັງຄາເຮືອນ; 193 ຄອບຄົວ.
- ❖ ພົນລະເມືອງທັງໝົດ 1,226 ຄົນ; ຍິງ 635 ຄົນ;
- ❖ ປະກອບມີ 01 ຊົນເຜົ່າ: ລາວ.
- ❖ ຊົນເຜົ່າ ສາສະໜາ ພຸດ (ລວມ: 100%)
- ❖ ໄດ້ຮັບນາມມະຍົດເປັນບ້ານແມ່ຍິງ 3 ດີ,
- ❖ ບ້ານປ້ອງກັນຊາດເຂັ້ມແຂງ
- ❖ ບ້ານປ້ອງກັບຄວາມສະຫງົບດີ
- ❖ ບ້ານປອດຢາເສບຕິດ
- ❖ ບ້ານປະຕິບັດກົດໝາຍດີ
- ❖ ບ້ານສາທາລະນະສຸກແບບຢ່າງ
- ❖ ບ້ານວັດທະນະທຳ
- ❖ ບ້ານສາມັກຄີປອງດອງ
- ❖ ບ້ານພັດທະນາ
- ❖ ອັດຕາເພີ່ມ ແລະ ຫຼຸດລົງຂອງປະຊາກອນ.

- ການເກີດ 23 ຄົນ/ປີ;
- ການຕາຍ 09 ຄົນ/ປີ;
- ການຍົກຍ້າຍເຂົ້າ ບໍ່ມີ ຄົນ/5ປີ;
- ການຍ້າຍອອກ ບໍ່ມີ ຄົນ/5ປີ/;

❖ ໂຄງປະກອບການຈັດຕັ້ງຂອງບ້ານ.

- ປະທານບ້ານ 01 ຄົນ; ຮອງນາຍບ້ານ 04 ຄົນ; ຍິງ 1 ຄົນ.
- ສະມາຊິກພັກ 6 ຄົນ; ຍິງ 1 ຄົນ;
- ກຳມະບານ 2 ຄົນ; ຍິງ 0 ຄົນ;
- ຊາວໜຸ່ມ 35 ຄົນ; ຍິງ 20 ຄົນ;
- ສະຫະພັນແມ່ຍິງ ຄົນ;

**2. ທີ່ຕັ້ງ ແລະ ພູມສັນຖານຂອງບ້ານ.**

❖ ທີ່ຕັ້ງ: ບ້ານແກ້ງໂດນ ຂຶ້ນກັບກຸ່ມບ້ານທີ 6 , ເຊິ່ງມີທີ່ຕັ້ງຫ່າງຈາກເທດສະບານເມືອງໄປທາງທິດຕາເວັນອອກ ປະມານ 14 ກມ, ເຊິ່ງມີເຂດແດນຕິດຈອດຄື:

❖ ມີເຂດຄຸ້ມຄອງຕິດກັບ: 6 ບ້ານ

- ທິດເໜືອຕິດກັບ: ບ້ານໜອງເດີ່ນ
- ທິດຕາເວັນອອກຕິດກັບ ບ້ານດອນຂຽວ ແລະ ໂນນຄຳສູງ.
- ທິດໃຕ້ຕິດກັບ ບ້ານ ໂນນສະຫວ່າງ
- ທິດຕາເວັນຕົກຕິດກັບ ບ້ານຫົວຫາດ ແລະ ບ້ານໂນນສະຫວ່າງ

❖ ເນື້ອທີ່ທັງໝົດຂອງ ບ້ານ ຮຕ

×ມີສາຍນ້ຳ/ນ້ຳເຊ: ມີ ☒ ; ບໍ່ມີ ☐ ; ມີ 01 ສາຍຄື: 1. ເຊບັ້ງຫຽງ

×ມີຫ້ວຍ ມີ ☒ ; ບໍ່ມີ ☐ ; ມີ 6 ສາຍຄື:

1. ຫ້ວຍຢາງ
2. ຫ້ວຍເກາະ
3. ຫ້ວຍ ກະເຫຼືອງ
4. ຫ້ວຍຍາງກຸດ
5. ຫ້ວຍບ້ານ
6. ຫ້ວຍ ທ່າປ່າໄລ່

×ມີຜາ ( ພູ ) ມີ ☐ ; ບໍ່ມີ ☒ ; ມີ.......................ພູຄື:

× ມີຖ້ຳ ມີ ☐ ; ບໍ່ມີ ☒ ; ມີ……....... ຄື:

× ມີເສັ້ນທາງຄົມມະນາຄົມຈັກເສັ້ນ....01.....ເສັ້ນ; ທາງຮ່ອມ.............6................. ເສັ້ນ

× ມີຊົນລະປະທານບໍ່? ມີ ☒ ; ບໍ່ມີ ☐ ; ຈັກແຫ່ງ...............1................ແຫ່ງ

× ໜອງລວມບ້ານ ມີ ☒ ; ບໍ່ມີ ☐ ; ຈັກໜອງ.............1...ໜອງ (ມີວັງສະຫງວນ 1 ແຫ່ງ: ວັງເວີນຍາງ)

**3. ສະພາບດ້ານເສດຖະກິດຂອງບ້ານ**

ລາຍຮັບຕົ້ນຕໍມີຫຍັງແດ່?: (1) ເງິນຝາກມາຈາກທາງໄກ (ປະເທດໄທ)

❖ ລາຍຮັບສຳຮອງມີຫຍັງແດ່?: (1) ກະສິກາ (ຂາຍເຂົ້າ ແລະ ມັນຕົ້ນ), ຄ້າຂາຍ (ຂາຍເສື່ອນອນ ແລະ ຂາຍຕູ້ໄມ້ອັດ)

❖ ລາຍຮັບປະມານຫລາຍກົ່ວ 10 ລ້ານກີບຂຶ້ນໄປສຳລັບມັນຕົ້ນ

❖ ແຮງງານຕົ້ນຕໍມີຈັກຄົນ: 1,066 ຄົນ; ແຮງງານສໍາຮອງມີຈັກຄົນ: 159 ຄົນ
❖ ຈໍານວນຄົວເຮືອນທີ່ລຸດພົ້ນອອກຈາກຄວາມທຸກຍາກມີ 0 ຄອບຄົວ, ຍັງບໍ່ທັນພົ້ນມີ 5 ຄອບຄົວ.

## 4. ຂໍ້ມູນດ້ານພື້ນຖານໂຄງລາງຂອງບ້ານ

| | | | |
|---|---|---|---|
| × ມີທາງເຂົ້າບ້ານບໍ? | ມີ ☒ | ບໍ່ມີ ☐ | ຖ້າມີ;ມີຈັກ…1………ເສັ້ນ |
| × ໄຟຟ້າເຂົ້າເຖິງບ້ານບໍ | ມີ ☒ | ບໍ່ມີ ☐ | |
| × ມີສຸກສາລາຫຼືໂຮງໝໍຕັ້ງຢູ່ເຂດບ້ານ | ມີ ☐ | ບໍ່ມີ ☒ | ຖ້າມີ;ມີຈັກ…………ແຫ່ງ |
| × ມີຖົງຢາປະຈໍາບ້ານບໍ? | ມີ ☒ | ບໍ່ມີ ☐ | |
| × ມີໂຮງຮຽນປະຖົມ? | ມີ ☒ | ບໍ່ມີ ☐ | ຖ້າມີ;ມີຈັກ……1…..ແຫ່ງ |
| × ມີຕະຫຼາດຊື້ຂາຍ ບໍ? | ມີ ☒ | ບໍ່ມີ ☐ | ຖ້າມີ;ມີຈັກ…1……..ແຫ່ງ |
| × ຫ້ອງການບ້ານ | ມີ ☒ | ບໍ່ມີ ☐ | ຖ້າມີ;ມີຈັກ……1…..ແຫ່ງ |
| × ລະບົບນໍ້າສະອາດ | ມີ ☒ | ບໍ່ມີ ☐ | ຖ້າມີ;ມີຈັກ……2…..ແຫ່ງ |
| × ຄົວລົດ | ມີ ☐ | ບໍ່ມີ ☒ | ຖ້າມີ;ມີຈັກ………..ແຫ່ງ |
| × ບ່ອນບໍາບັດຂີ້ເຫຍື້ອ | ມີ ☒ | ບໍ່ມີ ☐ | ຖ້າມີ;ມີຈັກ……1…..ແຫ່ງ |
| × ທ່າເຮືອ | ມີ ☐ | ບໍ່ມີ ☒ | ຖ້າມີ;ມີຈັກ………..ແຫ່ງ |
| × ອື່ນໆ…………………………………………………………………………………… | | | |

## 5. ຂໍ້ມູນດ້ານ ຄອບຄົວພາຍໃນບ້ານ

| ລ/ດ | ລາຍການ | ຈໍານວນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|
| 01 | ຄອບຄົວຄ້າຂາຍ | 12 | ຄ/ຄ | |
| 02 | ຄອບຄົວເຮັດກະສິກໍາ | 180 | ຄ/ຄ | |
| 03 | ຄອບຄົວເຮັດອຸດສາຫະກໍາ | 10 | ຄ/ຄ | |
| 04 | ຄອບຄົວເຮັດຫັດຖະກໍາ | 0 | ຄ/ຄ | |
| 05 | ຄອບຄົວພະນັກງານລັດ | 5 | ຄ/ຄ | |
| 06 | ຄອບຄົວອື່ນໆ | 0 | ຄ/ຄ | |

## 6. ອາຊີບຕົ້ນຕໍພາຍໃນບ້ານ

| ລ/ດ | ລາຍການ | ຈໍານວນຄົນ | ຍິງ/ຄົນ | ໝາຍເຫດ |
|---|---|---|---|---|
| 01 | ເຮັດນາ | 540 | 340 | |
| 02 | ໄຮ່ ( ໄຮ່ເຂົ້າ, ສວນໝາກໄມ້ ) | 0 | 0 | |
| 03 | ພະນັກງານລັດ | 7 | 2 | |
| 04 | ພະນັກງານວິສາຫະກິດ | 0 | 0 | |
| 06 | ກໍາມະກອນທົ່ວໄປ | 30 | 0 | |
| 07 | ຄ້າຂາຍ | 3 | 3 | |
| 08 | ນັກຮຽນ, ນັກສຶກສາ | 79 | 46 | |
| 09 | ອາຊີບອື່ນໆ | 0 | 0 | |
| **ລວມທັງໝົດ** | | **659** | **391** | |

**7. ເກັບກຳຂໍ້ມູນການນຳໃຊ້ທີ່ດິນແຕ່ປະເພດພາຍໃນບ້ານ**

**7.1. ດິນລັດ, ດິນຊຸມຊົນ ແລະ ດິນລວມບ້ານ**

- ດິນ ໂຮງຮຽນ 1 ຕອນ; ຊັ້ນໃດ ໂຮງຮຽນປະຖົມ. 1 ແຫ່ງ ເຮັກຕາ ເອກະສານຢັ້ງຢືນ ☒
- ໂຮງຮຽນ ມັດທະຍົມສົມບູນ 0 ແຫ່ງ ແລະ ມັດທະຍົມ 0 ແຫ່ງ;ເນື້ອທີ່ 0 ເຮັກຕາ ເອກະສານຢັ້ງຢືນ ☐
- ດິນ ຫ້ອງການບ້ານ 1 ຕອນ; ເນື້ອທີ່ 0,012 ເຮັກຕາ ມີເອກະສານຢັ້ງຢືນ ☒
- ດິນ ປ່າຊ້າ ຕອນ; ເນື້ອທີ່ ເຮັກຕາ ມີເອກະສານຢັ້ງຢືນ ☒
- ດິນ ປ່າສັກສິດ/ດິນມະເຫສັກ ຕອນ; ເນື້ອທີ່… ເຮັກຕາ ມີເອກະສານຢັ້ງຢືນ ☐
- ດິນ ວັດ: ຕອນ; ມີ ເນື້ອທີ່ ...................ເຮັກຕາ ມີເອກະສານຢັ້ງຢືນ ☐
- ດິນ ລວມບ້ານ ( ດິນເປົ່າຫວ່າງ ) ຕອນ; ເນື້ອທີ່………… ມີເອກະສານຢັ້ງຢືນ ☐
- ດິນ ລວມບ້ານ (ທີ່ມອບໃຫ້ບຸກຄົນນຳໃຊ້) ບໍ່ມີ ຕອນ; ເນື້ອທີ່………..ມີເອກະສານຢັ້ງຢືນ ☐
- ດິນຊຸມຊົນ ບໍ່ມີ ຕອນ; ເນື້ອທີລວມ…...ມີເອກະສານຢັ້ງຢືນ ☐

**7.2. ດິນເຊົ່າ - ສຳປະທານ (ດິນລັດ ແລະ ດິນລວມບ້ານ)**

❖ ດິນ ເຊົ່າພາຍໃນບ້ານ. ບໍ່ມີ ຕອນ; ໃຜເປັນຜູ້ເຊົ່າ

- ✓ ຕອນທີ1: ເນື້ອທີ່ .......ເຮັກຕາ; ເຊົ່າຈັກປີ………...ປີ; ແຕ່ປີ
- ✓ ເຊົ່າເຮັດຫຍັງ ເອກະສານຢັ້ງຢືນ ☐
- ✓ ເຊົ່າເຮັດຫຍັງ ເອກະສານຢັ້ງຢປືນ
- ✓ ເຊົ່າເຮັດຫຍັງ ເອກະສານຢັ້ງຢືນ ☐

**7.3. ການນຳໃຊ້ດິນແຕ່ລະປະເພດພາຍໃນບ້ານ**

**I. ດິນກະສິກຳ:**

1. ທີ່ດິນນາ..........................................ຕອນ, ເນື້ອທີ່ ເຮັກຕາ.
2. ດິນຄັງລ້ຽງສັດ...................................ຕອນ, ເນື້ອທີ່......……… ເຮັກຕາ.
3. ດິນໄຮ່........................................... ຕອນ, ເນື້ອທີ່…...…..............ເຮັກຕາ.
4. ດິນສວນ..........................................ຕອນ, ເນື້ອທີ່........ ເຮັກຕາ.
5. ດິນກະສິກຳທົ່ວໄປ...............................ຕອນ, ເນື້ອທີ່ ເຮັກຕາ.
6. ດິນປູກໄມ້........................................ຕອນ, ເນື້ອທີ່ ເຮັກຕາ.
7. ດິນຊົນລະປະທານ..............................ຕອນ, ເນື້ອທີ່ ເຮັກຕາ.
8. ດິນເຂດສະຫງວນພັນພືດ.......................ຕອນ, ເນື້ອທີ່..............................ເຮັກຕາ.
9. ອື່ນໆ……………………………………………………………………...............

**II. ດິນປູກສ້າງ:**

1. ດິນປູກສ້າງບຸກຄົນ............................ ..ຕອນ, ເນື້ອທີ່.............................ເຮັກຕາ.
2. ດິນປູກສ້າງຂອງລັດ.......................... ຕອນ, ເນື້ອທີ່ ..........................ເຮັກຕາ.
3. ດິນລວມບ້ານ................................. ຕອນ, ເນື້ອທີ່........................................ເຮັກຕາ.
4. ດິນເປົ່າຫວ່າງ...................................ຕອນ, ເນື້ອທີ່........................................ເຮັກຕາ.
5. ດິນຈັບຈອງ.....................................ຕອນ, ເນື້ອທີ່........................................ເຮັກຕາ.

**III. ດິນວັດທະນະທຳ**

1. ດິນປ່າສັກສິດ (ປ່າຊ້າ)..........2............ ຕອນ, ເນື້ອທີ່...................................ເຮັກຕາ.
2. ດິນປ່າມະເຫສັກ.......3.....ຕອນ, ເນື້ອທີ່..........................................................ເຮັກຕາ

3. ດິນວັດ 1 ຕອນ, ເນື້ອທີ່ .........0.7060….ຮັກຕາ.
4. ດິນສະຖານທີ່ທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳປະຫວັດສາດ ບໍ່ມີ ຕອນ, ເນື້ອທີ່.......ເຮັກຕາ.

## IV. ດິນປ້ອງກັນຊາດ

1. ດິນຕັ້ງຄ້າຍສຳນັກງານອົງການ,ກົມກອງບ່ອນພັກເຊົາ,ໂຮງຮຽນ,ສະໜາມບິນ, ,ໂຮງໝໍ......ຕອນ, ເນື້ອທີ່.....................................................ເຮັກຕາ.
2. ດິນທຳການຜະລິດ..................ບໍ່ມີ............... ຕອນ, ເນື້ອທີ່........0.................ເຮັກຕາ.
3. ດິນສະໜາມຝຶກຊອບທາງຍຸດທະສາດ..................ຕອນ, ເນື້ອທີ່.........0.................ເຮັກຕາ.
4. ດິນທຳການຜະລິດ.....................ບໍ່ມີ................. ຕອນ, ເນື້ອທີ່........0..................ເຮັກຕາ.

## V. ປ້ອງກັນຄວາມສະຫງົບ

1. ດິນຕັ້ງຄ້າຍສຳນັກງານອົງການ, ກົມກອງບ່ອນພັກເຊົາ, ໂຮງຮຽນ, ສະໜາມບິນ, ສາງ, ໂຮງໝໍ ຕອນ, ເນື້ອທີ່ ..........................ເຮັກຕາ.
2. ດິນທຳການຜະລິດ.............ບໍ່ມີ..........................ຕອນ, ເນື້ອທີ່........0.........ເຮັກຕາ
3. ດິນສະໜາມຝຶກຊອບທາງຍຸດທະສາດ........ບໍ່ມີ.........ຕອນ, ເນື້ອທີ່........0.........ເຮັກຕາ.
4. ດິນທຳການຜະລິດ..................ບໍ່ມີ.....................ຕອນ, ເນື້ອທີ່........0.........ເຮັກຕາ.

## VI. ດິນປ່າໄມ້

1. ດິນປ່າຜະລິດແຫ່ງຊາດ ບໍ່ມີ ຕອນ, ເນື້ອທີ່ ..................ເຮັກຕາ.
2. ດິນປ່າຜະລິດຂອງແຂວງ.............ບໍ່ມີ...................... ຕອນ, ເນື້ອທີ່........0...........ເຮັກຕາ.
3. ດິນປ່າຜະລິດຂອງເມືອງ..................................... ຕອນ, ເນື້ອທີ່........0...........ເຮັກຕາ.
4. ດິນປ່າຜະລິດບ້ານ............ບໍ່ມີ.............................. ຕອນ, ເນື້ອທີ່.........0...........ເຮັກຕາ.
5. ດິນປ່າສະຫງວນແຫ່ງຊາດ................ບໍ່ມີ..................... ຕອນ, ເນື້ອທີ່.........0...........ເຮັກຕາ.
6. ດິນປ່າສະຫງວນ ຂອງແຂວງ ( ດົງພູວຽງ ),...................ຕອນ, ເນື້ອທີ່.....................ເຮັກຕາ.
7. ດິນປ່າສະຫງວນຂອງເມືອງ..............ບໍ່ມີ................. ...ຕອນ, ເນື້ອທີ່................. ເຮັກຕາ
8. ດິນປ່າສະຫງວນບ້ານ.........................ບໍ່ມີ..................ຕອນ, ເນື້ອທີ່................. .ເຮັກຕາ.
9. ດິນປ່າປ້ອງກັນແຫ່ງຊາດ.............ບໍ່ມີ...................... ຕອນ, ເນື້ອທີ່................. .ເຮັກຕາ.
10. ດິນປ່າປ້ອງກັນ ຂອງແຂວງ..........ບໍ່ມີ...................... ຕອນ, ເນື້ອທີ່....................ເຮັກຕາ.
11. ດິນປ່າປ້ອງກັນຂອງເມືອງ............ບໍ່ມີ...................... ຕອນ, ເນື້ອທີ່.................. ເຮັກຕາ.
12. ດິນປ່າປ້ອງກັນບ້ານ............ບໍ່ມີ............................ ຕອນ, ເນື້ອທີ່.................. ເຮັກຕາ.
13. ດິນປ່າຊົມໃຊ້ບ້ານ.............................................ຕອນ, ເນື້ອທີ່ ................... ເຮັກຕາ.
14. ດິນປ່າປູກໄມ້ອຸດສາຫະກຳ,ໄມ້ດູ່ (ໂຄງການ), 1 ຕອນ, ເນື້ອທີ່. 123,5 ເຮັກຕາ.
15. ດິນປ່າຟື້ນຟູ...........1 (ພື້ນທີ່ວັດປ່າ)..................................... ຕອນ, ເນື້ອທີ່.......................ເຮັກຕາ.

## VII. ດິນອຸດສາຫະກຳ

1. ເຂດທີ່ດິນອຸດສາຫະກຳ (ໂຮງຈັກ, ໂຮງງານຂະໜາດໃຫ່ຍ,ເຂື່ອນໄຟຟ້ານ້ຳຕົກ, ອື່ນໆ) ຈັກຕອນ: ບໍ່ມີ ຕອນ, ເນື້ອທີ່ ............................ເຮັກຕາ.
2. ແລວສາຍໄຟຟ້າ………ບໍ່ມີ…..............................ຕອນ, ເນື້ອທີ່.............0............. ເຮັກຕາ.
3. ສະຖານທີ່ບ່ອນຖິ້ມຂີ້ເຫຍື້ອ..............1................ຕອນ, ເນື້ອທີ່...............0........... ເຮັກຕາ.

## VIII. ດິນຄົມມະນາຄົມ

1. ທ່າເຮືອ, ທ່າບັກ ບໍ່ມີ ຕອນ, ເນື້ອທີ່......0.......... ເຮັກຕາ.

2. ບໍ່ຫີນ, ບໍ່ດິນ, ບໍ່ຊາຍ, ແລະ ສະຖານທີ່ຄົບຫີນ ບໍ່ມີ ຕອນ, ເນື້ອທີ່.............0................ເຮັກຕາ.
3. ຄິວລົດ ມີ .ຕອນ, ເນື້ອທີ່......0...........ເຮັກຕາ.
4. ສະໜາມບິນ. ບໍ່ມີ ຕອນ, ເນື້ອທີ່......0...........ເຮັກຕາ.
5. ສະຖານທີ່ຕັ້ງຫລັກສັນຍານ 0 ຕອນ, ເນື້ອທີ່........0........ ເຮັກຕາ.
6. ສາງຕ່າງໆ : 0 ຕອນ, ເນື້ອທີ່................ ເຮັກຕາ.
7. ແລວທາງລົດໄຟ: ບໍ່ມີ ຈັກແລວ ...................0.................
8. ໂຮງມົງ: ບໍ່ມີ ຈັກບ່ອນ ...............................0................
9. ເຂດສະຫງວນທາງ : ມີ 0 ເສັ້ນ
10. ທາງເບຕົງ/ປູຢາງ: ມີ ຈັກເສັ້ນ 1 ເສັ້ນ
11. ທາງດິນແດງ: ມີຈັກເສັ້ນ 1 ເສັ້ນ, ເນື້ອທີ່...........0.............ເຮັກຕາ.

**IX. ທີ່ດິນບໍລິເວນນ້ຳ**

1. ສາຍນ້ຳມີຈັກສາຍ: ສາຍ.
2. ສາຍຫ້ວຍມີຈັກສາຍ: ສາຍ.
3. ດິນໜອງນ້ຳທຳມະຊາດ (ໜອງລວມບ້ານ) ຕອນ, ເນື້ອທີ່..........0............ເຮັກຕາ.
4. ວັງສະຫງວນຂອງບ້ານ ຕອນ, ເນື້ອທີ່.........................ເຮັກຕາ.
5. ອ່າງເກັບນ້ຳ 1 ຕອນ, ເນື້ອທີ່.........................................ເຮັກຕາ.
6. ດອນທາມ ບໍ່ມີ ຕອນ, ເນື້ອທີ່.........0........ເຮັກຕາ.
7. ເກາະດອນ ບໍ່ມີ ຕອນ, ເນື້ອທີ່.........0.........ເຮັກຕາ.

**8. ເຂດທີ່ຖືກຜົນກະທົບຕໍ່ໄພພິບັດ**

1. ເຂດພື້ນທີ່ນ້ຳຖ້ວມ

- ➢ ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພນ້ຳຖ້ວມຄືແນວໃດ? ທຸກໆປີ ; 2-3ປີ ແລະ ອື່ນໆ.ໃນໄລຍະຜ່ານມາ ບ້ານແກ້ງໂດນ 4 ເຂດນາໜອງເບນ, ເຂດນາຄຳ ແລະ ເຂດນາບ້ານ, ເຂດນາຟາກເຊ.
- ✓ ເຂດທີ່ຖືກນ້ຳຖ້ວມມີຈັກບ່ອນ; ຢູ່ເຂດໃດຂອງບ້ານ: ຖ້າຖ້ວມແມ່ນບໍ່ສາມາດໄດ້ຮັບຜົນຜະລິດ
- ➢ ປະເພດດິນທີ່ຖືກນ້ຳຖ້ວມມີຄືແນວໃດ?

ດິນປຸກສ້າງ: 5 (10 ຄອບຄົວ) ຮຕ, ດິນນາ 40 ຮຕ; ດິນສວນພືດລົ້ມລຸກ 5 ຮຕ;
ດິນອື່ນໆ

**❖ ລະດັບ ແລະ ໄລຍະນ້ຳຖ້ວມ.**

- ✓ ລະດັບ ນ້ຳຖ້ວມຂຶ້ນສູງສຸດ 15 ແມັດ ແລະ ຕ່ຳສຸດ 1 ແມັດ.
- ✓ ລະດັບນ້ຳສົ່ງຜົນຕໍ່ການຄົມມະນາຄົມຂອງບ້ານ: ເຮັດໃຫ້ການສັນຈອນໄປມາ ລະຫວ່າງບ້ານ ຕໍ່ບ້ານ ແມ່ນພົບຄວາມຫຍຸ້ງຍາກ ໄປມາລຳບາກ.
- ✓ ໄລຍະນ້ຳຖ້ວມສູງສຸດ 10 ວັນ ແລະ ຕ່ຳສຸດ 5 ວັນ.
- ✓ ຫ້ວຍມີນ້ຳຕະຫຼອດປີ ມີ 1 ຫ້ວຍ (ຫ້ວຍຍາງ) ແລະ ສະເພາະລະດູຝົນມີ 6 ຫ້ວຍ.
- ✓ ລະດັບນ້ຳຫ້ວຍໃນລະດູຝົນສູງສຸດແມ່ນ 3 ແມັດ ແລະ ຕ່ຳສຸດ 50 ຊັງຕີແມັດ.

**2. ເຂດພື້ນທີ່ແຫ້ງແລ້ງ**

- ✓ ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພແຫ້ງແລ້ງຄືແນວໃດ? ທຸກໆປີ ; 2-3ປີ ແລະ ອື່ນໆ.
  ໄລຍະຜ່ານມາ ບໍ່ມີ.

3 **ເຂດພື້ນທີ່ດິນເຊາະເຈື່ອນ**

- ✓ ໄລຍະຜ່ານມາບ້ານຖືກຜົນກະທົບຈາກດິນເຊາະເຈື່ອນຄືແນວໃດ? ທຸກໆປີ ; 2-3ປີ ແລະ ອື່ນໆ.
  ໄລຍະຜ່ານມາທຸກໆປີ ໃນຊ່ວງລະດູຝົນຕາຝັ່ງເຊຈຳພອນ ແລະ ເຊບັ້ງຫຽງເກີດມີການເຊາະເຈື່ອນ.
- ✓ ເຂດພື້ນທີ່ດິນເຊາະເຈື່ອນມີ 1 ບ່ອນ ຢູ່ເຂດ: ແຄມຕາຝັ່ງເຊ ລະຫວ່າງຂອງບ້ານ.
- ✓ ສາເຫດທີ່ພາໃຫ້ເກີດດິນເຊາະເຈື່ອນ ຍ້ອນວ່າເປັນຊ່ວງລະດູຝົນ.
- ➢ **ເຂດເຊາະເຈື່ອນມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?**
  ແມ່ນມີຜົນກະທົບໃສ່ດິນກຳສິກຳ: ບໍ່ມີຜົນກະທົບໃສ່ດິນກະສິກຳຂອງປະຊາຊົນ.
- ✓ ດິນນາ…0…..ຮຕ; ດິນສວນພືດລົ້ມລຸກ...0.....ຮຕ; ດິນສວນໄມ້ໃຫ້ໝາກ......0......ຮຕ;
  ດິນສວນໄມ້ອຸດສາຫະກຳ. 0 ຮຕ; ດິນຄັງລ້ຽງສັດ 0 ຮຕ ແລະ ດິນອື່ນໆ.

4. **ເຂດທີ່ມີຄວາມສ່ຽງຈາກລະເບີດບໍ່ທັນແຕກ**

- ✓ ໄລຍະຜ່ານມາບ້ານຖືກຜົນກະທົບຈາກລະເບີດບໍ່ທັນແຕກຄືແນວໃດ? ທຸກໆປີ 2-3 ປີ ແລະ ອື່ນໆ..ບໍ່ມີ

5. **ເຂດພື້ນທີ່ດິນ ລະເບີດບໍ່ທັນແຕກ: ບໍ່ມີ.**

- ➢ ມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?
- ✓ ດິນນາ ບໍ່ມີ ຮຕ; ດິນສວນພືດລົ້ມລຸກ ບໍ່ມີ ຮຕ; ດິນສວນໄມ້ໃຫ້ໝາກ ບໍ່ມີ ຮຕ;
  ດິນສວນໄມ້ອຸດສາຫະກຳ ບໍ່ມີ ຮຕ; ດິນຄັງລ້ຽງສັດ ບໍ່ມີ ຮຕ;
  ດິນອື່ນໆ…………………………………

6. **ເຂດພື້ນທີ່ທີ່ຖືກຜົນກະທົບດ້ານອື່ນໆ.**

- ➢ ໂຄງການເຊົ່າ ແລະ ສຳປະທານທີ່ດິນພາຍໃນບ້ານມີຄືແນວໃດ?
- ✓ ໂຄງການຂຸດຄົ້ນບໍ່ແຮ່: ບໍ່ມີ
- ✓ ໂຄງການກໍ່ສ້າງຕ່າງໆ: ບໍ່ມີ
- ✓ ແລະ ໂຄງການອື່ນໆ: ບໍ່ມີ
- ➢ ບໍ່ມີໂຮງຈັກໂຮງງານ, ດິນເຊົ່າສຳປະທານ ແລະ ອື່ນໆ
  ຖ້າມີໄດ້ສິ່ງຜົນກະທົບໃສ່ບ້ານ (ຄວັນ, ນໍ້າເສຍ, ສານພິດ, ສຽງ ແລະອື່ນໆ

7. ວິທີການປ້ອງກັນ ແລະ ແກ້ໄຂຕໍ່ຜົນກະທົບຕ່າງໆ:

**ໝາຍເຫດ**: ແບບຟອມເກັບກາຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານ ສະບັບນີ້ເປັນພຽງການສອບຖາມຂໍ້ມູນຈາກທາງບ້ານເທົ່ານັ້ນ ບໍ່ສາມາດນຳໃຊ້ໃນນິຕິກຳອື່ນໆໄດ້.

| ຮັບຮູ້ ແລະຢັ້ງຢືນ | ຜູ້ໃຫ້ຂໍ້ມູນ | ຜູ້ບັນທຶກ |
|---|---|---|
| ນາຍບ້ານ | | |

ເອກະສານຊ້ອນທ້າຍທີ 2: ບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ແຂວງ: ສະຫວັນນະເຂດ**

**ເມືອງ :ສອງຄອນ** **ເລກທີ** ............../**ຈມ**

**ລົງວັນທີ** ...................

## ບົດບັນທຶກ

**ຂອບເຂດຄຸ້ມຄອງຂອງ ບ້ານ ແກ້ງໂດນ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນລະຫວ່າງ:**
**ບ້ານຫົວຫາດ, ບ້ານໂນນສະຫວ່າງ, ບ້ານໂນນຄຳສູງ, ບ້ານດອນຂຽວ ແລະ ບ້ານໜອງເດີນ.**

- ອີງຕາມ ຂໍ້ຕົກລົງ ຂອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1343/ກສຂ , ລົງວັນທີ 24 ພະຈິກ 2025, ວ່າດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມການສຳຫຼວດຈັດສັນທີ່ດິນ 8 ປະເພດໃນ 3 ບ້ານເປົ້າໝາຍຂອງ ເມືອງສອງຄອນ, ແຂວງສະຫວັນນະເຂດ.
- **ອີງຕາມ**: ຂໍ້ຕົກລົງ ຂອງທ່ານເຈົ້າເມືອງ-ເມືອງສອງຄອນ ທີ 606/ຈມ ລົງວັນທີ 6 ພະຈິກ 2025, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນບ້ານ ຢູ່ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ.

**1. ທິດເໜືອ: ບ້ານແກ້ງໂດນ ຕິດກັບ 1 ບ້ານຄື: ບ້ານຫົວຫາດ:** ເລີ່ມແຕ່ຫ້ວຍຄຳມູດ (ເຊບັ້ງຫຽງ) ເລາະຂຶ້ນໄປຈົນຮອດປາກຫ້ວຍເປາະ, ແລ້ວຂຶ້ນໄປໃສ່ວັງເດືອນຫ້າ, ຈົນໄປຮອດໜອງແສງ, ຈາກນັ້ນຕັດໄປໃສ່ຂື້ອແປ້ນ ເປັນເຂດແດນລະຫວ່າງບ້ານແກ້ງໂດນ ແລະ ບ້ານຫົວຫາດ ລວມໄລຍະທັງໝົດ 4930 ແມັດ.

**ຕາຕະລາງ ຄ່າພິກັດບ້ານແກ້ງໂດນ ກັບ ຫົວຫາດ ກຸ່ມລະບົບ** WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48 ) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532662 | 1790838 | ຫ້ວຍຄຳມູດ(ເຊບັ້ງຫຽງ) | 0 |
| 2 | 533911 | 1791760 | ປາກຫ້ວຍເປາະ | 1580 |
| 3 | 534693 | 1791939 | ວັງເດືອນຫ້າ | 832 |
| 4 | 535656 | 1792655 | ໜອງແສງ | 1199 |
| 5 | 536920 | 1792217 | ຂື້ອແປ້ນ | 1319 |
| **ລວມໄລຍະ** | | | | 4930 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

**2. ທິດຕາເວັນອອກ: ບ້ານແກ້ງໂດນ ຕິດກັບ ບ້ານ ດອນຂຽວ** ເລີ່ມແຕ່ຂື້ອແປ້ນ ເປັນຈຸດຕັດກັນຂອງ 3 ບ້ານຄື: ບ້ານດອນຂຽວ, ບ້ານໜອງເດີນ ແລະບ້ານແກ້ງໂດນ, ລັດລົງມາໃສ່ ປາກຮ່ອງພໍ່ໃຫ່ຍແປະ ຕັດລົງໃສ່ປ້າຍວັງສະ

ຫງວນ ແລະ ລຽບຕາມເຊບັງຫຽງ ມາໃສ່ປ້າຍວັງສະຫງວນ ແມ່ນສຸດທີ່ມີຊາຍແດນຕິດກັບບ້ານຫົວຫາດ ມີໄລຍະທັງໝົດ 3115 ແມັດ.

**ຕາຕະລາງ ຄ່າພິກັດບ້ານແກ້ງໂດນ ກັບ ບ້ານດອນຂຽວ ກຸ່ມລະບົບ WGS 84**

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48 ) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 536920 | 1792217 | ຂົວແປ້ນ | 0 |
| 2 | 536647 | 1790129 | ປາກຮ່ອງພໍ່ໃຫ່ຍແປະ | 2102 |
| 3 | 536640 | 1789474 | ປ້າຍວັງສະຫງວນ1 | 694 |
| 4 | 536723 | 1789159 | ປ້າຍວັງສະຫງວນ2 | 359 |
| **ລວມໄລຍະ** | | | | 3115 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

3. **ທິດໃຕ້: ບ້ານແກ້ງໂດນ ຕິດກັບ ບ້ານ ໂນນຄຳສູງ:** ເລີ່ມແຕ່ປ້າຍຫວັງສະຫງວນ2 ຕັດຂ້າມຟາກໄປໃສ່ຫ້ວຍຍາງ ແລະ ຫ້ວຍຢາງເອົາຫ້ວຍຍາງເປັນແດນ, ຈົນໄປຮອດປາກຫ້ວຍຄຳມ່ວງໄຂ່ ມີໄລຍະ 4323 ແມັດ.

**ຕາຕະລາງ ຄ່າພິກັດ ບ້ານແກ້ງໂດນ ກັບບ້ານ ໂນນຄຳສູງ ກຸ່ມລະບົບ WGS 84**

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48 ) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 536723 | 1789159 | ປ້າຍວັງສະຫງວນ2 | 0 |
| 2 | 536634 | 1788988 | ປາກຫ້ວຍຍາງ | 193 |
| 3 | 536099 | 1788719 | ຫ້ວຍຍາງ | 597 |
| 4 | 534368 | 1787728 | ປາກຫ້ວຍຄຳມ່ວງໄຂ່ | 3551 |
| **ລວມໄລຍະ** | | | | 4323 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

4. **ທິດຕາເວັນຕົກ: ບ້ານແກ້ງໂດນ ຕິດກັບ ບ້ານໂນນສະຫວ່າງ.**: ເລີ່ມແຕ່ປາກຫ້ວຍຄຳມ່ວງໄຂ່ ລຽບຕາມລຳຫ້ວຍຢາງ ມາຮອດສິ້ນນາພໍ່ເຖົ້າບຸນກອງ, ຕັດຂຶ້ນໃສ່ເຮືອນພໍ່ໃຫ່ຍໂຈມ, ຕັດຂຶ້ນມາໃສ່ປ່າມະເຫສັກ, ລົງຕາມຮ່ອງຖໍ້າພະ ຈົນຮອດປາກຮ່ອງຖໍ້າພະ, ແລ້ວເລາະເຊບັງຫຽງ ຈົນຮອດຫ້ວຍຄຳມູດ ສຸດຊາຍແດນບ້ານແກ້ງໂດນກັບບ້ານໂນນສະຫວ່າງ ມີໄລຍະທັງໝົດ 5298 ແມັດ.

**ຕາຕະລາງ ຄ່າພິກັດ ບ້ານແກ້ງໂດນ ກັບບ້ານ ໂນນສະຫວ່າງ ກຸ່ມລະບົບ WGS 84**

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48 ) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 534368 | 1787728 | ປາກຫ້ວຍຄຳມ່ວງໄຂ່ | 0 |
| 2 | 533534 | 1788201 | ນາພໍ່ເຖົ້າບຸນກອງ | 1902 |

| | | | | |
|---|---|---|---|---|
| 3 | 533060 | 1789060 | ເຮືອນພໍ່ໃຫ່ຍໂຈມ | 982 |
| 4 | 533123 | 1789529 | ປ່າມະເຫສັກ | 255 |
| 5 | 533137 | 1789686 | ປາກຮ່ອງຖໍ້າພະ | 646 |
| 6 | 532662 | 1790838 | ຫ້ວຍຄຳມູດ(ເຊບັງຫຽງ) | 1513 |
| <u>ລວມໄລຍະ</u> | | | | 5298 |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

ດັ່ງນັ້ນ, ອຳນາດການປົກຄອງຂອງ ບ້ານ ແກ້ງໂດນ ແລະ ບ້ານອ້ອມຂ້າງທີ່ກ່ຽວຂ້ອງທີ່ມີເຂດການຄຸ້ມຄອງທີ່ດິນ ລະຫວ່າງບ້ານຕໍ່ບ້ານ, ຈຶ່ງໄດ້ເຮັດບົດບັນທຶກເຂດຄຸ້ມຄອງສະບັບນີ້ຂຶ້ນມາ ເພື່ອຢັ້ງຢືນ ແລະ ເປັນຫຼັກຖານອ້າງອີງໃນຕໍ່ໜ້າ.

ນາຍບ້ານ :ບ້ານແກ້ງໂດນ

ຄຳພອນ, ໄຊຍະວົງ

ຫົວໜ້າທີມງານ.

ຂັນທອງ ອໍລະບຸດນາມມະວົງ

<u>ເຊັນບ້ານອ້ອມຂ້າງ:</u>

ນາຍບ້ານ :ບ້ານ ໜອງເດີ່ນ

ຕຸ້ ຍຸ້ນບົ່ງສາ

ນາຍບ້ານ :ບ້ານ ດອນຂຽວ

ນາຍບ້ານ: ບ້ານ ໂນນຄຳສູງ

ນາຍບ້ານ : ບ້ານ ໂນນສະຫວ່າງ

ແກ້ວຄຳເພັດ ວິໄລນອນ

ນາຍບ້ານ : ບ້ານ ຫົວຫາດ

ວຽງສະຫວັດ ຕີຫາພັນເນີນ

ເຫັນດີ ແລະ ຮັບຮອງຈາກ ເຈົ້າເມືອງ ສອງຄອນ.

ແກ້ວສິນສັກ ພິມມະຈັກ

ຫົວໜ້າຫ້ອງວ່າການ

ເລັດປິຊາ ບຸນນາວົງ

ຫົວໜ້າຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງ

ກັນຍາ ຊານຸລາດ

**ເອກະສານຊ້ອນທ້າຍທີ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ການກໍານົດເຂດ ແລະ ການກໍານົດທີ່ດິນແຕ່ລະປະເພດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງສອງຄອນ

ບ້ານແກ້ງໂດນ ເລກທີ..................

ທີ່ ບ້ານແກ້ງໂດນ, ວັນທີ..................

# ບົດບັນທຶກກອງປະຊຸມ
## ກ່ຽວກັບການວາງແຜນຈັດສັນ, ກໍານົດເຂດ ແລະ ການກໍານົດທີ່ດິນແຕ່ລະປະເພດ

ໃນເວລາ ຕອນບ່າຍ 9:00 ໂມງ, ຂອງວັນທີ 19 ພະຈິກ 2025 ຢູ່ທີ່ບ້ານແກ້ງໂດນ ໄດ້ຈັດກອງປະຊຸມຂຶ້ນເພື່ອປຶກສາຫາລືກ່ຽວກັບການວາງແຜນຈັດສັນ, ກໍານົດຂອບເຂດແດນບ້ານ ແລະ ກໍານົດປະເພດການນໍາໃຊ້ທີ່ດິນຢູ່ເຂດບ້ານແກ້ງໂດນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ໂດຍມີຄະນະທີມງານ ຈາກພະແນກຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງ ອີງຕາມຂໍ້ຕົກລົງທ່ານເຈົ້າເມືອງ ວ່າດ້ວຍການແຕ່ງຕັ້ງພະນັກງານລົງຕິດຕາມ,ຊຸກຍູ້ ແລະ ເຄື່ອນໄຫວ ເພື່ອລົງສໍາຫຼວດ, ເກັບກໍາຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງມີບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ ສະບັບເລກທີ 606/ຈມ ລົງວັນທີ 6 ພະຈິກ 2025 ແລະ ອໍານາດການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ.

ຜ່ານການຄົ້ນຄວ້າ ແລະ ປະກອບຄໍາເຫັນ ຜູ້ເຂົ້າຮ່ວມກອງປະຊຸມໄດ້ຕົກລົງເປັນເອກະພາບ ກ່ຽວກັບການວາງແຜນຈັດສັນ, ກໍານົດຂອບເຂດ, ກໍານົດປະເພດທີ່ດິນ ແລະ ສ້າງແຜນທີ່ການນໍາໃຊ້ທີ່ດິນຂອງບ້ານດັ່ງກ່າວ, ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນຖືກຕ້ອງ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງບ້ານ, ກຸ່ມບ້ານ, ລະບຽບການ ແລະ ເໝາະສົມກັບສະພາບຄວາມເປັນຈິງຂອງບ້ານເພື່ອເຮັດໃຫ້ບ້ານ ກາຍເປັນບ້ານພັດທະນາທາງດ້ານເສດຖະກິດສັງຄົມຢ່າງຮອບດ້ານ.

ດັ່ງນັ້ນ, ອົງການປົກຄອງບ້ານ, ຄະນະກໍາມະການບ້ານ ແລະ ທີມງານຈິ່ງໄດ້ຄົ້ນຄວ້າປຶກສາຫາລືກັນ ແລະ ມີຄວາມເປັນເອກະພາບກັນໃນການກໍານົດເຂດ ແລະ ປະເພດທີ່ດິນຂອງບ້ານແກ້ງໂດນ, ອອກເປັນ **3** ເຂດດັ່ງນີ້:

**1) ເຂດທີ່ດິນອະນຸລັກ**

ບ້ານແກ້ງໂດນ ແມ່ນເປັນເຂດອະນຸລັກຂອງ ບ້ານແກ້ງໂດນ ໄດ້ກໍານົດເອົາທີ່ດິນ 2 ປະເພດຄື:

- **ທີ່ດິນວັດທະນະທໍາລວມມີ:**

1. **ທີ່ດິນປ່າຊ້າ** ມີ 1 ແຫ່ງ ເຊິ່ງຢູ່ພາຍໃນບ້ານຢູ່ທາງເຂົ້າບ້ານ ຢູ່ທາງທິດຕາເວັນຕົກຊ່ຽງໃຕ້ຂອງບ້ານ. 2. **ດິນປ່າມະເຫສັກ** 1 ແຫ່ງ ຢູ່ພາຍໃນບ້ານ ໃຈກາງບ້ານ ແລະ 3.**ດິນວັດ** 1 ແຫ່ງ (ວັດໂພທາດ ສີຣາຮາມ).

- ທີ່ດິນບໍລິເວນນໍ້າມີ:

  1. ເຊບັ້ງຫຽງ

  2. ສາຍຫ້ວຍ 7 ສາຍ ຄື: ຫ້ວຍພໍ່ໃຫ່ຍແປະ, ຫ້ວຍຢາງ, ຫ້ວຍເກາະ, ຫ້ວຍກະເຫຼືອງ, ຫ້ວຍຢາງກຸດ, ຫ້ວຍບ້ານ, ຫ້ວຍທ່າປ່ານ.

**2. ເຂດທີ່ດິນນຳໃຊ້ ຂອງ ບ້ານແກ້ງໂດນ**

ປະຊາຊົນສ່ວນຫຼາຍພາຍໃນບ້ານ ແມ່ນໄດ້ນຳໃຊ້ທີ່ດິນແບບກະແຈກກະຈາຍ, ດິນປຸກສ້າງແມ່ນກວມເອົາເນື້ອທີ່ສ່ວນໃຫຍ່ ໃນນັ້ນມີດິນ ແລະ ດິນປຸກສ້າງທີ່ຢູ່ອາໄສຂອງປະຊາຊົນ, ທີ່ດິນທຳການຜະລິດ ມີເນື້ອທີ່ນາ, ເນື້ອທີ່ສວນ, ສ່ວນຫຼາຍທຳການຜະລິດທັງ 2 ຟາກເຊບັ້ງຫຽງ, ສ່ວນເຂດດິນວັດທະນະທຳພາຍໃນບ້ານປະກອບມີ: ປ່າຊ້າ, ປ່າມະເຫສັກ ແລະ ດິນວັດ.

**3. ເຂດພັດທະນາ**

ໝາຍເຖິງເຂດພື້ນທີ່ຈະຂະຫຍາຍ ລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງຂອງບ້ານເພື່ອຮອງຮັບການເພີ່ມຂື້ນຂອງປະຊາກອນພາຍໃນບ້ານ ໃນອະນາຄົດ ແລະ ເສດຖະກິດຂອງບ້ານ, ການຂະຫຍາຍພື້ນທີ່ດິນດັ່ງກ່າວແມ່ນໄດ້ກຳນົດເອົາ ຈຸດເພື່ອຂະຫຍາຍດິນປຸກສ້າງ,ຂະຫຍາຍເສັ້ນທາງໃນອານາຄົດ ແລະ ກຳນົດຈຸດທຳການຜະລິດຢູ່ພາຍໃນບ້ານ.

**ສຳລັບ ເຂດຫວງຫ້າມ** ໄດ້ກຳນົດເອົາທີ່ດິນບໍລິເວນນ້ຳແຄມເຊບັ້ງຫຽງ, ປ່າຊ້າ ແລະ ທີ່ດິນປ່າມະເຫສັກ.

**I. ການກຳນົດເຂດ ແລະ ປະເພດການນຳໃຊ້ທີ່ດິນ 8 ປະເພດທີ່ດິນ**

**1. ການກຳນົດເຂດທີ່ດິນກະສິກຳ**

ປະຊາຊົນສ່ວນຢູ່ພາຍໃນບ້ານແກ້ງໂດນ ສ່ວນໃຫ່ຍແມ່ນມີອາຊີບ ກະສິກຳເຮັດນາເປັນຕົ້ນ, ປູກຝັງ, ແລະ ເຮັດສວນແບບປະສົມປະສານ ແລະ ການລ້ຽງສັດ ເຂດເຮັດກະສິກຳສ່ວນຫຼາຍແມ່ນຢູ່ກະຈາຍພາຍໃນບ້ານລຽບຕາມສາຍຫ້ວຍ ແລະ ແຄມສາຍເຊບັ້ງຫຽງ,

**2. ການກຳນົດເຂດດິນປຸກສ້າງ**

ເຂດທີ່ດິນປຸກສ້າງ ບ້ານແກ້ງໂດນ ປະກອບມີ: ດິນຫ້ອງການບ້ານ, ດິນໂຮງຮຽນ, ແລະ ດິນປຸກສ້າງທີ່ຢູ່ອາໄສບຸກຄົນ, ສ່ວນຫຼາຍແມ່ນຕັ້ງຢູ່ໃຈກາງບ້ານ ມີເສັ້ນທາງພາຍໃນບ້ານ ເສັ້ນທາງເຂົ້າບ້ານ 1 ເສັ້ນຈົນໄປຮອດເຊບັ້ງຫຽງ, ໄດ້ກຳນົດດິນແຮ່ຂະຫຍາຍປຸກສ້າງໄວ້ເພື່ອອານາຄົດ 1 ແຫ່ງ ຢູ່ໃກ້ກຳບ່ອນສະຫງວນເພື່ອບ່ອນສຳນັກສົງ ແລະ ໄດ້ກຳນົດ ບ່ອນລີ້ໄພເມືອງເວລາມີນ້ຳຖ້ວມຕ່າງໆ 1 ແຫ່ງຢູ່ໃຈກາງບ້ານ.

**3. ການກຳນົດທີ່ດິນວັດທະນາທຳ**

ປະຊາຊົນພາຍໃນ ບ້ານແກ້ງໂດນ ແມ່ນໄດ້ນັບຖືສາສະໜາພຸດ, ສະນັ້ນ ດິນວັດທະນາທຳ ບ້ານແກ້ງໂດນຈິ່ງມີຢູ່ 3 ແຫ່ງ ຄື: ປ່າມະເຫສັກ 1 ແຫ່ງ, ປ່າຊ້າ 1ແຫ່ງ, ວັດ 1ແຫ່ງ ແລະ ບ່ອນສະຫງວນໄວ້ເຮັດສຳນັກສົງ 1 ແຫ່ງ ຄື: ຈຸດທີ 1 ປ່າມະເຫສັກແມ່ນຕັ້ງຢູ່ດ້ານທິດຕາເວັນຕົກຂອງບ້ານມີເນື້ອທີ່ບໍ່ຫຼາຍ, ຈຸດທີ 2 ປ່າຊ້າແມ່ນຕັ້ງຕັ້ງທາງເຂົ້າບ້ານຢູ່ທາງທິດຕາເວັນຕົກຊ່ຽງໃຕ້ຂອງບ້ານ, ຈຸດທີ 3 ແມ່ນ ດິນວັດ ແມ່ນຕັ້ງຢູ່ໃຈກາງຂອງບ້ານ, ຈຸດທີ 4 ແມ່ນບ່ອນສະຫງວນໄວ້ເຮັດສຳນັກສົງ ແມ່ນຕັ້ງຢູ່ໃຈກາງຂອງບ້ານໃກ້ກັບໜອງປາຝາ.

**4. ການກຳນົດດິນ ປກສ-ປກຊ**

ການກຳນົດທີ່ດິນ ປກສ-ປກຊ ຢູ່ພາຍໃນບ້ານແກ້ງໂດນແມ່ນບໍ່ມີຫ້ອງການ ຕຳຫຼວດ-ທະຫານ ຈຶ່ງບໍ່ໄດ້ກຳນົດ.

**5. ການກຳນົດທີ່ດິນປ່າໄມ້**

ທີ່ດິນປ່າໄມ້ຂອງບ້ານແກ້ງໂດນ, ສ່ວນໃຫຍ່ແມ່ນເປັນປ່າເລົ່າທີ່ປະຊາຊົນຈັບຈອງນຳໃຊ້ລ້ຽງສັດ ແລະ ທຳການຜະລິດ ແລະ ບ້ານແກ້ງໂດນ ຢູ່ຟາກເຊແມ່ນໄດ້ຖືກ ເຂດປ່າຜະລິດຂອງແຂວງ ດັ່ງນັ້ນທາງອຳນາດການປົກຄອງບ້ານໄດ້ມີການກຳນົດ ປ່າສະຫງວນບ້ານ ຢູ່ 2 ແຫ່ງ ຢູ່ຟາກເຊເບື້ອງນັ້ນ ເພື່ອຮັກສາລະບົບນິດເວດຂອງບ້ານໄວ້.

**6. ການກຳນົດເຂດທີ່ອຸດສາຫະກຳ**

ການກຳນົດທີ່ດິນອຸດສາຫະກຳ ຢູ່ພາຍໃນບ້ານແກ້ງໂດນ ແມ່ນບໍ່ມີໂຮງຈັກໂຮງງານ ຈຶ່ງບໍ່ໄດ້ກຳນົດ.

**7. ການກຳນົດນົດທີ່ດິນຄົມມະນາຄົມ**

ແມ່ນໄດ້ກຳນົດເອົາ 1 ເສັ້ນຄື: ເສັ້ນທີ 1 ແມ່ນ ຄືທາງເຂົ້າບ້ານຕິດທາງ 13ໃຕ້ ຈົນມາຮອດວັດຂອງບ້ານ ແມ່ນໄດ້ກຳນົດເອົາ ເບື້ອງລະ 6 ແມັດ ຈາກໃຈກາງທາງ, ສ່ວນທາງນ້ອຍຕ່າງໆພາຍໃນບ້ານແມ່ນຫຍັງບໍ່ທັນໄດ້ກຳນົດ.

**8. ການກຳນົດນົດທີ່ດິນບໍລິເວນນ້ຳ**

ແມ່ນໄດ້ກຳນົດເອົາ ສາຍເຊບັ້ງຫຽງ, ຫ້ວຍ, ໜອງທຳມະຊາດ ພາຍໃນບ້ານມີ ເຊບັ້ງຫຽງ 01 ແຫ່ງ, ໜອງທຳມະຊາດ ຫຼາຍແຫ່ງ, ແລະ ມີຫ້ວຍ ຄື: ຫ້ວຍພໍ່ໃຫ່ຍແປະ, ຫ້ວຍຢາງ, ຫ້ວຍເກາະ, ຫ້ວຍກະເຫຼືອງ, ຫ້ວຍຢາງກຸດ, ຫ້ວຍບ້ານ, ຫ້ວຍທ່າປ່ານ.

- ເຊບັ້ງຫຽງ ແມ່ນເຊິ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 25 ແມັດ ເພື່ອປ້ອງກັນການເຊາະເຈື່ອນຂອງດິນໃນອານາຄົດ.
- ໄດ້ກຳນົດວັງສະຫງວນຂອງບ້ານ ຢູ່ທາງທິດໃຕ້ຂອງບ້ານ.

ດັ່ງນັ້ນຈຶ່ງໄດ້ເຮັດເປັນບົດບັນທຶກ ການວາງແຜນຈັດສັນ, ກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ ໃຫ້ທ່ານໄດ້ຮັບຊາບ ແລະ ເປັນບ່ອນອີງໃນຂັ້ນຕໍ່ໄປ

ທີ່ບ້ານແກ້ງໂດນ, ວັນທີ ..........................

| ນາຍບ້ານແກ້ງໂດນ | ຄະນະທີມງານວິຊາການ |
|---|---|
| | 1. .................... |
| | 2. .................... |
| | 3. .................... |
| | 4. .................... |
| | 5. .................... |
| | 6. .................... |
| | 7. .................... |
| | 8. .................... |
| | 9. .................... |
| | 10. .................... |

ເອກະສານຊ້ອນທ້າຍທີ 4: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດກ່ຽວກັບການລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສະຫວັນນະເຂດ

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ເລກທີ.1343 ກສຂ.

ສະຫວັນນະເຂດ, ວັນທີ 24.ພ.ຈ.ກ.2025

## ຂໍ້ຕົກລົງ

### ວ່າດ້ວຍການແຕ່ງຕັ້ງພະນັກງານໄປຮ່ວມກອງປະຊຸມ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດ ລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
- ອີງຕາມ ໜັງສືເຊີນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງສອງຄອນ ສະບັບເລກທີ 478/ຫຊສ, ລົງວັນທີ 10 ພະຈິກ 2025.

**ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

**ມາດຕາ 1** ເຫັນດີ ແຕ່ງຕັ້ງພະນັກງານວິຊາການ ພະແນກກະສິກຳ ແລະ ສິ່ງແວດລ້ອມ ເຂົ້າຮ່ວມກອງປະຊຸມນຳສະເໜີຈຸດປະສົງຂັ້ນບ້ານ ເພື່ອແນະນຳກ່ຽວກັບການຈັດສັນທີ່ດິນ 08 ປະເພດຂັ້ນບ້ານ ແລະ ລົງສຳຫຼວດຈັດສັນທີ່ດິນຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ຢູ່ເມືອງສອງຄອນ ໃນລະຫວ່າງ ວັນທີ 13 ພະຈິກ - 07 ທັນວາ 2025 ມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນທະວີ ວິຊຽນ — ວິຊາການຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ
2. ທ່ານ ສີສະຫວັນ ໄຊຍະວົງ — ວິຊາການຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ
3. ທ່ານ ນ.ປານຄຳ ສຸວັນນາລີ — ວິຊາການຂະແໜງຊັບພະຍາກອນນ້ຳ,ອຸຕຸນິຍົມ-ອຸທົກກະສາດ.

**ມາດຕາ 2** ຜູ້ທີ່ຖືກແຕ່ງຕັ້ງຕາມ ມາດຕາ 01 ມີໜ້າທີ່ປະຕິບັດໜ້າວຽກຂອງຕົນໃຫ້ສຳເລັດຜົນເປັນຢ່າງດີ.

- ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ກ່ຽວຕາມຄວາມເໝາະສົມ,ພາຍຫຼັງສຳເລັດວຽກງານແລ້ວ ລາຍງານຄືນໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ;
- ສຳລັບງົບປະມານແມ່ນນຳໃຊ້ ຂອງໂຄງການດັ່ງກ່າວ.

**ມາດຕາ 3** ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ພະແນກ ກະສິກຳ ແລະ ສິ່ງແວດລ້ອມ
ແຂວງສະຫວັນນະເຂດ

ບູລິກາ ອິນທິລາດ

ເອກະສານຊ້ອນທ້າຍທີ 5: ຂໍ້ຕົກລົງທ່ານເຈົ້າເມືອງສອງຄອນວ່າດ້ວຍການແຕ່ງຕັ້ງພະນັກງານ ລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າເມືອງ

ເລກທີ...606.../ຈມ

ເມືອງສອງຄອນ, ວັນທີ06......ພະຈິກ 2025

## ຂໍ້ຕົກລົງ

ຂອງທ່ານເຈົ້າເມືອງສອງຄອນ

ວ່າດ້ວຍການແຕ່ງຕັ້ງພະນັກງານລົງຕິດຕາມຊຸກຍູ້ ແລະ ເຄື່ອນໄຫວວຽກງານຂອງໂຄງການ ຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນການອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ເພື່ອລົງສຳຫຼວດເກັບກຳຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນຄື:

ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015 ພາກທີ IV ໝວດທີ IV ມາດຕາ 40 ຂໍ້ທີ 7.
- ອີງຕາມ ໜັງສືສະເໜີຂອງຫ້ອງການ ຊສ ເມືອງ ສະບັບເລກທີ 446, ລົງວັນທີ 20/10/2025 ເພື່ອລົງສຳຫຼວດເກັບກຳຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນ.
- ອີງຕາມ ແຜນກິດຈະກຳການສຳຫຼວດຈັດສັນທີ່ດິນ 8 ປະເພດ ຂອງບ້ານເປົ້າໝາຍ 3 ບ້ານເປົ້າໝາຍຂອງ ເມືອງສອງຄອນຄື: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້.

## ເຈົ້າເມືອງ ຕົກລົງ:

ມາດຕາ 01: ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມປະກອບມີ:

| | | |
|---|---|---|
| 1. ທ່ານ ແກ້ວສົມສັກ ພົມມະຈັກ | ຮອງເຈົ້າເມືອງ | ປະທານ |
| 2. ທ່ານ ເລີດປັນຍາ ບຸນມາວົງ | ຫົວໜ້າຫ້ອງວ່າການເມືອງ | ຮອງປະທານ |
| 3. ທ່ານ ກັນຍາ ຊານຸລາດ | ຫົວໜ້າຫ້ອງການກະສິກຳເມືອງ | ຄະນະ |
| 4. ທ່ານ ຂັນທອງ ວໍລະບຸດນາມມະວົງ | ຮອງຫົວໜ້າຫ້ອງການ ຊສ ເມືອງ | ຄະນະ |
| 5. ທ່ານ ອຳພາວັນ ດອກກຸສົນ | ຮອງຫົວໜ້າຫ້ອງການ ຍທຂ ເມືອງ | ຄະນະ |
| 6. ນາງ ພຸມສະຫວັນ ລາດວົງສາ | ປະທານສະຫະພັນແມ່ຍິງເມືອງ | ຄະນະ |
| 7. ທ່ານ ເພັດສ່ອງແສງ ສຸລິກາ | ການຫ້ອງວັດທະນະທຳ ແລະ ທ່ອງທ່ຽວ | ຄະນະ |

ມາດຕາ 02 : ແຕ່ງຕັ້ງ ພະນັກງານ ລົງຕິດຕາມຊຸກຍູ້ ແລະ ເຄື່ອນໄຫວວຽກງານຂອງໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ເພື່ອລົງສໍາຫຼວດເກັບກໍາຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າຫມາຍຂອງເມືອງສອງຄອນ: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ປະກອບມີລາຍຊື່ດັ່ງນີ້:

1. ທ່ານ ພູສອນມະໄລ ພົວໂສດາລິດ ຫ້ອງການ ຊສ ເມືອງ
2. ທ່ານ ບັນດິດ ຈັນທະລືໄຊ ຫ້ອງການ ຊສ ເມືອງ
3. ທ່ານ ຄໍາພູວັນ ແກ້ວອມະນີໃສ ຫ້ອງການ ຊສ ເມືອງ
4. ທ່ານ ພູດົງ ມູນລະວົງ ຫ້ອງການກະສິກໍາເມືອງ
5. ທ່ານ ນາຍບ້ານທັງ 3 ບ້ານ ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້
6. ປະທ່ານກຸ່ມ 3 ບ້ານ ຄື: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້

ມາດຕາ 03: ມອບໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ, ບັນດາຫ້ອງການທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນປະສານ ສົມທົບເພື່ອຈັດຕັ້ງປະຕິບັດ, ພາຍຫຼັງສໍາເລັດແລ້ວໃຫ້ລາຍງານການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ.

ມາດຕາ 04 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນໍາໃຊ້ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າເມືອງ

ແກ້ວສິນສັກ ພິມມະຈັກ

ເອກະສານຊ້ອນທ້າຍທີ 6: ບົດບັນທຶກກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ກອງປະຊຸມ ປຶກສາຫາລື ຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍ (ບ້ານຫ້ວຍຄໍ້, ບ້ານແກ້ງໂດນ ແລະ ບ້ານສອງຄອນ) ເມືອງສອງຄອນ, ແຂວງສະຫວັນນະເຂດ

ໃນຕອນເຊົ້າຂອງ ວັນທີ 08 ທັນວາ 2025 ເວລາ 9:00 ໂມງ ທີ່ ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງສອງຄອນ ແຂວງສະຫວັນນະເຂດ, ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ (ຫກສ) ໄດ້ຈັດກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍ ຂອງເມືອງສອງຄອນ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ ຂຶ້ນ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ແກ້ວສິມສັກ ພິມມະຈັກ ຮອງປະທານຄະນະກຳມະການປົກຄອງເມືອງສອງຄອນ ໃຫ້ກຽດກ່າວເປີດກອງປະຊຸມ. ຫຼັງຈາກນັ້ນ ທ່ານ ບຸລິກາ ອິນທິລາດ ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ເປັນປະທານຮ່ວມ ມີພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ: ພະແນກກະສິກຳ ແລະ ສິ່ງແວດລ້ອມ (ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ຂະແໜງຊັບພະຍາກອນນ້ຳ-ອຸຕຸນິຍົມ ແລະ ຂະແໜງຄຸ້ມຄອງແຂວງ), ຄະນະຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມວິຊາການ ແລະ ຫ້ອງການອ້ອມຂ້າງຂອງເມືອງສອງຄອນ, ຄະນະບ້ານ 3 ບ້ານເປົ້າໝາຍໂຄງການ (ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ). ນອກຈາກນີ້ຍັງມີພະນັກງານໂຄງການພາກສະໜາມປະຈຳແຂວງ ຂອງ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ຊຶ່ງມີຜູ້ເຂົ້າຮ່ວມ ລວມທັງໝົດ ຈຳນວນ 43 ທ່ານ, ຍິງ ...4.... ທ່ານ (ລາຍຊື່ຜູ້ເຂົ້າຮ່ວມຄັດຕິດມາພ້ອມນີ້).

ຈຸດປະສົງ ຂອງກອງປະຊຸມຄັ້ງນີ້ ເພື່ອຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານເປົ້າໝາຍ. ພາຍຫຼັງປະທານໄດ້ກ່າວເປີດ ແລະ ໃຫ້ຄຳເຫັນຕໍ່ກອງປະຊຸມແລ້ວຜູ້ເຂົ້າຮ່ວມກໍ່ໄດ້ຮັບຟັງການນຳສະເໜີລາຍງານສະພາບລວມຂອງໂຄງການ IWRM-EbA ແລະ ນຳສະເໜີຂະບວນການສ້າງ ແລະ ເນື້ອໃນຂອງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວ (ເຫດຜົນຄວາມຈຳເປັນຂອງການສ້າງແຜນຈັດສັນການນຳໃຊ້ທີ່ດິນ, ວິທີການສຳຫຼວດ, ເກັບກຳຂໍ້ມູນການຈັດສັນທີ່ດິນ 8 ປະເພດ ພາຍໃນ 3 ບ້ານເປົ້າໝາຍ, ໂຄງປະກອບໂດຍລວມ ແລະ ເນື້ອໃນຕົ້ນຕໍປະກອບດ້ວຍ ແປດ ພາກ ດັ່ງນີ້: ພາກທີໜຶ່ງ ແມ່ນ ໄດ້ກຳນົດຈຸດປະສົງ, ລະດັບຄາດໝາຍ, ຂັ້ນຕອນໃນການຈັດຕັ້ງປະຕິບັດ ແລະ ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ, ພາກທີສອງ ແມ່ນການລາຍງານ ສະພາບລວມຂອງບ້ານ, ທີ່ຕັ້ງພູມສັນຖານ, ດ້ານການປົກຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານວັດທະນະທຳ ແລະ ຮີດຄອງປະເພນີ, ພາກທີສາມ ແມ່ນການສະພາບການນຳໃຊ້ທີ່ດິນປະຈຸບັນ, ການກຳນົດຈຸດທີ່ຕັ້ງຂອງບ້ານ, ເຂດຄຸ້ມຄອງຂອງບ້ານ, ພາກທີສີ່ ແມ່ນການກຳນົດເຂດທີ່ດິນຂອງບ້ານ (ເຂດທີ່ດິນອະນຸລັກ, ເຂດທີ່

ດິນນຳໃຊ້, ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ), ການກຳນົດປະເພດທີ່ດິນຂອງບ້ານ, ພາກທີຫ້າ ແມ່ນການການກຳນົດທ່າແຮງໃນການພັດທະນາທີ່ດິນຂອງບ້ານ ແລະ ການຈັດບູລິມະສິດໂຄງການພັດທະນາທີ່ດິນຂອງບ້ານໃນນະຫວ່າງ, ພາກທີຫົກ ແມ່ນການກຳນົດລະບຽບການໃລະບຽບໃນການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ (ການຄຸ້ມຄອງ ທີ່ດິນກະສິກຳ, ທີ່ດິນປູກສ້າງ, ທີ່ດິນວັດທະນາທຳ, ທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ, ທີ່ດິນປ່າໄມ້, ທີ່ດິນໂຍທາທິການ ແລະ ຂົນສົ່ງ ແລະ ທີ່ດິນບໍລິເວນນ້ຳ), ພາກທີເຈັດແມ່ນການຫັນປ່ຽນປະເພດທີ່ດິນ ແລະ ພາກທີ່ແປດແມ່ນກຳນົດກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ. ພາຍຫຼັງຮັບຟັງການລາຍງານແລ້ວຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນ ຢ່າງກົງໄປກົງມາ ແລະ ຄຳສະເໜີ ດັ່ງນີ້:

- ສະເໜີໃຫ້ຄະນະຮັບຜິດຊອບຈັດສັນທີ່ດິນຂັ້ນເມືອງສົມທົບແຂວງ ປັບປຸງແຜນທີ່ຈັດສັນທີ່ດິນບ້ານຫ້ວຍຄໍ້ ແລະ ແກ້ງໂດນ ໃຫ້ຄົບ 8 ປະເພດທີ່ດິນຕາມກົດໝາຍກຳນົດ;
- ສຳລັບບ້ານສອງຄອນແມ່ນໃຫ້ເອົາຕາມໂຄງການຊີວະນາໆພັນກຳນົດແລ້ວປ່ຽນຊື່ແຜນທີ່ ແລະ ເພີ່ມໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂລໂກ້ IWRM-EbA, ໂລໂກ້ gef ແລະ ໂລໂກ້ UNDP ເຂົ້າຮ່ວມກັບໂລໂກຂອງພາກສ່ວນສະໜັບສະໜູນໂຄງການຊີວະນາໆພັນເຂດດິນບໍລິເວນນ້ຳ.
- ໃຫ້ປຸງແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ແລະ ແຜນທີ່ຈັດສັນທີ່ດິນ 8 ປະເພດທີ່ດິນ ໃຫ້ເອົາຊື່ປະເພດທີ່ດິນຕາມກົດໝາຍຄື: 1. ທີ່ດິນກະສິກຳ; 2. ທີ່ດິນປ່າໄມ້; 3. ທີ່ດິນບໍລິເວນນ້ຳ; 4. ທີ່ດິນອຸດສາຫະກຳ; 5. ທີ່ດິນຄົມມະນາຄົມ; 6. ທີ່ດິນວັດທະນະທຳ; 7. ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; 8. ທີ່ດິນປຸກສ້າງ.
- ບ້ານໜຶ່ງ ມີ 3 ແຜນທີ ສຳລັບເບື້ອງເທິງແຜນທີ່ແຕ່ລະແຜ່ນໃຫ້ໃສ່ໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມດ້ວຍໂຄງການ IWRM-Eba (ເບື່ອງຊ້າຍມື) ກາງເຄິ່ງໃຫ້ຂຽນຊື່ແຜນທີ່ທັງພາສາລາວ ແລະ ອັງກິດໃສ່ ແລະ ເບື້ອງຂວາມືໃຫ້ໃສ່ໂລໂກ້ gef ແລະ ໂລໂກ້ UNDP:
- ສະເໜີໃຫ້ຄະນະຮັບຜິດຊອບຂັ້ນເມືອງເລັ່ງປັບປຸງ ພ້ອມທັງເອົາຂໍ້ມູນເຂົ້າແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍໃຫ້ສຳເລັດໂດຍໄວ.

**ສະຫຼຸບ:**

ປະທານໄດ້ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ໂດຍສະເພາະກໍ່ແມ່ນ ຄະນະຮັບຜິດຊອບສ້າງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານໃຫ້ກວດກາ ແລະ ຮຽບຮຽງຄືນບັນດາຄຳສັບ, ໄວຍາກອນໃນການຂຽນແຜນ, ປັບປຸງແຜນທີຈັດສັນທີ່ດິນບ້ານຫ້ວຍຄໍ້ ແລະ ແກ້ງໂດນໃຫ້ຄົບ 8 ປະເພດທີ່ດິນໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ແທດເໝາະກັບສະພາບຕົວຈິງ ສຳລັບບ້ານສອງຄອນແມ່ນໃຫ້ເອົາຕາມໂຄງການຊີວະນາໆພັນກຳນົດແລ້ວປ່ຽນຊື່ແຜນທີ່ ແລະ ເພີ່ມໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂລໂກ້ IWRM-EbA, ໂລໂກ້ gef ແລະ ໂລໂກ້ UNDP ເຂົ້າຮ່ວມກັບໂລໂກຂອງພາກສ່ວນສະໜັບສະໜູນໂຄງການຊີວະນາໆພັນເຂດດິນບໍລິເວນນ້ຳ. ພາຍຫຼັງປັບປຸງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວນີ້ສຳເລັດແລ້ວ ໃຫ້ ຫຊສ ເມືອງສອງຄອນ ເຮັດໜັງສືລາຍງານ ພ້ອມທັງຂໍ້ຕົກລົງເພື່ອນຳສະເໜີທ່ານເຈົ້າເມືອງສອງຄອນພິຈາລະຮັບຮອງ ແລະ ປະກາດນຳໃຊ້ແຜນຈັດສັນການນຳໃຊ້ທີ່ດິນສະບັບດັ່ງກ່າວນີ້ໃຫ້ມີປະສິດທິພາບ, ປະສິດທິຜົນສູງ.

ຄຽງຄູ່ກັນນີ້, ຄະນະຮັບຜິດຊອບຂັ້ນເມືອງຍັງຈະໄດ້ມີການຈັດພິມປຶ້ມແຜນຈັດສັນການນຳໃຊ້ທີ່ດິນບ້ານ, ພິມປ້າຍແຜນທີຈັດສັນການນຳໃຊ້ທີ່ດິນ 3 ບ້ານເປົ້າໝາຍໃຫ້ສຳເລັດຕາມໄລຍະເວລາກຳນົດ.

ນອກຈາກນີ້ກອງປະຊຸມຍັງໄດ້ມອບໃຫ້ການຈັດຕັ້ງບ້ານເປົ້າໝາຍໂຄສະນາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນພາຍໃນບ້ານ ແລະ ບ້ານໃກ້ຄຽງທີ່ມີຊາຍແດນຕິດຈອດໄດ້ຮັບຮູ້ຂໍ້ມູນຂ່າວສານ ແລະ ເຂົ້າໃຈກ່ຽວກັບປະເພດການນຳໃຊ້ທີ່ດິນເປັນແຕ່ລະໄລຍະ.

ກອງປະຊຸມດັ່ງກ່າວໄດ້ປິດລົງຢ່າງເປັນທາງການ ໃນເວລາ 16:30 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ.

ທີ່ ເມືອງສອງຄອນ, ວັນທີ 08 ທັນວາ 2025

| ປະທານກອງປະຊຸມ | ຜູ້ບັນທຶກ |
|---|---|
| ເລີດປີຊາ ບຸນນາວົງ | ທູສ້ອນມະໄລ ຜິວໄສດາລິດ |

| ຮອງປະທານຄະນະກຳມະການປົກຄອງເມືອງສອງຄອນ | ຮັກສາການ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ |
|---|---|
| ແກ້ວສິນສັກ ພົມມະຈັກ | ຂັນທອງ ວໍລະບຸດນາມມະວົງ |

ເອກະສານຊ້ອນທ້າຍທີ 7: ໜັງສືສະເໜີ ກ່ຽວກັບພິຈາລະນາອະນຸມັດແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງສອງຄອນ
ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ເລກທີ...497.../ຫກສມ
ເມືອງ ສອງຄອນ, ວັນທີ 12/12/25

## ໜັງສືສະເໜີ

**ຮຽນ:** ທ່ານເຈົ້າເມືອງໆ ເມືອງ ສອງຄອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ສະເໜີ ພິຈາລະນາອະນຸມັດແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານ ຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025;
- ອີງຕາມ ບົດບັນທຶກກອງປະຊຸມຜ່ານແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານ ຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງພາຍໃນເມືອງສອງຄອນ, ແຂວງສະຫວັນນະເຂດ, ຄັ້ງວັນທີ 08 ທັນວາ 2025.

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022. ໄລຍະຜ່ານມາຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການຂັ້ນແຂວງ ແລະ ເມືອງໄດ້ປະສານສົມທົບກັບລົງການສຳຫຼວດຈັດສັນການນຳໃຊ້ທີ່ດິນ 8 ປະເພດ ຂອງ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ ເລີ່ມແຕ່ ເດືອນ ພະຈິກ ຫາ ເດືອນ ທັນວາ ປີ 2025 ເປັນຕົ້ນມາຈົບສຳເລັດ.

ມາຮອດປະຈຸບັນ ຄະນະຮັບຜິດຊອບໂຄງການຂັ້ນແຂວງ ແລະ ເມືອງໄດ້ຮ່າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ພ້ອມທັງໄດ້ມີການປຶກສາຫາລືກັບຂະແໜງການກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ອຳນາດການປົກຄອງບ້ານ ລວມທັງປະຊາຊົນທັງໝົດພາຍໃນບ້ານເປົ້າໝາຍເຫັນດີເປັນເອກະພາບ. ນອກຈາກນີ້ ຄະນະທີມງານຍັງໄດ້ມີການປັບປຸງ ແລະ ຮຽບຮຽງຄືນບັນດາເນື້ອໃນຂອງຮ່າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ໄດ້ສຳເລັດຮຽບຮ້ອຍ ຕາມຄຳເຫັນຂອງບັນດາຜູ້ເຂົ້າຮ່ວມປະຊຸມ.

ສະນັ້ນ, ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນສູງ ຈຶ່ງຂໍຮຽນສະເໜີມາຍັງທ່ານເຈົ້າເມືອງງສອງຄອນ ພິຈາລະນາລົງລາຍເຊັນໃສ່ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ (ລາຍລະອຽດເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານ ແລະ ສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ.

ຮກ ຫົວໜ້າຫ້ອງການ

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ

ຂັນທອງ ວໍລະບຸດນາມມະວົງ

**ເອກະສານຄັດຕິດ:**

1. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ 1 ສະບັບ;
2. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ 1 ສະບັບ;
3. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນ 1 ສະບັບ;
4. ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ 3 ສະບັບ;
5. ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ 3 ສະບັບ;
6. ແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນ 3 ສະບັບ.

**ຈັດຕັ້ງປະຕິບັດໂດຍ:**

**ສະໜັບສະໜູນໂດຍ:**

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ
ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ

## "ບ້ານຫ້ວຍຄໍ້" ເມືອງ ສອງຄອນ, ແຂວງ ສະຫວັນນະເຂດ




## ກະກຽມໂດຍ:

**ຫ້ອງການ ກະສິກໍາ ແລະ ສິ່ງແວດລ້ອມ ເມືອງສອງຄອນ**

**ທັນວາ 2025**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າເມືອງ

ເລກທີ 668 /ຈມ
ເມືອງສອງຄອນ, ວັນທີ 16 ທັນວາ 2025

# ຂໍ້ຕົກລົງ
## ຂອງເຈົ້າເມືອງ ສອງຄອນ
## ວ່າດ້ວຍ ການຮັບຮອງ ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້, ເມືອງສອງຄອນ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນ ຂອງ ບ້ານຫ້ວຍຄໍ້, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ, ສະບັບເລກທີ 497/ຫກສມ, ວັນທີ 12 ທັນວາ 2025.

## ເຈົ້າເມືອງຕົກລົງ:

ມາດຕາ 1: ເຫັນດີຮັບຮອງແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025.

ມາດຕາ 2: ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດ ໄປຕາມແຜນທີ່ກຳນົດໄວ້ ແລະ ແຜນສະບັບນີ້ ເປັນນິຕິກຳຄຸ້ມຄອງ ເພື່ອຮັບປະກັນສິດໃນການນຳໃຊ້ໃນອານາຄົດ.

ມາດຕາ 3 : ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຜນການດັ່ງກ່າວ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມຮັບປະກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກຳ ແລະ ປ່າໄມ້, ທຸກການປ່ຽນແປງ ຫຼື ການຫັນປ່ຽນປະເພດການນຳໃຊ້ທີ່ດິນ ຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກຳນົດ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າເມືອງ

ທ່ານ ສົມສັກ ພົມມະຈັກ

# ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2022 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະ ນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນບ້ານຫວ້ຍຄໍ້ ສະບັບນີ້ ຈະເປັນເອກະສານນິຕິກຳພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານຫ້ວຍຄໍ້ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ, ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ ແລະ ອົງການປົກຄອງເມືອງສອງຄອນ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເອດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ສະບັບນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງສອງຄອນ, ວັນທີ 12 ທັນວາ 2025

ຫົວໜ້າຫ້ອງການ

ກັນຍາ ຊານຸລາດ

# ສັງລວມຫຍໍ້

ບ້ານຫ້ວຍຄໍ້ ຕັ້ງຫ່າງຈາກເທດສະບານເມືອງສອງຄອນ ໄປທາງທາງໃຈກາງຂອງເມືອງ, ມີໄລຍະທາງແຕ່,ບ້ານຫ້ວຍຄໍ້ ຕັ້ງຢູ່ທາງທິດຕາເວັນອອກສຽງເໜືອ ຫ່າງຈາກເທດສະບານເມືອງປະມານ 51 ກມ ຂອງເມືອງສອງຄອນ ແຂວງສະຫວັນນະເຂດ, ຈັດຢູ່ໃນກຸ່ມບ້ານທີ 10 ຂອງເມືອງ. ມີເນື້ອທີ່ທັງໝົດ ມີ 4,490.94 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງສອງຄອນດັ່ງຂໍ້ມູນລະອຽດລຸ່ມນີ້: ທິດເໜືອ: ຕິດກັບ ບ້ານຫາດຈະເລີນຄໍາ, ທິດຕາເວັນອອກ: ຕິດກັບບ້ານຫ້ວຍໄຂ່, ທິດໃຕ້: ຕິດກັບບ້ານໜອງຂອນ, ບ້ານໂນນເຕົາຖ່ານ ແລະ ບ້ານໜອງຄັນຍູ ທິດຕາເວັນຕົກ: ຕິດກັບ ບ້ານດອນຂຽວ ແລະ ບ້ານດອນມ່ວງ.

ບ້ານ ຫ້ວຍຄໍ້ ມີ 1 ຊົນເຜົ່າຄື: ຊົນເຜົ່າ ລາວ, ປະຊາຊົນສ່ວນໃຫ່ຍນັບຖື ສາດສະໜາພຸດ 100%, ປະກອບມີ 170 ຫຼັງຄາເຮືອນ, ມີ 296 ຄອບຄົວ ມີພົນລະເມືອງທັງໝົດ 937 ຄົນ, ຍິງ 456 ຄົນ. ຊາວບ້ານປະກອບອາຊີບກະສິກໍາເປັນຕົ້ນຕໍຄື: ແມ່ນຢຶດຖືເອົາການເຮັດນາ, ສາຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຂອງປະຊາຊົນພາຍໃນບ້ານ ແມ່ນມາຈາກ 2 ແຫຼ່ງຕົ້ນຕໍຄື: ແມ່ນອາຊີບເຮັດນາ, ເຮັດໄຮ, ປຸກມັນຕົ້ນຕົ້ນເປັນຕົ້ນຕໍ ແລະ ອື່ນໆ.

ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ ບ້ານຫ້ວຍຄໍ້ ປະກອບມີ 7 ປະເພດການນໍາໃຊ້ຫຼັກ ຊຶ່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກໍາ ມີເນື້ອທີ່ 489.75 ເຮັກຕາ ກວມເອົາ 10,91 % (ໃນນີ້ ດິນນາ ແລະ ດິນປູກພືດກະສິກໍາທົ່ວໄປ), ເຂດດິນປຸກສ້າງ ມີເນື້ອທີ່ 462.32 ເຮັກຕາ ກວມເອົາ 10.29% (ໃນນີ້ມີດິນປຸກສ້າງບຸກຄົນ, ດິນປຸກສ້າງລັດເປັນຈໍານວນຫຼາຍ, ສຸກສາລາ, ໂຮງຮຽນ, ຫ້ອງການຈຸດສຸມ, ໂຮງຮຽນປະຖົມ, ດິນໂຮງຮຽນ, ຫໍພັກຈຸດສຸມ, ປຸກສ້າງຕະຫຼາດ, ດິນແຮ່ລວມຂອງບ້ານ ແລະ ດິນແຮ່ຂະຫຍາຍປຸກສ້າງ ), ທີ່ດິນວັດທະນະທໍາ ມີເນື້ອທີ່ 11,72 ເຮັກຕາ ກວມເອົາ 0,26% (ໃນນີ້, ມີປ່າມະເຫສັກ ແລະ ປ່າຊ້າ) ເຂດທີ່ດິນ ປ້ອງກັນຊາດ ແລະ ປ້ອງກັນຄວາມສະງົບ ມີເນື້ອທີ່ 12,14 ເຮັກຕາ ກວມເອົາ 0,27% , ເຂດດິນປ່າໄມ້ ມີເນື້ອທີ່ 2965,87 ເຮັກຕາ ກວມເອົາ 66,04 (ໃນນີ້, ມີປ່າຜະລິດຂອງແຂວງ ແລະ ປ່າສະຫງວນຂອງບ້ານ ), ທີ່ດິນໂຍທາທິການ 26,56 ເຮັກຕາ. ກວມເອົາ 0,59% (ໃນນີ້, ເສັ້ນທາງພາຍໃນບ້ານ, ທາງເຊື່ອມຕໍ່ລະຫວ່າງບ້ານ, ດິນສະຫງວນທາງ) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 179,55 ເຮັກຕາ ກວມເອົາ 4.00% (ໃນນີ້, ເຊບັ້ງຫຽງ, ສາຍຫ້ວຍ, ໜອງທໍາມະຊາດ ຫຼາຍແຫຼ່ງ ແລະ ມີ 09 ຫ້ວຍ ຄື: ຫ້ວຍໄຂ່, ຫ້ວຍຄໍ້, ຫ້ວຍໄລ່, ຫ້ວຍເປາະ, ຫ້ວຍຫວ້າ, ຫ້ວຍປີ່ງ, ຫ້ວຍຫີນເສືອ, ຫ້ວຍເຮືອ, ຫ້ວຍຍາກ ແລະ ມີ ໜອງລວມບ້ານ 2 ແຫ່ງຢູ່ໃກ້ກັບລໍາຫ້ວຍໄຂ່.).

ພາຍຫຼັງຖືກຮັບຮອງ ແລະ ປະກາດນໍາໃຊ້ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງກະສິກໍາ ແລະ ສິ່ງແວດລ້ອມເມືອງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ຮ່ວມກັບຄະນະກໍາມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສໍາຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນໍາໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ - ສັດປ່າ ແລະ ການກະທໍາທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

## ສາລະບານ

ຄຳນຳ...I
ສັງລວມຫຍໍ້...II
ສາລະບານຕາຕະລາງ...V
ສາລະບານຮູບພາບ...VI
I. ຈຸດປະສົງ ແລະ ລະດັບຄາດໝາຍ...1
1.1. ຈຸດປະສົງ...1
1.2. ລະດັບຄາດໝາຍ...1
1.3. ຂັ້ນຕອນໃນການຈັດຕັ້ງປະຕິບັດ...2
1.4. ວິທີການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Soflware ຫຼື Program ຕ່າງເຂົ້າຊ່ວຍ...2
II. ສະພາບລວມຂອງບ້ານ...5
2.1. ປະຫວັດຄວາມເປັນມາຂອງບ້ານ...5
2.2. ດ້ານການປົກຄອງ...5
2.3. ເຂດຄຸ້ມຄອງຂອງບ້ານ...5
2.4. ຂໍ້ມູນດ້ານເສດຖະກິດ-ສັງຄົມ...9
2.4.1. ການປະກອບອາຊີບ...9
2.4.2. ແຫລ່ງລາຍຮັບຂອງປະຊາຊົນ...9
2.4.3. ດ້ານການນຳໃຊ້ທີ່ດິນ...10
III. ການຈັດສັນການນຳໃຊ້ທີ່ດິນ...11
3.1 ການກຳນົດເຂດການນຳໃຊ້ທີ່ດິນຂອງບ້ານ...11
3.1.1. ການກຳນົດເຂດທີ່ດິນກະສິກຳ...11
3.1.2. ການກຳນົດເຂດດິນປຸກສ້າງ...11
3.1.3. ການກຳນົດທີ່ດິນວັດທະນາທຳ...12
3.1.4. ການກຳນົດດິນປກສ-ປກຊ...12
3.1.5. ການກຳນົດທີ່ດິນປ່າໄມ້...12
3.1.6. ການກຳນົດເຂດທີ່ອຸດສາຫະກຳ...12
3.1.7. ການກຳນົດນົດທີ່ດິນຄົມມະນາຄົມ...12
3.1.8. ການກຳນົດນົດທີ່ດິນບໍລິເວນນໍ້າ...12
IV. ທິດທາງການວາງແຜນພັດທະນາທີ່ດິນ...15
4.1. ທ່າແຮງໃນການພັດທະນາຂອງບ້ານ...15
4.2. ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານ...15
V. ລະບຽບການໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ...15
5.1. ການຄຸ້ມຄອງທີ່ດິນກະສິກຳ...16
5.2. ການຄຸ້ມຄອງທີ່ດິນປຸກສ້າງ...16
5.3. ການຄຸ້ມຄອງທີ່ດິນປ່າໄມ້...16
5.4. ການຄຸ້ມຄອງທີ່ດິນຄົມມະນາຄົມ...16
5.5. ການຄຸ້ມຄອງທີ່ດິນວັດທະນາທຳ...16
5.6. ການຄຸ້ມຄອງທີ່ດິນບໍລິເວນນໍ້າ...16

VI. ການຫັນປ່ຽນປະເພດທີ່ດິນ ........................................................................................ 16
VII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ....................................................................... 16
6.1. ການຈັດຕັ້ງ ........................................................................................................ 17
6.2. ບຸກຄະລາກອນ .................................................................................................... 17
6.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ........................................................ 17
6.4. ຂອບເຂດສິດ ...................................................................................................... 17
6.5. ລະບອບແບບແຜນວິທີເຮັດວຽກ ................................................................................ 18
6.6. ການຕິດຕາມກວດກາ ............................................................................................ 18
ເອກະສານອ້າງອີງ ........................................................................................................ 19
ເອກະສານຊ້ອນທ້າຍ ..................................................................................................... 20
ເອກະສານຊ້ອນທ້າຍທີ 1: ແບບຟອມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານຫ້ວຍຄໍ້ ........................................................................................ 21
ເອກະສານຊ້ອນທ້າຍທີ 2: ບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ ........................................................................................ 29
ເອກະສານຊ້ອນທ້າຍທີ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ ........................................................................................ 33
ເອກະສານຊ້ອນທ້າຍທີ 4: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດກ່ຽວກັບການລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ ........................................................................................ 36
ເອກະສານຊ້ອນທ້າຍທີ 5: ຂໍ້ຕົກລົງທ່ານເຈົ້າເມືອງສອງຄອນວ່າດ້ວຍການແຕ່ງຕັ້ງພະນັກງານ ລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ ........................................................................................ 37
ເອກະສານຊ້ອນທ້າຍທີ 6: ບົດບັນທຶກກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ. ........................................................................................ 39
ເອກະສານຊ້ອນທ້າຍທີ 7: ໜັງສືສະເໜີ ກ່ຽວກັບພິຈາລະນາອະນຸມັດແຜນຈັດສັນການນາໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ. ........................................................................................ 42

# ສາລະບານຕາຕະລາງ

ຕາຕະລາງ 1: ໄລຍະເວລາໃນການຈັດຕັ້ງປະຕິບັດແຕ່ເລີ່ມຕົ້ນຈົນສຳເລັດ ........................................ 3
ຕາຕະລາງ 2: ເຄື່ອງມື ແລະ ອຸປະກອນຮັບໃຊ້ວຽກງານ ........................................ 4
ຕາຕະລາງ 3: ຄ່າພິກັດບ້ານແກ້ງໂດນ ກັບ ຫົວຫາດ ກຸ່ມລະບົບ WGS 84 ........................................ 6
ຕາຕະລາງ 4: ຄ່າພິກັດບ້ານແກ້ງໂດນ ກັບ ບ້ານດອນຂຽວ ກຸ່ມລະບົບ WGS 84 ........................................ 6
ຕາຕະລາງ 5: ຄ່າພິກັດ ຫ້ວຍຄໍ້ ກັບບ້ານ  ກຸ່ມລະບົບ WGS 84 ........................................ 7
ຕາຕະລາງ 6: ຄ່າພິກັດ ຫ້ວຍຄໍ້ ກັບ ບ້ານໂນນເຕົາຖ່ານ ກຸ່ມລະບົບ WGS 84 ........................................ 7
ຕາຕະລາງ 7:  ຄ່າພິກັດ ບ້ານຫວ້ຍຄໍ້ ກັບ ບ້ານໜອງຄັນຍູ ກຸ່ມລະບົບ WGS 84 ........................................ 7
ຕາຕະລາງ 8: ຄ່າພິກັດ ບ້ານຫວ້ຍຄໍ້ ກັບ ບ້ານໜອງຂຽວ ກຸ່ມລະບົບ WGS 84 ........................................ 8
ຕາຕະລາງ 9: ຄ່າພິກັດ ບ້ານຫວ້ຍຄໍ້ ກັບ ບ້ານດອນມ່ວງ ກຸ່ມລະບົບ WGS 84 ........................................ 8
ຕາຕະລາງ 10: ປູກພືດ ແລະ ສຳຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ ........................................ 9
ຕາຕະລາງ 11: ເນື້ອທີ່ການນຳໃຊ້ທີ່ດິນປະຈຸບັນ, ບ້ານຫ້ວຍຄໍ້, ເມືອງສອງຄອນ, ແຂວງສະຫວັນນະເຂດ. .......... 10
ຕາຕະລາງ 12: ເນື້ອທີ່ການຈັດສັນທີ່ດິນແຕ່ລະປະເພດ, ບ້ານ ຫ້ວຍຄໍ້, ເມືອງສອງຄອນ ແຂວງສະຫວັນນະເຂດ ... 12
ຕາຕະລາງ 13: ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ດິນຂອງແຜນຈັດສັນການນຳໃຊ້ທີ່ດິນ ........................................ 14

# ສາລະບານຮູບພາບ

ຮູບທີ 1: ສະພາບພູມສັນຖານ ບ້ານຫ້ວຍຄໍ້, ເມືອງສອງຄອນ ແຂວງສະຫວັນນະເຂດ......................................5
ຮູບທີ 2: ແຜນທີ່ຂອບເຂດຄຸ້ມຄອງ ບ້ານຫ້ວຍຄໍ້, ເມືອງ ສອງຄອນ, ແຂວງສະຫວັນນະເຂດ.............................9
ຮູບທີ 3: ແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ ຂອງ ບ້ານຫ້ວຍຄໍ້, ເມືອງສອງຄອນ, ແຂວງ ສະຫວັນນະເຂດ..........11
ຮູບທີ 4: ແຜນທີ່ ການຈັດສັນທີ່ດິນຂອງ ບ້ານຫ້ວຍຄໍ້, ເມືອງສອງຄອນ, ແຂວງສະຫວັນນະເຂດ.....................13
ຮູບທີ 5 : ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງ ການນໍາໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ ..........14
ຮູບທີ 6 : ສະແດງເຖິງຄວາມແຕກຕ່າງການນໍາໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ.................................14

# I. ຈຸດປະສົງ ແລະ ລະດັບຄາດໝາຍ

## 1.1. ຈຸດປະສົງ

ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດ ໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນ ໃຫ້ມີການປະສົມປະສານຢ່າງກົມກຽວ ໂດຍພື້ນຖານກັບ ສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນ ກໍ່ຕ້ອງໃຫ້ສອດຄອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະເຂດ. ດັ່ງນັ້ນ, ຈຸດປະສົງຂອງການວາງແຜນສຳຫຼວດຈັດສັນທີ່ດິນຕ້ອງໄດ້ເລັ່ງໃສ່ໃນຂົງເຂດວຽກງານຫຼັກລຸ່ມນີ້:

1) ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງຕະຫຼອດໄປ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ສາມາດນຳຜົນປະໂຫຍດ ສູງສຸດມາໃຫ້ປະເທດຊາດ.

2) ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີ່ດິນປ່າໄມ້ແບບຊະຊາຍ, ການສວຍໂອກາດເອົາທີ່ດິນຂອງ ລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ.

3) ເພື່ອຊຸກຍູ້ ແລະ ສົ່ງເສີມໃຫ້ແກ່ການລົງທຶນເຂົ້າໃນການພັດທະນາທີ່ດິນຢ່າງຮອບດ້ານຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

4) ເພື່ອຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນຳໃຊ້ທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນໃນຂອບເຂດທົ່ວປະເທດແລ້ວນຳສະເໜີໃຫ້ລັດຖະບານພິຈາລະນາ ແລະ ສະພາແຫ່ງຊາດຮັບຮອງເອົາ.

## 1.2. ລະດັບຄາດໝາຍ

1). ເຮັດໃຫ້ມີລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເຮັດໃຫ້ມີລະບຽບຫຼັກການ ແລະ ມາດຕະການ ໃນການຕິດຕາມກວດກາການນຳໃຊ້ທີ່ດິນ.

2). ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍ ຊຶ່ງມີຄວາມເປັນເອກະພາບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.

3). ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງ ກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທາມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ.

4). ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ - ສັງຄົມ ໃຫ້ດີຂຶ້ນເປັນກ້າວໆ.

5). ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ຂອບເຂດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢ່າງຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງໄວ້.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນ ທຳມະຊາດ ຢູ່ໃນແຕ່ລະທ້ອງຖິ່ນໄດ້.

## 1.3. ຂັ້ນຕອນໃນການຈັດຕັ້ງປະຕິບັດ

### 1.3.1. ຂັ້ນຕອນເປີດກອງປະຊຸມຂັ້ນບ້ານ

ເພື່ອເຜີຍແຜ່ກ່ຽວກັບຈຸດປະສົງໃນການຈັດສັນທີ່ດິນຂັ້ນບ້ານ-ກຸ່ມບ້ານ ເພື່ອໃຫ້ປະຊາຊົນເຂົ້າໃຈໃນການຈັດຕັ້ງປະຕິບັດວຽກງານຈັດສັນທີ່ດິນ.

### 1.3.2. ຂັ້ນຕອນສຳຫຼວດ ແລະ ແຕ້ມແຜນທີ່

1. ລົງພື້ນທີ່ເພື່ອກຳນົດຈຸດຂອບເຂດການຄຸ້ມຄອງບ້ານ, ແຕ່ລະບ້ານທີ່ມີຊາຍແດນຕິດຈອດກັນພ້ອມທັງເຮັດບົດບັນທຶກ.
2. ສ້າງແຜນທີ່ຂອບເຂດການຄຸ້ມຄອງບ້ານ ແລະ ສົ່ງຂໍ້ມູນຄຳເວົ້າ ແລະ ຄ່າພິກັດທາງດ້ານຂອບເຂດແຕ່ ບ້ານໃຫ້ໜ່ວຍງານສັງລວມເພື່ອເຮັດບົດບັນທຶກຂອບເຂດການຄຸ້ມຄອງບ້ານລວມບ້ານທັງໝົດທີ່ມີຂອບເຂດການ ຄຸ້ມຄອງຕິດຈອດກັນ.
3. ລົງສຳຫຼວດຜັງທາງ ແລະ ປະເພດການນຳໃຊ້ທີ່ດິນຂອງບ້ານ.
4. ແຕ້ມ ແລະ ສ້າງແຜນທີ່ການນຳໃຊ້ທີ່ດິນໃນປະຈຸບັນ ແລະ ແຜນທີ່ຈັດສັນການນຳໃຊ້ທີ່ດິນຂອງບ້ານພ້ອມທັງສົ່ງຂໍ້ມູນທາງເນື້ອທີ່ຂອງດິນແຕ່ລະປະເພດໃຫ້ໜ່ວຍງານສັງລວມເພື່ອປະກອບໃນແຜນຈັດສັນ.

### 1.3.3. ຂັ້ນຕອນສັງລວມຂໍ້ມູນ ແລະ ສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ

1. ເກັບກຳຂໍ້ມູນເສດຖະກິດ - ສັງຄົມບ້ານ ແລະ ປະເພດການນາໃຊ້ທີ່ດິນຂອງບ້ານ
2. ສ້າງບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານລວມພ້ອມທັງສະເໜີການຕົກລົງ ແລະ ເຊັນເອົາຮັບຮອງເອົາບົດບັນທຶກຂອບເຂດແດນບ້ານ.
3. ສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ແລະ ເຮັດບົດບັນທຶກເພື່ອສະເໜີການຮັບຮອງເອົາແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ.
4. ສັງລວມຂໍ້ມູນທັງໝົດຂອງບ້ານເປັນຕົ້ນຂໍ້ມູນທາງດ້ານເອກະສານ ແລະ ຂໍ້ມູນການແຕ້ມ ເຂົ້າໃນຖານຂໍ້ມູນຂອງບ້ານ (Master Planning).

## 1.4. ວິທີການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Soflware ຫຼື Program ຕ່າງເຂົ້າຊ່ວຍ

1. ຄູ່ມືການວາງແຜນຈັດສັນທີ່ດິນຂັ້ນບ້ານ ແລະ ກຸ່ມບ້ານ
2. ບົດແນະນຳກ່ຽວກັບບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນ.
3. ຄູ່ມືການນຳໃຊ້ GPS 65s

4. ຄູ່ມືການນຳໃຊ້ Program ArcMap 10.4
5. ຄູ່ມືການນຳໃຊ້ຊັ້ນເລເຢີ ໃນວຽກງານການຈັດສັນວາງແຜນການນຳໃຊ້ທີ່ດິນ (ສະບັບປັບປຸງໃໝ່)

**ບັນດາໂປແກຣມທີ່ສຳຄັນ**

1. ໂປຣແກມ ArcMap 10.XX
2. ໂປຣແກມ MapSource
3. ໂປຣແກມ Google Earth
4. ໂປຣແກມ Microsoft Word & Excel
5. ໂປຣແກມ DNR Garmin.

ຕາຕະລາງ 1: ໄລຍະເວລາໃນການຈັດຕັ້ງປະຕິບັດແຕ່ເລີ່ມຕົ້ນຈົນສຳເລັດ

| ລຳດັບ | ໜ້າວຽກ | ພາກສ່ວນ |
|---|---|---|
| 1 | • ເປີດກອງປະຊຸມ ສະເໜີຈຸດປະສົງຕໍ່ ອຳນາດການປົກຄອງບ້ານ<br>• ສະເໜີ ອະທິບາຍວິທີການ, ບາດກ້າວ,ຂັ້ນຕອນ ແລະ ເຜີຍແຜ່ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບວຽກງານ ຈັດສັນທີ່ດິນຂັ້ນບ້ານເພື່ອໃຫ້ອົງການປົກຄອງບ້ານ ໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 2 | • ເກັບກຳຂໍ້ມູນຕາມແບບພິມສຳພາດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານ<br>• ປ້ອນຂໍ້ມູນຈາກແບບພິມເຂົ້າຖານຂໍ້ມູນ ໃຫ້ນຳເອົາຂໍ້ມູນທີ່ເກັບກຳໄດ້ ຈາກແຫຼ່ງຂໍ້ມູນຕ່າງໆ ເຂົ້າຖານຂໍ້ມູນຄອມພິວເຕີ້<br>• ແຈ້ງເຊີນອົງການປົກຄອງບ້ານອ້ອມຂ້າງ ທີ່ມີເຂດແດນຕິດກັບບ້ານທີ່ກຳລັງຈັດຕັ້ງປະຕິບັດ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 3 | • ເປີດກອງປະຊຸມ ເພື່ອກຳນົດເຂດຄຸ້ມຄອງບ້ານ, ບັນທຶກເປັນຂໍ້ຄວາມລະອຽດໃນແຕ່ລະທິດ, ໂດຍຕົກລົງເຫັນດີລະຫວ່າງບ້ານຕໍ່ບ້ານ ພ້ອມທັງເຊັນບົດບັນທຶກຮ່ວມກັນ<br>• ລົງກວດກາພື້ນທີ່ເຂດຄຸ້ມຄອງຂອງບ້ານຕໍ່ບ້ານ ຕາມບົດບັນທຶກ ໂດຍນຳໃຊ້ GPS ເກັບກຳຈຸດຄ່າພິກັດ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 4 | • ກຳນົດ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ເຂົ້າໃນຖານຂໍ້ມູນ ຄອມພິວເຕີ້, ໃຫ້ຖືກຕ້ອງຕາມເຕັກນິກວິຊາການທີ່ໄດ້ກຳນົດໄວ້;<br>• ຮັບຮອງ ແລະ ຢັ້ງຢືນເຂດຄຸ້ມຄອງບ້ານ, ໂດຍການນຳຂໍ້ມູນທີ່ໄດ້ມາສ້າງບົດບັນທຶກ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ລົງລາຍເຊັນຢັ້ງຢືນໃນແຕ່ລະບ້ານ ທີມງານວິຊາການເຕັກນິກ, ຫ້ອງການ ຊສ ເມືອງ, ຮັບຮູ້ໂດຍທ່ານເຈົ້າເມືອງ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |

| | | |
|---|---|---|
| 5 | • ລົງສໍາຫຼວດເກັບກໍາຂໍ້ມູນການນໍາໃຊ້ທີ່ດິນປະຈຸບັນຂອງບ້ານ ນໍາໃຊ້ເຄື່ອງມື GPS ແລະ ແບບພິມບັນທຶກພາກສະໜາມຂອງທີມງານວິຊາການ | • ທີມງານວິຊາການ<br>• ອໍານາດການປົກຄອງບ້ານ |
| 6 | • ສັງລວມຂໍ້ມູນ ແລະ ກໍານົດປະເພດທີ່ດິນປະຈຸບັນຂອງບ້ານ ປ້ອນຂໍ້ມູນທີ່ໄດ້ຈາກພາກສະໜາມ ເຂົ້າໃນຄອມພິວເຕີ້ແຕ້ມແຜນທີ່ການນໍາໃຊ້ທີ່ດິນປະຈຸບັນຂອງບ້ານ<br>• ກວດກາຄວາມລະອຽດທາງດ້ານເຕັກນິກຂອງແຜນທີ່,ຄິດໄລ່ເນື້ອທີ່ປະເພດທີ່ດິນ, ສ້າງແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ | • ທີມງານວິຊາການ |
| 7 | • ເປີດກອງປະຊຸມປຶກສາຫາລື ເພື່ອສ້າງແຜນຈັດສັນທີ່ດິນ ລະຫວ່າງທີມງານວິຊາການ ກັບ ອົງການຈັດຕັ້ງຂັ້ນບ້ານເພື່ອກໍານົດເຂດ ແລະ ປະ ເພດທີ່ດິນທີ່ຈະໄດ້ຈັດສັນ ນໍາໃຊ້ທີ່ດິນໃນອະນາຄົດຂອງບ້ານ ພ້ອມທັງເຮັດບົດບັນທຶກ ແລະ ສ້າງແຜນທີ່ຈັດສັນທີ່ດິນຂອງບ້ານ<br>• ເປີດກອງປະຊຸມ ຜ່ານແຜນຈັດສັນທີ່ດິນຂອງບ້ານ ເພື່ອປະກອບຄໍາເຫັນໃສ່ຮ່າງແຜນຈັດສັນທີ່ດິນໃນເບື້ອງຕົ້ນພ້ອມທັງສ້າງບົດບັນທຶກຄວາມເປັນເອກະພາບ | • ທີມງານວິຊາການ<br>• ອໍານາດການປົກຄອງບ້ານ |

ຕາຕະລາງ 2: ເຄື່ອງມື ແລະ ອຸປະກອນຮັບໃຊ້ວຽກງານ

| **ລ/ດ** | **ບັນດາເຄື່ອງມື** | **ຈໍານວນ** |
|---|---|---|
| 1 | ເຄື່ອງ Computer Notebook | 2 ໜ່ວຍ |
| 2 | ເຄື່ອງ Printer | 1 ຊຸດ |
| 3 | ກ້ອງຖ່າຍຮູບ | 1 ໜ່ວຍ |
| 4 | GPS Map 60,62,65 | 2 ໜ່ວຍ |
| 5 | LCD + ຈໍ | 2 ໜ່ວຍ |
| 6 | ລົດໃຫຍ່ | 1 ຄັນ |

# II. ສະພາບລວມຂອງບ້ານ

## 2.1. ປະຫວັດຄວາມເປັນມາຂອງບ້ານ

ບ້ານຫ້ວຍຄໍ້ ເປັນບ້ານໜຶ່ງທີ່ສ້າງຂື້ນໃນປີ 1961 ເຊິ່ງແມ່ນພໍ່ເຖົ້າໝື່ນ ເປັນຜູ້ນຳພາສ້າງ, ເບື້ອງຕົ້ນແມ່ນມີພຽງ 5 ຄອບຄົວ ຍ້າຍມາແຕ່ບ້ານຫີນເທີບ ຫຼື ບ້ານນາວັງພິນຂອງຊົນເຜົ່າກະຕ່າງ. ໄດ້ຜ່ານຊ່ວງທີ່ອາເມລິກາເຂົ້າມາປົກຄອງປະຊາຊົນແມ່ນຢູ່ດ້ວຍຄວາມລຳບາກ ແລະ ໄດ້ຫຼົບຫຼີກ ແລະ ບໍ່ໄດ້ຍ້າຍໜີໄປຢູ່ບ່ອນອື່ນ. ຮອດປີ 1970 ກໍ່ຍັງມີປະຕິການເຄື່ອນໄຫວຢູ່ປະຊາຊົນກໍ່ດຳລົງຊີວິດດ້ວຍຄວາມລະມັດລະວັງຢູ່, ຢູ່ກັນເປັນກຸ່ມກ້ອນດ້ວຍຄວາມລຳບາກ ແຕ່ກໍ່ບໍ່ໄດ້ລົບໜີໄປຢູ່ບ່ອນອື່ນ. ຈົນມາຮອດປີ 1975 ປະຊາຊົນຈຶ່ງມີຄວາມໝັ້ນໃຈ ໃນການທຳມາຫາກິນ ແລະ ຂະຫຍາຍເນື້ອທີ່ ແລະ ຂະຫຍາຍບ່ອນຢູ່ ຈົນມາຮອດປະຈຸບັນ. ດັ່ງສະແດງໃນຮູບພາບລຸ່ມນີ້:



ຖ່າຍພາບໂດຍ: ທີມງານໂຄງການ IWRM-EbA

ຮູບທີ 1: ສະພາບພູມສັນຖານ ບ້ານຫ້ວຍຄໍ້, ເມືອງສອງຄອນ ແຂວງສະຫວັນນະເຂດ

## 2.2. ດ້ານການປົກຄອງ

ບ້ານຫ້ວຍຄໍ້ ຕັ້ງຫ່າງຈາກເທດສະບານເມືອງສອງຄອນ ໄປທາງທາງໃຈກາງຂອງເມືອງ, ມີໄລຍະທາງແຕ່,ບ້ານຫ້ວຍຄໍ້ ຕັ້ງຢູ່ທາງທິດຕາເວັນອອກສຽງເໜືອ ຫ່າງຈາກເທດສະບານເມືອງປະມານ 51 ກມ ຂອງເມືອງສອງຄອນ ແຂວງສະຫວັນນະເຂດ, ຈັດຢູ່ໃນກຸ່ມບ້ານທີ 10 ຂອງເມືອງ. ມີເນື້ອທີ່ທັງໝົດ ມີ 4,490.94 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງສອງຄອນດັ່ງຂໍ້ມູນລະອຽດລຸ່ມນີ້: ທິດເໜືອ: ຕິດກັບ ບ້ານຫາດຈະເລີນຄຳ, ທິດຕາເວັນອອກ: ຕິດກັບບ້ານຫ້ວຍໄຂ່, ທິດໃຕ້: ຕິດກັບບ້ານໜອງຂອນ, ບ້ານໂນນເຕົາຖ່ານ ແລະ ບ້ານໜອງຄັນຍູ ທິດຕາເວັນຕົກ: ຕິດກັບ ບ້ານດອນຂຽວ ແລະ ບ້ານດອນມ່ວງ.

## 2.3. ເຂດຄຸ້ມຄອງຂອງບ້ານ

ບ້ານຫ້ວຍຄໍ້ ມີຂອບເຂດຄຸ້ມຄອງຕິດກັບບ້ານຕ່າງໆຄື:

ເອກະສານຊ້ອນທ້າຍທີ 4: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດກ່ຽວກັບການລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສະຫວັນນະເຂດ
ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ເລກທີ.1343 ກສຂ.
ສະຫວັນນະເຂດ, ວັນທີ 24.11.2025

## ຂໍ້ຕົກລົງ

### ວ່າດ້ວຍການແຕ່ງຕັ້ງພະນັກງານໄປຮ່ວມກອງປະຊຸມ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດ ລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
- ອີງຕາມ ໜັງສືເຊີນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງສອງຄອນ ສະບັບເລກທີ 478/ຫຊສ, ລົງວັນທີ 10 ພະຈິກ 2025.

**ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

**ມາດຕາ 1** ເຫັນດີ ແຕ່ງຕັ້ງພະນັກງານວິຊາການ ພະແນກກະສິກຳ ແລະ ສິ່ງແວດລ້ອມ ເຂົ້າຮ່ວມກອງປະຊຸມນຳສະເໜີຈຸດປະສົງຂັ້ນບ້ານ ເພື່ອແນະນຳກ່ຽວກັບການຈັດສັນທີ່ດິນ 08 ປະເພດຂັ້ນບ້ານ ແລະ ລົງສຳຫຼວດຈັດສັນທີ່ດິນຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ຢູ່ເມືອງສອງຄອນ ໃນລະຫວ່າງ ວັນທີ 13 ພະຈິກ - 07 ທັນວາ 2025 ມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນທະວີ ວິຊຽນ — ວິຊາການຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ
2. ທ່ານ ສີສະຫວັນ ໄຊຍະວົງ — ວິຊາການຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ
3. ທ່ານ ນ.ປານຄຳ ສຸວັນນາລີ — ວິຊາການຂະແໜງຊັບພະຍາກອນນ້ຳ,ອຸຕຸນິຍົມ-ອຸທົກກະສາດ.

**ມາດຕາ 2** ຜູ້ທີ່ຖືກແຕ່ງຕັ້ງຕາມ ມາດຕາ 01 ມີໜ້າທີ່ປະຕິບັດໜ້າວຽກຂອງຕົນໃຫ້ສຳເລັດຜົນເປັນຢ່າງດີ.

- ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ກ່ຽວຕາມຄວາມເໝາະສົມ,ພາຍຫຼັງສຳເລັດວຽກງານແລ້ວ ລາຍງານຄືນໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ;
- ສຳລັບງົບປະມານແມ່ນນຳໃຊ້ ຂອງໂຄງການດັ່ງກ່າວ.

**ມາດຕາ 3** ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກ**

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ບຸລິກາ ອິນທິລາດ

ເອກະສານຊ້ອນທ້າຍທີ 5: ຂໍ້ຕົກລົງທ່ານເຈົ້າເມືອງສອງຄອນວ່າດ້ວຍການແຕ່ງຕັ້ງພະນັກງານ ລົງເຄື່ອນໄຫວການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ 3 ບ້ານເປົ້າໝາຍເມືອງສອງຄອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າເມືອງ

ເລກທີ...606.../ຈມ

ເມືອງສອງຄອນ, ວັນທີ06......ພະຈິກ 2025

## ຂໍ້ຕົກລົງ

### ຂອງທ່ານເຈົ້າເມືອງສອງຄອນ

### ວ່າດ້ວຍການແຕ່ງຕັ້ງພະນັກງານລົງຕິດຕາມຊຸກຍູ້ ແລະ ເຄື່ອນໄຫວວຽກງານຂອງໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນການອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ເພື່ອລົງສຳຫຼວດເກັບກຳຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນຄື:

### ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015 ພາກທີ IV ໝວດທີ IV ມາດຕາ 40 ຂໍ້ທີ 7.
- ອີງຕາມ ໜັງສືສະເໜີຂອງຫ້ອງການ ຊສ ເມືອງ ສະບັບເລກທີ 446, ລົງວັນທີ 20/10/2025 ເພື່ອລົງສຳຫຼວດເກັບກຳຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນ.
- ອີງຕາມ ແຜນກິດຈະກຳການສຳຫຼວດຈັດສັນທີ່ດິນ 8 ປະເພດ ຂອງບ້ານເປົ້າຫມາຍ 3 ບ້ານເປົ້າຫມາຍຂອງ ເມືອງສອງຄອນຄື: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້.

## ເຈົ້າເມືອງ ຕົກລົງ:

ມາດຕາ 01: ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມປະກອບມີ:

| | | |
|---|---|---|
| 1. ທ່ານ ແກ້ວສົມສັກ ພົມມະຈັກ | ຮອງເຈົ້າເມືອງ | ປະທານ |
| 2. ທ່ານ ເລີດປັຊາ ບຸນມາວົງ | ຫົວໜ້າຫ້ອງວ່າການເມືອງ | ຮອງປະທານ |
| 3. ທ່ານ ກົມຍາ ຊານຸລາດ | ຫົວໜ້າຫ້ອງການກະສິກຳເມືອງ | ຄະນະ |
| 4. ທ່ານ ຂັນທອງ ວໍລະບຸດນາມມະວົງ | ຮອງຫົວໜ້າຫ້ອງການ ຊສ ເມືອງ | ຄະນະ |
| 5. ທ່ານ ອຳພາວັນ ດອກກຸສົມ | ຮອງຫົວໜ້າຫ້ອງການ ຍທຂ ເມືອງ | ຄະນະ |
| 6. ນາງ ພູມສະຫວັນ ລາດວົງສາ | ປະທານສະຫະພັນແມ່ຍິງເມືອງ | ຄະນະ |
| 7. ທ່ານ ເພັດສ່ອງແສງ ສຸລິກາ | ການຫ້ອງວັດທະນະທຳ ແລະ ທ້ອງທ່ຽວ | ຄະນະ |

ມາດຕາ 02 : ແຕ່ງຕັ້ງ ພະນັກງານ ລົງຕິດຕາມຊຸກຍູ້ ແລະ ເຄື່ອນໄຫວວຽກງານຂອງໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ເພື່ອລົງສໍາຫຼວດເກັບກໍາຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນ: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ປະກອບມີລາຍຊື່ດັ່ງນີ້:

1. ທ່ານ ພູສອນມະໄລ ພິວໂສດາລິດ ຫ້ອງການ ຊສ ເມືອງ
2. ທ່ານ ບັນດິດ ຈັນທະລືໄຊ ຫ້ອງການ ຊສ ເມືອງ
3. ທ່ານ ຄໍາພູວັນ ແກ້ວວມະນີໃສ ຫ້ອງການ ຊສ ເມືອງ
4. ທ່ານ ພູດົງ ມູນລະວົງ ຫ້ອງການກະສິກໍາເມືອງ
5. ທ່ານ ນາຍບ້ານທັງ 3 ບ້ານ ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້
6. ປະທ່ານກຸ່ມ 3 ບ້ານ ຄື: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້

ມາດຕາ 03: ມອບໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ, ບັນດາຫ້ອງການທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນປະສານ ສົມທົບເພື່ອຈັດຕັ້ງປະຕິບັດ, ພາຍຫຼັງສໍາເລັດແລ້ວໃຫ້ລາຍງານການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ.

ມາດຕາ 04 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນໍາໃຊ້ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າເມືອງ

ແກ້ວສິນສັກ ພິມມະຈັກ

ເອກະສານຊ້ອນທ້າຍທີ 6: ບົດບັນທຶກກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ກອງປະຊຸມ ປຶກສາຫາລື ຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍ (ບ້ານຫ້ວຍຄໍ້, ບ້ານແກ້ງໂດນ ແລະ ບ້ານສອງຄອນ) ເມືອງສອງຄອນ, ແຂວງສະຫວັນນະເຂດ

ໃນຕອນເຊົ້າຂອງ ວັນທີ 08 ທັນວາ 2025 ເວລາ 9:00 ໂມງ ທີ່ ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງສອງຄອນ ແຂວງສະຫວັນນະເຂດ, ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ (ຫກສ) ໄດ້ຈັດກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍ ຂອງເມືອງສອງຄອນ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ ຂຶ້ນ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ແກ້ວສົມສັກ ພົມມະຈັກ ຮອງປະທານຄະນະກຳມະການປົກຄອງເມືອງສອງຄອນ ໃຫ້ກຽດກ່າວເປີດກອງປະຊຸມ. ຫຼັງຈາກນັ້ນ ທ່ານ ບຸລິກາ ອິນທິລາດ ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ເປັນປະທານຮ່ວມ ມີພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ: ພະແນກກະສິກຳ ແລະ ສິ່ງແວດລ້ອມ (ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ຂະແໜງຊັບພະຍາກອນນໍ້າ-ອຸຕຸນິຍົມ ແລະ ຂະແໜງຄຸ້ມຄອງແຂວງ), ຄະນະຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມວິຊາການ ແລະ ຫ້ອງການອ້ອມຂ້າງຂອງເມືອງສອງຄອນ, ຄະນະບ້ານ 3 ບ້ານເປົ້າໝາຍໂຄງການ (ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ). ນອກຈາກນີ້ຍັງມີພະນັກງານໂຄງການພາກສະໜາມປະຈຳແຂວງ ຂອງ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ຊຶ່ງມີຜູ້ເຂົ້າຮ່ວມ ລວມທັງໝົດ ຈຳນວນ 43 ທ່ານ, ຍິງ ...4.... ທ່ານ (ລາຍຊື່ຜູ້ເຂົ້າຮ່ວມຄັດຕິດມາພ້ອມນີ້).

ຈຸດປະສົງ ຂອງກອງປະຊຸມຄັ້ງນີ້ ເພື່ອຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານເປົ້າໝາຍ. ພາຍຫຼັງປະທານໄດ້ກ່າວເປີດ ແລະ ໃຫ້ຄຳເຫັນຕໍ່ກອງປະຊຸມແລ້ວຜູ້ເຂົ້າຮ່ວມກໍ່ໄດ້ຮັບຟັງການນຳສະເໜີລາຍງານສະພາບລວມຂອງໂຄງການ IWRM-EbA ແລະ ນຳສະເໜີຂະບວນການສ້າງ ແລະ ເນື້ອໃນຂອງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວ (ເຫດຜົນຄວາມຈຳເປັນຂອງການສ້າງແຜນຈັດສັນການນຳໃຊ້ທີ່ດິນ, ວິທີການສຳຫຼວດ, ເກັບກຳຂໍ້ມູນການຈັດສັນທີ່ດິນ 8 ປະເພດ ພາຍໃນ 3 ບ້ານເປົ້າໝາຍ, ໂຄງປະກອບໂດຍລວມ ແລະ ເນື້ອໃນຕົ້ນຕໍປະກອບດ້ວຍ ແປດ ພາກ ດັ່ງນີ້: ພາກທີໜຶ່ງ ແມ່ນ ໄດ້ກຳນົດຈຸດປະສົງ, ລະດັບຄາດໝາຍ, ຂັ້ນຕອນໃນການຈັດຕັ້ງປະຕິບັດ ແລະ ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ, ພາກທີສອງ ແມ່ນການລາຍງານ ສະພາບລວມຂອງບ້ານ, ທີ່ຕັ້ງພູມສັນຖານ, ດ້ານການປົກຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານວັດທະນະທຳ ແລະ ຮີດຄອງປະເພນີ, ພາກທີສາມ ແມ່ນການສະພາບການນຳໃຊ້ທີ່ດິນປະຈຸບັນ, ການກຳນົດຈຸດທີ່ຕັ້ງຂອງບ້ານ, ເຂດຄຸ້ມຄອງຂອງບ້ານ, ພາກທີສີ່ ແມ່ນການກຳນົດເຂດທີ່ດິນຂອງບ້ານ (ເຂດທີ່ດິນອະນຸລັກ, ເຂດທີ່

ດິນນຳໃຊ້, ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ), ການກຳນົດປະເພດທີ່ດິນຂອງບ້ານ, ພາກທີຫ້າ ແມ່ນການການກຳນົດທ່າແຮງໃນການພັດທະນາທີ່ດິນຂອງບ້ານ ແລະ ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານໃນມະລະຫວ່າງ, ພາກທີຫົກ ແມ່ນການກຳນົດລະບຽບການໃລະບຽບໃນການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ (ການຄຸ້ມຄອງ ທີ່ດິນກະສິກຳ, ທີ່ດິນປຸກສ້າງ, ທີ່ດິນວັດທະນາທຳ, ທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ, ທີ່ດິນປ່າໄມ້, ທີ່ດິນໂຍທາທິການ ແລະ ຂົນສົ່ງ ແລະ ທີ່ດິນບໍລິເວນນໍ້າ), ພາກທີເຈັດແມ່ນການຫັນປ່ຽນປະເພດທີ່ດິນ ແລະ ພາກທີ່ແປດແມ່ນກຳນົດກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ. ພາຍຫຼັງຮັບຟັງການລາຍງານແລ້ວຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນ ຢ່າງກົງໄປກົງມາ ແລະ ຄຳສະເໜີ ດັ່ງນີ້:

- ສະເໜີໃຫ້ຄະນະຮັບຜິດຊອບຈັດສັນທີ່ດິນຂັ້ນເມືອງສົມທົບແຂວງ ປັບປຸງແຜນທີ່ຈັດສັນທີ່ດິນບ້ານຫ້ອຍຄໍ້ ແລະ ແກ້ງໂດນ ໃຫ້ຄົບ 8 ປະເພດທີ່ດິນຕາມກົດໝາຍກຳນົດ;
- ສຳລັບບ້ານສອງຄອນແມ່ນໃຫ້ເອົາຕາມໂຄງການຊົວະນາໆພັນກຳນົດແລ້ວປ່ຽນຊື່ແຜນທີ່ ແລະ ເພີ່ມໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂລໂກ້ IWRM-EbA, ໂລໂກ້ gef ແລະ ໂລໂກ້ UNDP ເຂົ້າຮ່ວມກັບໂລໂກຂອງພາກສ່ວນສະໜັບສະໜູນໂຄງການຊົວະນາໆພັນເຂດດິນບໍລິເວນນໍ້າ.
- ໃຫ້ປຸງແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ແລະ ແຜນທີ່ຈັດສັນທີ່ດິນ 8 ປະເພດທີ່ດິນ ໃຫ້ເອົາຊື່ປະເພດທີ່ດິນຕາມກົດໝາຍຄື: 1. ທີ່ດິນກະສິກຳ; 2. ທີ່ດິນປ່າໄມ້; 3. ທີ່ດິນບໍລິເວນນໍ້າ; 4. ທີ່ດິນອຸດສາຫະກຳ; 5. ທີ່ດິນຄົມມະນາຄົມ; 6. ທີ່ດິນວັດທະນະທຳ; 7. ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; 8. ທີ່ດິນປຸກສ້າງ.
- ບ້ານໜຶ່ງ ມີ 3 ແຜນທີ ສຳລັບເບື້ອງເທິງແຜນທີ່ແຕ່ລະແຜ່ນໃຫ້ໃສ່ໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມດ້ວຍໂຄງການ IWRM-Eba (ເບື້ອງຊ້າຍມື) ກາງເຄິ່ງໃຫ້ຂຽນຊື່ແຜນທີ່ທັງພາສາລາວ ແລະ ອັງກິດໃສ່ ແລະ ເບື້ອງຂວາມືໃຫ້ໃສ່ໂລໂກ້ gef ແລະ ໂລໂກ້ UNDP:
- ສະເໜີໃຫ້ຄະນະຮັບຜິດຊອບຂັ້ນເມືອງເລັ່ງປັບປຸງ ພ້ອມທັງເອົາຂໍ້ມູນເຂົ້າແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍໃຫ້ສຳເລັດໂດຍໄວ.

## ສະຫຼຸບ:

ປະທານໄດ້ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ໂດຍສະເພາະກໍ່ແມ່ນ ຄະນະຮັບຜິດຊອບສ້າງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານໃຫ້ກວດກາ ແລະ ຮຽບຮຽງຄືນບັນດາຄຳສັບ, ໄວຍາກອນໃນການຂຽນແຜນ, ປັບປຸງແຜນທີຈັດສັນທີ່ດິນບ້ານຫ້ອຍຄໍ້ ແລະ ແກ້ງໂດນໃຫ້ຄົບ 8 ປະເພດທີ່ດິນໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ແທດເໝາະກັບສະພາບຕົວຈິງ ສຳລັບບ້ານສອງຄອນແມ່ນໃຫ້ເອົາຕາມໂຄງການຊົວະນາໆພັນກຳນົດແລ້ວປ່ຽນຊື່ແຜນທີ່ ແລະ ເພີ່ມໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂລໂກ້ IWRM-EbA, ໂລໂກ້ gef ແລະ ໂລໂກ້ UNDP ເຂົ້າຮ່ວມກັບໂລໂກຂອງພາກສ່ວນສະໜັບສະໜູນໂຄງການຊົວະນາໆພັນເຂດດິນບໍລິເວນນໍ້າ. ພາຍຫຼັງປັບປຸງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວນີ້ສຳເລັດແລ້ວ ໃຫ້ ຫຊສ ເມືອງສອງຄອນ ເຮັດໜັງສືລາຍງານ ພ້ອມທັງຂໍ້ຕົກລົງເພື່ອນຳສະເໜີທ່ານເຈົ້າເມືອງສອງຄອນພິຈາລະຮັບຮອງ ແລະ ປະກາດນຳໃຊ້ແຜນຈັດສັນການນຳໃຊ້ທີ່ດິນສະບັບດັ່ງກ່າວນີ້ໃຫ້ມີປະສິດພາບ, ປະສິດທິຜົນສູງ.

ຄຽງຄູ່ກັນນີ້, ຄະນະຮັບຜິດຊອບຂັ້ນເມືອງຍັງຈະໄດ້ມີການຈັດພິມປຶ້ມແຜນຈັດສັນການນຳໃຊ້ທີ່ດິນບ້ານ, ພິມປ້າຍແຜນທີຈັດສັນການນຳໃຊ້ທີ່ດິນ 3 ບ້ານເປົ້າໝາຍໃຫ້ສຳເລັດຕາມໄລຍະເວລາກຳນົດ.

ນອກຈາກນີ້ກອງປະຊຸມຍັງໄດ້ມອບໃຫ້ການຈັດຕັ້ງບ້ານເປົ້າໝາຍໂຄສະນາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນພາຍໃນບ້ານ ແລະ ບ້ານໃກ້ຄຽງທີ່ມີຊາຍແດນຕິດຈອດໄດ້ຮັບຮູ້ຂໍ້ມູນຂ່າວສານ ແລະ ເຂົ້າໃຈກ່ຽວກັບປະເພດການນຳໃຊ້ທີ່ດິນເປັນແຕ່ລະໄລຍະ.

ກອງປະຊຸມດັ່ງກ່າວໄດ້ປິດລົງຢ່າງເປັນທາງການ ໃນເວລາ 16:30 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ.

ທີ່ ເມືອງສອງຄອນ, ວັນທີ 08 ທັນວາ 2025

| ປະທານກອງປະຊຸມ | ຜູ້ບັນທຶກ |
| --- | --- |
| ເລີດປີຊາ ບຸນນາວົງ | ພູສອນມະໄລ ພົວໂສດາລິດ |
| ຮອງປະທານຄະນະກຳມະການປົກຄອງເມືອງສອງຄອນ | ຮກ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ |
| ແກ້ວສິນສັກ ພົມມະຈັກ | ຂັນທອງ ວໍລະບຸດນາມມະວົງ |

ເອກະສານຊ້ອນທ້າຍທີ 7: ໜັງສືສະເໜີ ກ່ຽວກັບພິຈາລະນາອະນຸມັດແຜນຈັດສັນການນໍາໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງສອງຄອນ
ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ

ເລກທີ...497.../ຫກສມ
ເມືອງ ສອງຄອນ, ວັນທີ 12/12/25

## ໜັງສືສະເໜີ

**ຮຽນ:** ທ່ານເຈົ້າເມືອງໆ ເມືອງ ສອງຄອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.
**ເລື່ອງ:** ສະເໜີ ພິຈາລະນາອະນຸມັດແຜນຈັດສັນການນໍາໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມນະຄອນ, ເມືອງ;
- ອີງຕາມ ແຜນຈັດສັນການນໍາໃຊ້ທີ່ດິນ 3 ບ້ານ ຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025;
- ອີງຕາມ ບົດບັນທຶກກອງປະຊຸມຜ່ານແຜນຈັດສັນການນໍາໃຊ້ທີ່ດິນ 3 ບ້ານ ຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງພາຍໃນເມືອງສອງຄອນ, ແຂວງສະຫວັນນະເຂດ, ຄັ້ງວັນທີ 08 ທັນວາ 2025.

ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄູ່ມືແນະນໍາກ່ຽວກັບສ້າງແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022. ໄລຍະຜ່ານມາຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການຂັ້ນແຂວງ ແລະ ເມືອງໄດ້ປະສານສົມທົບກັບລົງການສໍາຫຼວດຈັດສັນການນໍາໃຊ້ທີ່ດິນ 8 ປະເພດ ຂອງ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ ເລີ່ມແຕ່ ເດືອນ ພະຈິກ ຫາ ເດືອນ ທັນວາ ປີ 2025 ເປັນຕົ້ນມາຈົນສໍາເລັດ.

ມາຮອດປະຈຸບັນ ຄະນະຮັບຜິດຊອບໂຄງການຂັ້ນແຂວງ ແລະ ເມືອງໄດ້ຮ່າງແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ພ້ອມທັງໄດ້ມີການປຶກສາຫາລືກັບຂະແໜງການກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ອໍານາດການປົກຄອງບ້ານ ລວມທັງປະຊາຊົນທັງໝົດພາຍໃນບ້ານເປົ້າໝາຍເຫັນດີເປັນເອກະພາບ. ນອກຈາກນີ້ ຄະນະທີມງານຍັງໄດ້ມີການປັບປຸງ ແລະ ຮຽບຮຽງຄືນບັນດາເນື້ອໃນຂອງຮ່າງແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ໄດ້ສໍາເລັດຮຽບຮ້ອຍ ຕາມຄໍາເຫັນຂອງບັນດາຜູ້ເຂົ້າຮ່ວມປະຊຸມ.

ສະນັ້ນ, ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນສູງ ຈຶ່ງຂໍຮຽນສະເໜີມາຍັງທ່ານເຈົ້າເມືອງງສອງຄອນ ພິຈາລະນາລົງລາຍເຊັນໃສ່ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ (ລາຍລະອຽດເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານ ແລະ ສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ.

ຫົວໜ້າຫ້ອງການ

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ

ຂັນທອງ ວໍລະບຸດນາມມະວົງ

**ເອກະສານຄັດຕິດ:**

1. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ 1 ສະບັບ;
2. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ 1 ສະບັບ;
3. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນ 1 ສະບັບ;
4. ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ 3 ສະບັບ;
5. ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ 3 ສະບັບ;
6. ແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນ 3 ສະບັບ.

ຈັດຕັ້ງປະຕິບັດໂດຍ:

ສະໜັບສະໜູນໂດຍ:

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ
ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

## “ບ້ານສອງຄອນ” ເມືອງ ສອງຄອນ, ແຂວງ ສະຫວັນນະເຂດ




ກະກຽມໂດຍ:

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງ ສອງຄອນ

ທັນວາ 2025

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າເມືອງ

ເລກທີ..670./ຈມ

ເມືອງສອງຄອນ, ວັນທີ .18.ທັນວາ 2025

# ຂໍ້ຕົກລົງ

## ຂອງເຈົ້າເມືອງໆ ສອງຄອນ

## ວ່າດ້ວຍ ການຮັບຮອງ ແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນ ເມືອງສອງຄອນ ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນ ຂອງ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025;
- ອີງຕາມ ໜັງສືສະເໜີ ຂອງ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ, ສະບັບເລກທີ 497/ຫກສມ, ວັນທີ 12 ທັນວາ 2025.

### ເຈົ້າເມືອງ ຕົກລົງ:

ມາດຕາ 1: ເຫັນດີຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025.

ມາດຕາ 2: ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນຳການຈັດຕັ້ງປະຕິບັດ ໄປຕາມແຜນທີ່ກຳນົດໄວ້ ແລະ ແຜນສະບັບນີ້ ເປັນນິຕິກຳຄຸ້ມຄອງ ເພື່ອຮັບປະກັນສິດໃນການນຳໃຊ້ໃນອານາຄົດ.

ມາດຕາ 3: ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ແຜນການດັ່ງກ່າວ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມຮັບປະກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກຳ ແລະ ປ່າໄມ້, ທຸກການປ່ຽນແປງ ຫຼື ການຫັນປ່ຽນປະເພດການນຳໃຊ້ທີ່ດິນ ຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກຳນົດ.

ມາດຕາ 4 :ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າເມືອງ

ແກ້ວຄົມສັກ ພິມມະຈັກ

# ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2022 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະ ນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນ ສະບັບນີ້ ຈະເປັນເອກະສານນິຕິກຳພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮອບຮອມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນ ບ້ານສອງຄອນສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ກະຊວງກະສິກຳ ແລະ ສິ່ງແວດ ລ້ອມ, ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ ແລະ ອົງການປົກຄອງເມືອງສອງຄອນ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເອດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນສະບັບນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງສອງຄອນ, ວັນທີ 12 ທັນວາ 2025

ຫົວໜ້າຫ້ອງການ

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ

ກັບຍາ ຊານຸລາດ

# ສັງລວມຫຍໍ້

ບ້ານສອງຄອນ ຕັ້ງຫ່າງຈາກເທດສະບານເມືອງສອງຄອນ ໄປທາງທາງໃຈກາງຂອງເມືອງ, ມີໄລຍະທາງແຕ່ປະມານ 15 ກິໂລແມັດ, ມີເນື້ອທີ່ທັງໝົດ ມີ 1,326.8419 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງສອງຄອນ ດັ່ງຂໍ້ມູນລະອຽດລຸ່ມນີ້: ທິດເໜືອ: ຕິດກັບ ບ້ານດົງບູນ ແລະ ບ້ານດອນຍ່າໂນງ(ເມືອງຊົນລະບູລີ) ທິດຕາເວັນອອກ: ຕິດກັບບ້ານດົງສະຫວ່າງ, ທິດໃຕ້: ຕິດກັບບ້ານ ສົງທ່າ, ຕາເວັນຕົກ: ຕິດກັບ ບ້ານລະຫານ້ຳ.

ບ້ານສອງຄອນ ມີ 1 ຊົນເຜົ່າຄື: ຊົນເຜົ່າ ລາວ ນັບຖື ສາດສະໜາພຸດ 100%, ປະກອບ ມີ 187 ຫຼັງຄາເຮືອນ, ມີ 226 ຄອບຄົວ ມີພົນລະເມືອງທັງໝົດ 1161 ຄົນ, ຍິງ 585 ຄົນ. ຊາວບ້ານປະກອບອາຊີບກະສິກຳເປັນຕົ້ນຕໍຄື: ແມ່ນຍຶດຖືເອົາການເຮັດນາ, ຮອງລົງມາແມ່ນລ້ຽງສັດ, ຫາປາ ແລະ ອື່ນໆ. ແຫຼ່ງລາຍຮັບຂອງປະຊາຊົນພາຍໃນບ້ານ ແມ່ນມາຈາກ 2 ແຫຼ່ງຕົ້ນຕໍຄື: ແມ່ນອາຊີບເຮັດນາ, ປູກພືດກະສິກຳເປັນຕົ້ນຕໍ ແລະ ອື່ນໆ.

ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ບ້ານສອງຄອນ ປະກອບມີ 6 ປະເພດການນຳໃຊ້ຫຼັກ ຊຶ່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກຳ ມີເນື້ອທີ່ 628.54 ເຮັກຕາ ກວມເອົາ 47.37% (ໃນນີ້ ດິນນາ ແລະ ດິນປູກພືດກະສິກຳທົ່ວໄປ ແລະ ດິນແຮ່ຂະຫຍາຍກະສິກຳ), ເຂດດິນປຸກສ້າງ ມີເນື້ອທີ່ 28.33 ເຮັກຕາ ກວມເອົາ 2.14% (ໃນນີ້ມີດິນປຸກສ້າງບຸກຄົນ, ດິນປຸກສ້າງລັດ, ສຸກສາລາ, ໂຮງຮຽນ, ຫ້ອງການຈຸດສຸມ, ໂຮງຮຽນປະຖົມ ແລະ ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທຳ ມີເນື້ອທີ່ 39.26 ເຮັກຕາ ກວມເອົາ 2.96% (ໃນນີ້ມີປ່າມະເຫສັກ, ປ່າຊ້າ ແລະ ວັດຂອງບ້ານ), ເຂດດິນປ່າໄມ້ ມີເນື້ອທີ່ 437.13 ເຮັກຕາ ກວມເອົາ 32.94% (ໃນນີ້ມີ ປ່າຊົມໃຊ້ທົ່ວໄປ, ປ່າເຫຼົ່າອ່ອນ), ທີ່ດິນຄົມມະນາຄົມ ມີເນື້ອທີ່ 8.18 ເຮັກຕາ. ກວມເອົາ 0.62% (ໃນນີ້, ເສັ້ນທາງພາຍໃນບ້ານ, ທາງເຊື່ອມຕໍ່ລະຫວ່າງບ້ານ, ດິນສະຫງວນແຄມທາງ) ແລະ ທີ່ດິນບໍລິເວນນ້ຳ ມີເນື້ອທີ່ 185.417 ເຮັກຕາ ກວມເອົາ 13.97% (ໃນນີ້, ເຊບັ້ງຫຽງ, ເຊຈາພອນ, ຫ້ວຍສາລາ, ຫ້ວຍເກົ່າ, ໜອງລວມບ້ານ, ໜອງທຳມະຊາດ ແລະ ດິນສະຫງວນແຄມນ້ຳ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນຳໃຊ້ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຮ່ວມກັບຄະນະກຳມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສຳຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນ້ຳ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນຳໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນ້ຳ - ສັດປ່າ ແລະ ການກະທຳທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

## ສາລະບານ


ຄຳນຳ............................................................I
ສັງລວມຫຍໍ້............................................................II
ສາລະບານຕາຕະລາງ............................................................V
ສາລະບານຮູບພາບ............................................................VI
I. ຈຸດປະສົງ ແລະ ລະດັບຄາດໝາຍ............................................................1
1.1. ຈຸດປະສົງ............................................................1
1.2. ລະດັບຄາດໝາຍ............................................................1
1.3. ຂັ້ນຕອນໃນການຈັດຕັ້ງປະຕິບັດ............................................................2
1.4. ວິທີການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Soflware ຫຼື Program ຕ່າງເຂົ້າຊ່ວຍ............................................................2
II. ສະພາບລວມຂອງບ້ານ............................................................4
2.1. ປະຫວັດຄວາມເປັນມາຂອງບ້ານ............................................................4
2.2. ດ້ານການປົກຄອງ............................................................5
2.3. ເຂດຄຸ້ມຄອງຂອງບ້ານ............................................................5
2.4. ຂໍ້ມູນດ້ານເສດຖະກິດ-ສັງຄົມ............................................................9
2.4.1. ການປະກອບອາຊີບ............................................................9
2.4.2. ແຫລ່ງລາຍຮັບຂອງປະຊາຊົນ............................................................9
2.4.3. ດ້ານການນຳໃຊ້ທີ່ດິນ............................................................9
III. ການຈັດສັນການນຳໃຊ້ທີ່ດິນ............................................................10
3.1 ການກຳນົດເຂດການນຳໃຊ້ທີ່ດິນຂອງບ້ານ............................................................10
3.1.1. ການກຳນົດເຂດທີ່ດິນກະສິກຳ............................................................11
3.1.2. ການກຳນົດເຂດດິນປຸກສ້າງ............................................................11
3.1.3. ການກຳນົດທີ່ດິນວັດທະນາທຳ............................................................11
3.1.4. ການກຳນົດທີ່ດິນ ປກສ-ປກຊ............................................................11
3.1.5. ການກຳນົດທີ່ດິນປ່າໄມ້............................................................11
3.1.6. ການກຳນົດເຂດທີ່ອຸດສາຫະກຳ............................................................11
3.1.7. ການກຳນົດນົດທີ່ດິນຄົມມະນາຄົມ............................................................11
3.1.8. ການກຳນົດນົດທີ່ດິນບໍລິເວນນ້ຳ............................................................11
IV. ທິດທາງການວາງແຜນພັດທະນາທີ່ດິນ............................................................14
4.1. ທ່າແຮງໃນການພັດທະນາຂອງບ້ານ............................................................14
4.2. ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານ............................................................15
V. ລະບຽບການໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ............................................................15
5.1. ການຄຸ້ມຄອງທີ່ດິນກະສິກຳ............................................................15
5.2. ການຄຸ້ມຄອງທີ່ດິນປຸກສ້າງ............................................................15
5.3. ການຄຸ້ມຄອງທີ່ດິນປ່າໄມ້............................................................15
5.4. ການຄຸ້ມຄອງທີ່ດິນຄົມມະນາຄົມ............................................................16
5.5. ການຄຸ້ມຄອງທີ່ດິນວັດທະນາທຳ............................................................16
5.6. ການຄຸ້ມຄອງທີ່ດິນບໍລິເວນນ້ຳ............................................................16

VI. ການຫັນປ່ຽນປະເພດທີ່ດິນ ........................................................................................................ 16
VII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ........................................................................................ 16
6.1. ການຈັດຕັ້ງ ...................................................................................................................... 16
6.2. ບຸກຄະລາກອນ .................................................................................................................. 16
6.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ........................................................... 16
6.4. ຂອບເຂດສິດ .................................................................................................................... 17
6.5. ລະບອບແບບແຜນວິທີເຮັດວຽກ ......................................................................................... 17
6.6. ການຕິດຕາມກວດກາ ......................................................................................................... 17
ເອກະສານອ້າງອີງ ............................................................................................................................. 18
ເອກະສານຊ້ອນທ້າຍທີ 1: ແບບຟອມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານສອງຄອນ ........................................................................................................ 20
ເອກະສານຊ້ອນທ້າຍທີ 2: ບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ ........................................................................................................ 28
ເອກະສານຊ້ອນທ້າຍທີ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ ........................................................................ 32
ເອກະສານຊ້ອນທ້າຍທີ 4: ຂໍ້ຕົກລົງພະແນກກະສິກຳ ແລະ ສິ່ງແວດລ້ອມວ່າດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມວຽກສຳຫຼວດຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍເມືອງສອງຄອນ ........................................................................................................ 35
ເອກະສານຊ້ອນທ້າຍທີ 5: ຂໍ້ຕົກລົງທ່ານເຈົ້າເມືອງສອງຄອນດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມວຽກສຳຫຼວດຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍເມືອງສອງຄອນ .......... 36
ເອກະສານຊ້ອນທ້າຍທີ 6: ບົດບັນທຶກກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ........................................................................ 38
ເອກະສານຊ້ອນທ້າຍທີ 7: ໜັງສືສະເໜີ ກ່ຽວກັບພິຈາລະນາອະນຸມັດແຜນຈັດສັນການນາໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ........................................................................ 41

## ສາລະບານຕາຕະລາງ

ຕາຕະລາງ 1: ໄລຍະເວລາໃນການຈັດຕັ້ງປະຕິບັດແຕ່ເລີ່ມຕົ້ນຈົນສຳເລັດ ..................................................... 3
ຕາຕະລາງ 2: ເຄື່ອງມື ແລະ ອຸປະກອນຮັບໃຊ້ວຽກງານ ........................................................................... 4
ຕາຕະລາງ 3: ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84 ................................................ 6
ຕາຕະລາງ 4: ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84 ................................................ 6
ຕາຕະລາງ 5: ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84 ................................................ 7
ຕາຕະລາງ 6: ຄ່າພິກັດ ຫ້ວຍຄໍ້ ກັບບ້ານ  ກຸ່ມລະບົບ WGS 84 ................................................................ 7
ຕາຕະລາງ 7: ຄ່າພິກັດ ຫ້ວຍຄໍ້ ກັບບ້ານ  ກຸ່ມລະບົບ WGS 84 ................................................................ 8
ຕາຕະລາງ 8: ປູກພືດ ແລະ ສຳຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ............................................................ 9
ຕາຕະລາງ 9: ເນື້ອທີ່ການນຳໃຊ້ທີ່ດິນປະຈຸບັນ, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ........... 9
ຕາຕະລາງ 10: ເນື້ອທີ່ການຈັດສັນທີ່ດິນແຕ່ລະປະເພດ, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ 12
ຕາຕະລາງ 11: ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ດິນຂອງແຜນຈັດສັນການນຳໃຊ້ທີ່ດິນ ........................................................................................................................................ 13

# ສາລະບານຮູບພາບ


ຮູບທີ 1: ສະພາບພູມສັນຖານ ບ້ານສອງຄອນ, ເມືອງສອງຄອນ ແຂວງສະຫວັນນະເຂດ .................................. 5

ຮູບທີ 2: ແຜນທີ່ຂອບເຂດຄຸ້ມຄອງ ບ້ານສອງຄອນ, ເມືອງ ສອງຄອນ, ແຂວງສະຫວັນນະເຂດ ......................... 8

ຮູບທີ 3: ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ຂອງ ບ້ານສອງຄອນ , ເມືອງສອງຄອນ, ແຂວງ ສະຫວັນນະເຂດ....... 10

ຮູບທີ 4: ແຜນທີ່ ການຈັດສັນທີ່ດິນຂອງ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ .................. 13

ຮູບທີ 5 : ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງ ການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ14

ຮູບທີ 6: ສະແດງເຖິງຄວາມແຕກຕ່າງການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ.................................. 14

# I. ຈຸດປະສົງ ແລະ ລະດັບຄາດໝາຍ

## 1.1. ຈຸດປະສົງ

ຈຸດປະສົງຂອງການສໍາຫຼວດວາງແຜນຈັດສັນ ແລະ ການນໍາໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສໍາຄັນໃນລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ, ທັງນີ້ກໍ່ເພື່ອເຮັດ ໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນໍາໃຊ້ທີ່ດິນ ໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບ ສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທໍາມະຊາດ, ພ້ອມດຽວກັນ ກໍ່ຕ້ອງໃຫ້ສອດຄອງກັບທິດທາງແຜນການພັດທະນາເສດຖະກິດ - ສັງຄົມ ຂອງແຕ່ລະເຂດ. ດັ່ງນັ້ນ, ຈຸດປະສົງຂອງການວາງແຜນສໍາຫຼວດຈັດສັນທີ່ດິນຕ້ອງໄດ້ເລັ່ງໃສ່ໃນຂົງເຂດວຽກງານຫຼັກລຸ່ມນີ້:

1) ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ໃຫ້ມີຄວາມຍືນຍົງຕະຫຼອດໄປ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ສາມາດນໍາຜົນປະໂຫຍດ ສູງສຸດມາໃຫ້ປະເທດຊາດ.

2) ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີ່ດິນປ່າໄມ້ແບບຊະຊາຍ, ການສວຍໂອກາດເອົາທີ່ດິນຂອງ ລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສໍາປະທານທີ່ດິນຂອງລັດ ທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ.

3) ເພື່ອຊຸກຍູ້ ແລະ ສົ່ງເສີມໃຫ້ແກ່ການລົງທຶນເຂົ້າໃນການພັດທະນາທີ່ດິນຢ່າງຮອບດ້ານຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

4) ເພື່ອຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນໍາໃຊ້ທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ໃນຂອບເຂດທົ່ວປະເທດແລ້ວນໍາສະເໜີໃຫ້ລັດຖະບານພິຈາລະນາ ແລະ ສະພາແຫ່ງຊາດ ຮັບຮອງເອົາ.

## 1.2. ລະດັບຄາດໝາຍ

1). ເຮັດໃຫ້ມີລະບົບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເຮັດໃຫ້ມີລະບຽບຫຼັກການ ແລະ ມາດຕະການໃນການຕິດຕາມກວດກາການນໍາໃຊ້ທີ່ດິນ.

2). ສ້າງເປັນແຜນທີ່ກໍານົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍ ຊຶ່ງມີຄວາມເປັນເອກະພາບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ.

3). ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງ ກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທາມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ.

4). ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ທີ່ດິນເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ - ສັງຄົມ ໃຫ້ດີຂຶ້ນເປັນກ້າວໆ.

5). ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ຂອບເຂດໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ຢ່າງຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງໄວ້.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະຊັບພະຍາກອນ ທຳມະຊາດ ຢູ່ໃນແຕ່ລະທ້ອງຖິ່ນໄດ້.

### 1.3. ຂັ້ນຕອນໃນການຈັດຕັ້ງປະຕິບັດ

#### 1.3.1. ຂັ້ນຕອນເປີດກອງປະຊຸມຂັ້ນບ້ານ

ເພື່ອເຜີຍແຜ່ກ່ຽວກັບຈຸດປະສົງໃນການຈັດສັນທີ່ດິນຂັ້ນບ້ານ-ກຸ່ມບ້ານ ເພື່ອໃຫ້ປະຊາຊົນເຂົ້າໃຈໃນການຈັດຕັ້ງປະຕິບັດວຽກງານຈັດສັນທີ່ດິນ.

#### 1.3.2. ຂັ້ນຕອນສຳຫຼວດ ແລະ ແຕ້ມແຜນທີ່

1. ລົງພື້ນທີ່ເພື່ອກຳນົດຈຸດຂອບເຂດການຄຸ້ມຄອງບ້ານ, ແຕ່ລະບ້ານທີ່ມີຊາຍແດນຕິດຈອດກັນພ້ອມທັງເຮັດບົດບັນທຶກ.
2. ສ້າງແຜນທີ່ຂອບເຂດການຄຸ້ມຄອງບ້ານ ແລະ ສົ່ງຂໍ້ມູນຄຳເວົ້າ ແລະ ຄ່າພິກັດທາງດ້ານຂອບເຂດແຕ່ບ້ານໃຫ້ໜ່ວຍງານສັງລວມເພື່ອເຮັດບົດບັນທຶກຂອບເຂດການຄຸ້ມຄອງບ້ານລວມບ້ານທັງໝົດທີ່ມີຂອບເຂດການຄຸ້ມຄອງຕິດຈອດກັນ.
3. ລົງສຳຫຼວດຜັງທາງ ແລະ ປະເພດການນຳໃຊ້ທີ່ດິນຂອງບ້ານ.
4. ແຕ້ມ ແລະ ສ້າງແຜນທີ່ການນຳໃຊ້ທີ່ດິນໃນປະຈຸບັນ ແລະ ແຜນທີ່ຈັດສັນການນຳໃຊ້ທີ່ດິນຂອງບ້ານພ້ອມທັງສົ່ງຂໍ້ມູນທາງເນື້ອທີ່ຂອງດິນແຕ່ລະປະເພດໃຫ້ໜ່ວຍງານສັງລວມເພື່ອປະກອບໃນແຜນຈັດສັນ.

#### 1.3.3. ຂັ້ນຕອນສັງລວມຂໍ້ມູນ ແລະ ສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ

1. ເກັບກຳຂໍ້ມູນເສດຖະກິດ - ສັງຄົມບ້ານ ແລະ ປະເພດການນາໃຊ້ທີ່ດິນຂອງບ້ານ
2. ສ້າງບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານລວມພ້ອມທັງສະເໜີການຕົກລົງ ແລະ ເຊັນເອົາຮັບຮອງເອົາບົດບັນທຶກຂອບເຂດແດນບ້ານ.
3. ສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ແລະ ເຮັດບົດບັນທຶກເພື່ອສະເໜີການຮັບຮອງເອົາແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ.
4. ສັງລວມຂໍ້ມູນທັງໝົດຂອງບ້ານເປັນຕົ້ນຂໍ້ມູນທາງດ້ານເອກະສານ ແລະ ຂໍ້ມູນການແຕ້ມ ເຂົ້າໃນຖານຂໍ້ມູນຂອງບ້ານ (Master Planning).

### 1.4. ວິທີການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Soflware ຫຼື Program ຕ່າງເຂົ້າຊ່ວຍ.

1. ຄູ່ມືການວາງແຜນຈັດສັນທີ່ດິນຂັ້ນບ້ານ ແລະ ກຸ່ມບ້ານ
2. ບົດແນະນຳກ່ຽວກັບບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນ.
3. ຄູ່ມືການນຳໃຊ້ GPS 65s
4. ຄູ່ມືການນຳໃຊ້ Program ArcMap 10.4
5. ຄູ່ມືການນຳໃຊ້ຊັ້ນເລເຢີ ໃນວຽກງານການຈັດສັນວາງແຜນການນຳໃຊ້ທີ່ດິນ (ສະບັບປັບປຸງໃໝ່)

**ບັນດາໂປແກຣມທີ່ສຳຄັນ**

1. ໂປຣແກມ ArcMap 10.XX
2. ໂປຣແກມ MapSource
3. ໂປຣແກມ Google Earth
4. ໂປຣແກມ Microsoft Word & Excel
5. ໂປຣແກມ DNR Garmin.

ຕາຕະລາງ 1: ໄລຍະເວລາໃນການຈັດຕັ້ງປະຕິບັດແຕ່ເລີ່ມຕົ້ນຈົນສຳເລັດ

| ລຳດັບ | ໜ້າວຽກ | ພາກສ່ວນ |
|---|---|---|
| 1 | • ເປີດກອງປະຊຸມ ສະເໜີຈຸດປະສົງຕໍ່ ອຳນາດການປົກຄອງບ້ານ<br>• ສະເໜີອະທິບາຍວິທີການ, ບາດກ້າວ,ຂັ້ນຕອນ ແລະ ເຜີຍແຜ່ລະບຽບການຕ່າງໆທີ່ກ່ຽວຂ້ອງກັບວຽກງານ ຈັດສັນທີ່ດິນຂັ້ນບ້ານເພື່ອໃຫ້ອົງການປົກ ຄອງບ້ານ ໄດ້ຮັບຮູ້, ເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 2 | • ເກັບກຳຂໍ້ມູນຕາມແບບພິມສຳພາດ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານ<br>• ປ້ອນຂໍ້ມູນຈາກແບບພິມເຂົ້າຖານຂໍ້ມູນ ໃຫ້ນຳເອົາຂໍ້ມູນທີ່ເກັບກຳໄດ້ຈາກແຫຼ່ງຂໍ້ມູນຕ່າງໆ ເຂົ້າຖານຂໍ້ມູນຄອມພິວເຕີ້<br>• ແຈ້ງເຊີນອົງການປົກຄອງບ້ານອ້ອມຂ້າງ ທີ່ມີເຂດແດນຕິດກັບບ້ານທີ່ກຳລັງຈັດຕັ້ງປະຕິບັດ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 3 | • ເປີດກອງປະຊຸມ ເພື່ອກຳນົດເຂດຄຸ້ມຄອງບ້ານ, ບັນທຶກເປັນຂໍ້ຄວາມລະອຽດໃນແຕ່ລະທິດ, ໂດຍຕົກລົງເຫັນດີລະຫວ່າງບ້ານຕໍ່ບ້ານ ພ້ອມທັງເຊັນປຶດບັນທຶກຮ່ວມກັນ<br>• ລົງກວດກາພື້ນທີ່ເຂດຄຸ້ມຄອງຂອງບ້ານຕໍ່ບ້ານ ຕາມປຶດບັນທຶກ ໂດຍນຳໃຊ້ GPS ເກັບກຳຈຸດຄ່າພິກັດ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 4 | • ກຳນົດ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ເຂົ້າໃນຖານຂໍ້ມູນຄອມພິວເຕີ້, ໃຫ້ຖືກຕ້ອງຕາມເຕັກນິກວິຊາການທີ່ໄດ້ກຳນົດໄວ້;<br>• ຮັບຮອງ ແລະ ຢັ້ງຢືນເຂດຄຸ້ມຄອງບ້ານ, ໂດຍການນຳຂໍ້ມູນທີ່ໄດ້ມາສ້າງປຶດບັນທຶກ ແລະ ສ້າງແຜນທີ່ເຂດຄຸ້ມຄອງຂອງບ້ານ ລົງລາຍເຊັນຢັ້ງຢືນໃນແຕ່ລະບ້ານ ທີມງານວິຊາການເຕັກນິກ, ຫ້ອງການ ຊສ ເມືອງ, ຮັບຮູ້ໂດຍທ່ານເຈົ້າເມືອງ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |
| 5 | • ລົງສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນປະຈຸບັນຂອງບ້ານນຳໃຊ້ເຄື່ອງມື GPS ແລະ ແບບພິມບັນທຶກພາກສະໜາມຂອງທີມງານວິຊາການ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |

| | | |
|---|---|---|
| 6 | • ສັງລວມຂໍ້ມູນ ແລະ ກຳນົດປະເພດທີ່ດິນປະຈຸບັນຂອງບ້ານ ປ້ອນຂໍ້ມູນທີ່ໄດ້ຈາກພາກສະໜາມ ເຂົ້າໃນຄອມພິວເຕີ້ແຕ້ມແຜນທີ່ການນຳໃຊ້ທີ່ດິນປະຈຸບັນຂອງບ້ານ<br>• ກວດກາຄວາມລະອຽດທາງດ້ານເຕັກນິກຂອງແຜນທີ່, ຄິດໄລ່ເນື້ອທີ່ປະເພດທີ່ດິນ, ສ້າງແຜນທີ່ການນຳໃຊ້ທີ່ດິນປະຈຸບັນ | • ທີມງານວິຊາການ |
| 7 | • ເປີດກອງປະຊຸມປຶກສາຫາລື ເພື່ອສ້າງແຜນຈັດສັນທີ່ດິນ ລະຫວ່າງທີມງານວິຊາການ ກັບ ອົງການຈັດຕັ້ງຂັ້ນບ້ານເພື່ອກຳນົດເຂດ ແລະ ປະເພດທີ່ດິນ ທີ່ຈະໄດ້ຈັດສັນ ນຳໃຊ້ທີ່ດິນໃນອະນາຄົດຂອງບ້ານ ພ້ອມທັງເຮັດບົດບັນທຶກ ແລະ ສ້າງແຜນທີ່ຈັດສັນທີ່ດິນຂອງບ້ານ<br>• ເປີດກອງປະຊຸມ ຜ່ານແຜນຈັດສັນທີ່ດິນຂອງບ້ານ ເພື່ອປະກອບຄຳເຫັນໃສ່ຮ່າງແຜນຈັດສັນທີ່ດິນໃນເບື້ອງຕົ້ນພ້ອມທັງສ້າງບົດບັນທຶກຄວາມເປັນເອກະພາບ | • ທີມງານວິຊາການ<br>• ອຳນາດການປົກຄອງບ້ານ |

ຕາຕະລາງ 2: ເຄື່ອງມື ແລະ ອຸປະກອນຮັບໃຊ້ວຽກງານ

| ລ/ດ | ບັນດາເຄື່ອງມື | ຈຳນວນ |
|---|---|---|
| 1 | ເຄື່ອງ Computer Notebook | 2 ໜ່ວຍ |
| 2 | ເຄື່ອງ Printer | 1 ຊຸດ |
| 3 | ກ້ອງຖ່າຍຮູບ | 1 ໜ່ວຍ |
| 4 | GPS Map 60,62,65 | 2 ໜ່ວຍ |
| 5 | LCD + ຈໍ | 2 ໜ່ວຍ |
| 6 | ລົດໃຫຍ່ | 1 ຄັນ |

# II. ສະພາບລວມຂອງບ້ານ

## 2.1. ປະຫວັດຄວາມເປັນມາຂອງບ້ານ

ບ້ານສອງຄອນເປັນບ້ານໜຶ່ງທີ່ມີປະຫັວດການສ້າງຕັ້ງອັນຍຶດເຍື້ອຍາວນາເຊິ່ງເລີ່ມແຕ່ທ້າຍສັດຕະວັດທີ XVII ສະໄໝອານາຈັກລາວລ້ານຊ້າງຂອງພວກເຮົາໄດ້ຕົກເປັນຫົວເມືອງຂຶ້ນຂອງສັກດີນາສະຫຍາມ (ລາຊະອານາຈັກໄທ ໃນປະຈຸບັນ) ຫຼື ເອີ້ນ ຍຸກສະໄໝ ເອີກຊ່ວຍແກວ- ແກວຊ່ວຍໄທ, ຍຸກແກວໄລ່-ໄທກວດ (ໜ້າທີ 100-101 ຂອງປຶ້ມນະຄອນຫຼວງວຽງຈັນ 450 ປີ) ແລະ ເປັນໄລຍະຂອງເຈົ້າອົງບຸນ ຫຼື ເຈົ້າ ສິລິບຸນຍະສານ (ຄສ 1730-1780) ທີ່ປົກຄອງອານາຈັກວຽງຈັນແຕ່ງຕັ້ງຍາຫຼວງ ອຸ່ນແກ້ວ ລົງມາປົກຄອງເມືອງສອງຄອນ (ຄສ 1770) ໂດຍກຳນົດບ້ານລະຫາໂຄກ ເມືອງສອງຄອນປະຈຸບັນ ເປັນທີ່ວ່າການປົກຄອງເມືອງສອງຄອນໃນໄລຍະນັ້ນ ຍາຫຼວງອຸ່ນແກ້ວ ຫຼື ພະຍາຂຽດໂມ້ ມີພັນລະຍາຊື່ ນາງ ຫຼາວທອວ ແລະ ມີລູກກັນ 2 ຄົນຄື: ທ. ໂກກ ແລະ ທ. ພິມ. ພໍຢູ່ມາໄດ້ຫຼາຍປີ ຈຶ່ງຊອກຫາຈຸດທີ່ຕັ້ງຂອງບ້ານ ດັ່ງນັ້ນ ໝໍໂຫນ ຊື່ດັງຢູ່ໂຫນລຳຫວາຍ ຈຶ່ງໄດ້ແນະນຳໃຫ້ສອງອ້າຍນ້ອງວ່າໃຫ້ໄປຫາສະຖານທີ່ຕັ້ງບ້ານຢູ່ຝັ່ງຂວາ ຂອງເຊບັ້ງຫຽງ ຍ້ອນວ່າມີນໍ້າເຊນ້ອຍ ແລະ ເຊບັ້ງຫຽງໄຫຼຜ່ານອ້ອມ ເປັນບ່ອນທີ່ມີຄວາມອຸດົມສົມບູນໄປດ້ວຍ ຫ້ວຍ, ໜອງ,ຄອງບຶງ ແລະ ປ່າເຂົາລຳເນົາ ຈຶ່ງມີຄວາມອຸດົມສົມບູນ ແລະ ມີ

ຄວາມຮຸ່ງເຮືອງ ສີວິໄລ ໃນອານາຄົດ ຈາກນັ້ນຫຼວງພະຈຳເລີນ ພົນນະລົບ ແລະ ຫຼວງພະພົມ ພ້ອມດ້ວຍພໍ່ແມ່ປະຊາຊົນເລົ່ານັ້ນ ກໍ່ໄດ້ມາພັກເຊົາຢູ່ຊົ່ວຄາວ ແຄມໜອງລຳຫວາຍ ໃຕ້ບ້ານສີງທ່າ (ເອີ້ນຕາມທາງກະແສນ້ຳໄຫຼ ໂດຍໄດ້ປູກໝາກມ່ວງຢູ່ ສອງຕົ້ນຄື: ຕົ້ນໜຶ່ງປູກໄວ້ຢູ່ແຄມໜອງລຳປະເຕົາ ແລະ ອີກຕົ້ນໜຶ່ງປູກໄວ້ຢູ່ທາງເຂົ້າທ່າໜອງລຳຫວາຍ. ຢູ່ຕໍ່ມາກໍ່ໄດ້ຍ້າຍຂ້າມເຊບັ້ງຫຽງ ເບື້ອງຂວາໄກ້ໆ ກັບໜອງປະເຕົາ (ໜອງປ່ອຍເຕົ່າໃນເມື່ອກ່ອນແລ້ວໃສ່ຊື່ວ່າ: ບ້ານສອງຄອນ ມາຮອດປະຈຸບັນ.8/6/1962. ດັ່ງສະແດງໃນຮູບພາບລຸ່ມນີ້:



ຖ່າຍພາບໂດຍ: ທີມງານໂຄງການ IWRM-EbA

ຮູບທີ 1: ສະພາບພູມສັນຖານ ບ້ານສອງຄອນ, ເມືອງສອງຄອນ ແຂວງສະຫວັນນະເຂດ

### 2.2. ດ້ານການປົກຄອງ

ບ້ານສອງຄອນ ຕັ້ງຫ່າງຈາກເທດສະບານເມືອງສອງຄອນ ໄປທາງທາງໃຈກາງຂອງເມືອງ, ມີໄລຍະທາງແຕ່ປະມານ 15 ກິໂລແມັດ, ມີເນື້ອທີ່ທັງໝົດ 1,326.8419 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງສອງຄອນ ດັ່ງຂໍ້ມູນລະອຽດລຸ່ມນີ້: ທິດເໜືອຕິດກັບ ບ້ານດົງບູນ ແລະ ບ້ານດອນຍ່າໂນງ(ເມືອງຊົນລະບູລີ) ທິດຕາເວັນອອກຕິດກັບບ້ານດົງສະຫວ່າງ, ທິດໃຕ້ຕິດກັບບ້ານ ສີງທ່າ ແລະ ຕາເວັນຕົກ ຕິດກັບ ບ້ານລະຫານ້ຳ.

### 2.3. ເຂດຄຸ້ມຄອງຂອງບ້ານ

ບ້ານສອງຄອນ ມີຂອບເຂດຄຸ້ມຄອງຕິດກັບບ້ານຕ່າງໆຄື:

1. **ທິດເໜືອ: ຕິດກັບ 2 ບ້ານຄື: ບ້ານດົງບູນ ແລະ ບ້ານດອນຍາໂນງ.**

ບ້ານສອງຄອນ ຕິດກັບ ບ້ານດົງບູນ ເລີ່ມຈາກຈຸດຊາຍແດນ 3 ບ້ານ (ບ້ານລະຫານ້ຳ, ບ້ານດົງບູນ ແລະ ບ້ານສອງຄອນ) ເຊິ່ງເລີ່ມຈາກຈຸດພົບກັນລະຫວ່າສາຍເຊຈາພອນ, ສາຍເຊຊັງຊອຍ ແລະ ເຊນ້ອຍ ແລ້ວຂຶ້ນເລາະໄປຕາມກາງສາຍເຊຊັງຊອຍຈົນຮອດປາກຮ່ອງກົກງີ້ວຕາກ ຕົກໃສ່ເຊຊັງຊອຍ ແມ່ນຈຸດສິ້ນສຸດລະຫວ່າງບ້ານດົງບູນ ແລະ ບ້ານສອງຄອນ ເຊິ່ງມີໄລຍະທັງໝົດ 1894 ແມັດ.

ຕາຕະລາງ 3: ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532063 | 1803430 | ເຊຊັ້ງຊອຍ ແລະ ເຊຈຳພອນພົບກັນ | |
| 2 | 532726 | 1803140 | ສາຍເຊຊັ້ງຊອຍ | |
| 3 | 532878 | 1803320 | ສາຍເຊຊັ້ງຊອຍ | |
| 4 | 532678 | 1802940 | ສາຍເຊຊັ້ງຊອຍ | |
| 5 | 532267 | 1803520 | ສາຍເຊຊັ້ງຊອຍ | |
| 6 | 532567 | 1802780 | ສາຍເຊຊັ້ງຊອຍ | |
| 7 | 532425 | 1802990 | ສາຍເຊຊັ້ງຊອຍ | |
| 8 | 532362 | 1803270 | ສາຍເຊຊັ້ງຊອຍ | |
| 9 | 532002 | 1797030 | ຈຸດກາງເຊບັ້ງຫຽງຕັດໃສ່ໂຮງຮຽນມສ ສອງຄອນ | |
| **ລວມໄລຍະ** | | | | |

ບ້ານສອງຄອນ ຕິດກັບ ດອນຍ່າໂນງ ເລີ່ມແຕ່ປາກຮ່ອງກົກຍົ້ວຕາກ ມາສຸດຢູ່ຮ່ອງຫູໝູ ເຊິ່ງມີໄລຍະທັງໝົດແມ່ນ 820 ແມັດ.

ຕາຕະລາງ 4: ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 533040 | 1803370 | ປາກຮ່ອງກຸດໂກກ | |
| 2 | 533642 | 1802810 | ປາກຮ່ອງກົກງີ້ວຕາກ | |
| **ລວມໄລຍະ** | | | | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

**2. ທິດຕາເວັນອອກ: ຕິດກັບ 1 ບ້ານຄື:**

ບ້ານດົງສະຫວ່າງ ເລີ່ມມແຕ່ປາກຮ່ອງກຸດໂກກ ຕັດມາໃສ່ທາງເບຕົງຢູ່ຂົວສາລາແລ້ວຕັດມາໃສ່ທາງເບຕົງບ ບ້ານດົງສະຫວ່າງ ແລະ ລຽບໃສ່ຕາມທາງຊອຍດອນມ່ວງປ່າຊ້າ ຕັດມາໃສ່ໜອງຕາກ້າ ແລ້ວຕັດມາໃສ່ເຮືອນທ້າງ ທອນ ຈາກນັ້ນຕໍ່ມາໃສ່ໂຮງຮຽນມັດທະຍົມ ຕັດໃສ່ກາງເຊບັ້ງຫຽງ ມີໄລຍະ 8220 ແມັດ.

ຕາຕະລາງ 5: ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532002 | 1797031 | ຈຸດກາງເຊບັ້ງຫຽງຕັດໃສ່ ໂຮງຮຽນມສ ສອງຄອນ | |
| 2 | 532216 | 1797251 | ເລາະຕາມເສັ້ນ | |
| 3 | 532911 | 1797472 | ເລາະຕາມເສັ້ນ | |
| 4 | 533286 | 1797978 | ເລາະຕາມເສັ້ນ | |
| 5 | 533457 | 1799497 | ເລາະຕາມເສັ້ນ | |
| 6 | 533907 | 1801019 | ເລາະຕາມເສັ້ນ | |
| 7 | 533642 | 1802810 | ກົກງິ້ວຕາກ | |
| **ລວມໄລຍະ** | | | | |

**3. ທິດໃຕ້: ຕິດກັບ 1 ບ້ານຄື: ບ້ານ ສີງທ່າ**

ບ້ານ ສອງຄອນ ຕິດກັບ ບ້ານ ສີງທ່າ: ເລີ່ມແຕ່ກາງເຊບັ້ງຫຽງໄປຫາລະຫວ່າງປາກເຊຈຳພອນແມ່ນຈຸດສຸດທ້າຍຂອງບ້ານສີງທ່າມີໄລຍະລວມທັງໝົດແມ່ນ 2642 ແມັດ.

ຕາຕະລາງ 6: ຄ່າພິກັດ ຫ້ວຍຄໍ້ ກັບບ້ານ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 530652 | 1799290 | ຈຸດເຊນ້ອຍ ແລະ ເຊບັ້ງຫຽງພົບກັນ | 0 |
| 2 | 530795 | 1798950 | ເຊບັ້ງຫຽງ | |
| 3 | 531044 | 1798550 | ເຊບັ້ງຫຽງ | |
| 4 | 531369 | 1798040 | ເຊບັ້ງຫຽງ | |
| 5 | 531708 | 1797500 | ເຊບັ້ງຫຽງ | |
| 6 | 532002 | 1797030 | ຈຸດເຊບັ້ງຫຽງຕັດຂຶ້ນໃສ່ ມສ ສອງຄອນ | |
| ລວມໄລຍະ | | | | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

**4. ທິດຕາເວັນຕົກ: ຕິດກັບ 1 ບ້ານ ຄື: ບ້ານລະຫານໍ້າ**

ບ້ານ ສອງຄອນ ຕິດກັບ ບ້ານລະຫານໍ້າ: ຈາກປາກເຊຈຳພອນຕົກມາໃສ່ກາງເຊບັ້ງຫຽງ ແລ້ວຕັດໄປໃສ່ເໜືອວັງສະຫງວນ ແລະ ຕັດໄປໃສ່ເໜືອປາກຫ້ວຍສາລາເກົ່າເຂດສຸດວັງສະຫງວນ ຕັດໄປໃສ່ວັງຝັງແດງ ແລະ ລຽບຕາມເຊຈຳພອນໄປຈົນຮອດປາກເຊສັງຊອຍຕົກລົງມາໃສ່ເຊຈຳພອນ ມີໄລຍະທັງໝົດ 7748 ແມັດ

ຕາຕະລາງ 7: ຄ່າພິກັດ ຫ້ວຍຄໍ້ ກັບບ້ານ ກຸ່ມລະບົບ WGS 84

| ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48) | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532063 | 1803430 | ຈຸດເຊຊັ່ງຊອຍ ແລະ ເຊຈຳພອນພົບກັນ | |
| 2 | 532048 | 1803200 | ເລາະຕາມເຊນ້ອຍ | |
| 3 | 532015 | 1801410 | ເລາະຕາມເຊນ້ອຍ | |
| 4 | 530957 | 1801950 | ເລາະຕາມເຊນ້ອຍ | |
| 5 | 530823 | 1800930 | ຫົວຫ້ວງຝາກແດງ | |
| 6 | 530554 | 1799530 | ຈຸດຕັດຂ້າມດອນແດງ | |
| 7 | 530567 | 1800570 | ທ່າລົງຂ້າມໄປບ້ານສີງທ່າ | |
| 8 | 530547 | 1799370 | ຈຸດເຊນ້ອຍ ເຊບັງຫຽງພົບກັນນ | |
| **ລວມໄລຍະ** | | | | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ, ປີ 2025

ຮູບທີ 2: ແຜນທີ່ຂອບເຂດຄຸ້ມຄອງ ບ້ານສອງຄອນ, ເມືອງ ສອງຄອນ, ແຂວງສະຫວັນນະເຂດ

### 2.4. ຂໍ້ມູນດ້ານເສດຖະກິດ-ສັງຄົມ

#### 2.4.1. ການປະກອບອາຊີບ

ປະຊາຊົນສ່ວນໃຫຍ່ຂອງບ້ານສອງຄອນ ແມ່ນຍຶດຖືເອົາການເຮັດນາ, ປູກຢາງບົງ, ປູກຕົ້ນແຄມເຮັດສວນ

ຕາຕະລາງ 8: ປູກພືດ ແລະ ສໍາຮອງລ້ຽງມາແມ່ນລ້ຽງສັດ ແລະ ອື່ນໆ.

| ລ/ດ | ການປະກອບອາຊີບ | ຈໍານວນຄົນ | ໝາຍເຫດ |
|---|---|---|---|
| 01 | ເຮັດນາ, ເຮັດສວນ | 935 | |
| 03 | ກໍາມະກອນ | 323 | ບໍ່ມີ |
| 04 | ພະນັກງານລັດ | 35 | |
| 05 | ນັກຮຽນ ນັກສຶກສາ | 1554 | |
| 06 | ອາຊີບອື່ນໆ | **10** | ບໍ່ມີ |
| **ລວມທັງໝົດ:** | | | |

#### 2.4.2. ແຫລ່ງລາຍຮັບຂອງປະຊາຊົນ

ແຫຼ່ງລາຍຮັບຂອງປະຊາຊົນພາຍໃນບ້ານ ແມ່ນມາຈາກ 2 ແຫຼ່ງຕົ້ນຕໍຄື: ແມ່ນອາຊີບເຮັດນາ, ເຮັດສວນ ຫາປາເປັນຕົ້ນ ແລະ ອື່ນໆ.

#### 2.4.3. ດ້ານການນໍາໃຊ້ທີ່ດິນ

ສະພາບການນໍາໃຊ້ທີ່ດິນໃນປະຈຸບັນຂອງບ້ານ, ອີງການການວິເຄາະຂໍ້ມູນຂອງບ້ານເຫັນໄດ້ ວ່າປະຊາຊົນພາຍໃນບ້ານແມ່ນຖືເອົາການຜະລິດກະສິກໍາ, ເປັນອາຊີບຕົ້ນຕໍ. ດັ່ງນັ້ນ, ເປີເຊັນ ການນໍາໃຊ້ທີ່ດິນກວມເອົາເນື້ອທີ່ 464.59 ເຮັກຕ້າ ເທົ່າກັບ 35,02 % ເປີເຊັນ ເນື້ອທີ່ທັງໝົດພາຍໃນບ້ານ 1,326.84 ເຮັກຕາ.

ຕາຕະລາງ 9: ເນື້ອທີ່ການນໍາໃຊ້ທີ່ດິນປະຈຸບັນ, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ

| ລໍາດັບ | ປະເພດທີ່ດິນ | ລະຫັດດິນ | ເນື້ອທີ່ (ຮຕ) | ເປີເຊັນ % |
|---|---|---|---|---|
| **I** | **ດິນກະສິກໍາ** | **A** | **464.59** | **35.02** |
| 1 | ດິນນາ | A_1 | 424.7741 | 32.01 |
| 2 | ທີ່ດິນປູກພືດກະສິກໍາ ທົ່ວໄປ | A_2 | 38.6477 | 2.91 |
| 3 | ທີ່ດິນກໍ່ສ້າງໂຄ່ງລ່າງຊົນລະປະທານ | A_4 | 1.1721 | 0.09 |
| **II** | **ດິນປຸກສ້າງ** | **B** | **31.3472** | **2.36** |
| 1 | ດິນປຸກສ້າງບຸກຄົນ | B_1 | 28.6159 | 2.16 |
| 2 | ທີ່ດິນປຸກສ້າງລັດ ຫຼື ດິນລວມບ້ານ | B_2 | 2.7313 | 0.206 |
| **III** | **ດິນວັດທະນະທໍາ** | **C** | **40.12** | **3.02** |
| 1 | ທີ່ດິນສິ່ງປຸກສ້າງທາງ, ວັດທະນະທໍາ | C_1 | 0.6996 | 0.05 |
| 2 | ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ | C_2 | 39.4187 | 2.97 |
| **IV** | **ດິນປ່າໄມ້** | **F** | **643.11** | **48.47** |

| | | | | |
|---|---|---|---|---|
| 1 | ທີ່ດິນປ່າຊົມໃຊ້ທົ່ວໄປ | F_1 | 643.1105 | 48.47 |
| **V** | **ດິນຄົມມະນາຄົມ** | **R** | **7.34** | **0.55** |
| 1 | ທີ່ດິນທາງດິນແດງ ແລະ ທາງປູຢາງ | R_2 | 7.3397 | 0.55 |
| **VI** | **ດິນບໍລິເວນນ້ຳ** | **W** | **140.332** | **10.58** |
| 1 | ທີ່ດິນແມ່ນ້ຳ, ຫ້ວຍນ້ຳ | W_1 | 106.8248 | 8.05 |
| 2 | ທີ່ດິນໜອງນ້ຳທຳມະຊາດ | W_2 | 33.5075 | 2.53 |
| **ລວມທັງໝົດ** | | | **1,326.8419** | **100.00** |

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ, ປີ 2025

ຮູບທີ 3: ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ຂອງ ບ້ານສອງຄອນ , ເມືອງສອງຄອນ, ແຂວງ ສະຫວັນນະເຂດ

# III. ການຈັດສັນການນຳໃຊ້ທີ່ດິນ

## 3.1 ການກຳນົດເຂດການນຳໃຊ້ທີ່ດິນຂອງບ້ານ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ແມ່ນໄດ້ຈັດແບ່ງອອກເປັນ 8 ປະເພດດັ່ງນີ້:

### 3.1.1. ການກຳນົດເຂດທີ່ດິນກະສິກຳ

ປະຊາຊົນສ່ວນຢູ່ພາຍໃນບ້ານສອງຄອນ ສ່ວນໃຫ່ຍແມ່ນມີອາຊີບ ກະສິກຳ ປູກຝັງ, ເປັນຕົ້ນແມ່ນ: ເຮັດນາ, ແລະ ເຮັດສວນແບບປະສົມ ປະສານ ແລະ ການລ້ຽງສັດ, ການຫາປາ ເຂດເຮັດກະສິກຳສ່ວນຫຼາຍແມ່ນຢູ່ລຽບຕາມສາຍຫ້ວຍ ແລະ ແຄມສາຍເຊບັ້ງຫຽງ ແລະ ເຊຈຳພອນ.

### 3.1.2. ການກຳນົດເຂດດິນປຸກສ້າງ

ການກຳນົດທີ່ເຂດທີ່ດິນປຸກສ້າງ ບ້ານສອງຄອນ ປະກອບມີ: ດິນປຸກສ້າງດິນລັດ, ດິນຫ້ອງການບ້ານ, ຫ້ອງການຈຸດສຸມ ດິນໂຮງຮຽນ, ດິນສຸກສາລາ, ແລະ ດິນປຸກສ້າງທີ່ຢູ່ອາໄສ, ສ່ວນຫຼາຍແມ່ນຕັ້ງຢູ່ໃຈກາງບ້ານໃນເຂດດິນປຸກສ້າງ ແລະ ຍັງກຳນົດສະຖານທີ່ຖິ້ມຂີ້ເຫື່ອຍຕິດກັບປ່າມະເຫສັກເທິງບ້ານ.

### 3.1.3. ການກຳນົດທີ່ດິນວັດທະນາທຳ

ປະຊາຊົນພາຍໃນ ບ້ານສອງຄອນ ແມ່ນໄດ້ນັບຖືສາສະໜາພຸດ, ສະນັ້ນ ດິນວັດທະນາທຳ ບ້ານສອງຄອນຈື່ງມີຢູ່ 4 ແຫ່ງ ຄື: ປ່າມະເຫສັກ 2 ແຫ່ງ, ປ່າຊ້ຳ 1ແຫ່ງ ແລະ ດິນວັດ 1 ແຫ່ງ ຄື: ຈຸດທີ 1 ປ່າມະເຫສັກ ແມ່ນຕັ້ງຢູ່ຕິດກັບເຊບັ້ງຫຽງຢູ່ເທິງດິນປຸກສ້າງ, ຈຸດທີ 2 ປ່າຊ້າ ແມ່ນຕັ້ງຢູ່ໃກ້ກັບປ່າມະເຫສັກ, ຈຸດທີ 3 ດິນວັດແມ່ນຕັ້ງຢູ່ຕິດກັບເຊບັ້ງຫຽງ ຕິດກັບເຂດດິນປຸກສ້າງຂອງບ້ານ ແລະ ຍັງໄດ້ກຳນົດເຂດສະຫງວນທ່ອງທ່ຽວທຳມະຊາດໜອງປາເຕົາໃກ້ກັບດິນປຸກສ້າງຫ້ອງການບ້ານ.

### 3.1.4. ການກຳນົດທີ່ດິນ ປກສ-ປກຊ

ການກຳນົດທີ່ດິນ ປກສ-ປກຊ ຢູ່ພາຍໃນບ້ານສອງຄອນ ແມ່ນບໍ່ໄດ້ກຳນົດ.

### 3.1.5. ການກຳນົດທີ່ດິນປ່າໄມ້

ການກຳນົດ ດິນປ່າໄມ້ການກຳນົດທີ່ດິນອຸດສາຫະກຳ ຢູ່ພາຍໃນບ້ານສອງຄອນ ແມ່ນບໍ່ໄດ້ກຳນົດ.

### 3.1.6. ການກຳນົດເຂດທີ່ອຸດສາຫະກຳ

ການກຳນົດທີ່ດິນອຸດສາຫະກຳ ຢູ່ພາຍໃນບ້ານສອງຄອນ ແມ່ນໄດ້ກຳນົດ 2 ຈຸດ ຄື: ຈຸດທີ 1 ແມ່ນຕິດທາງທິດຕາເວັນອອກຂອງບ້ານ, ຈຸດທີ 2 ແມ່ນຕິດກັບທາງທິດຕາເວັນຕົກຂອງບ້ານ.

### 3.1.7. ການກຳນົດນົດທີ່ດິນຄົມມະນາຄົມ

ແມ່ນໄດ້ກຳນົດເອົາ 1 ເສັ້ນຄື: ເສັ້ນທີ 1 ແມ່ນເສັ້ນແຕ່ ແມ່ນເສັ້ນທາງແຕ່ບ້ານຫາບ້ານ ເປັນເສັ້ນທາງເຊື່ອມຕໍ່ລະຫວ່າງເມືອງ ແມ່ນກຳນົດເອົາເບື້ອງລະ 6 ແມັດ, ສ່ວນທາງຕາຣ່ອມ ແລະ ທາງຊອຍພາຍໃນບ້ານແມ່ນໄດ້ກຳນົດເອົາເບື້ອງລະ 6 ແມັດ ເພື່ອການພັດທະນາພື້ນຖານໂຄງລ່າງໃນອານາຄົດ ແລະ ເປັນແຜນອານາຄົດພາຍໃນບ້ານໄວ້.

### 3.1.8. ການກຳນົດນົດທີ່ດິນບໍລິເວນນ້ຳ

ແມ່ນໄດ້ກຳນົດເອົາ ສາຍນ້ຳ, ສາຍເຊ, ຫ້ວຍ, ໜອງທຳມະຊາດ ພາຍໃນບ້ານມີເຊ 02 ແຫ່ງ ຄື: ເຊຈຳພອນ, ເຊບັ້ງຫຽງ, ໜອງທຳມະຊາດຫຼາຍແຫ່ງ ແລະ ມີ 02 ຫ້ວຍ ຄື: ຫ້ວຍສາລາ ແລະ ຫ້ວຍເກົ່າ.

- ເຊຈຳພອນ ແມ່ນເຊີ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 20 ແມັດ;
- ເຊບັ້ງຫຽງ ແມ່ນເຊີ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 25 ແມັດ.
- ທາງອຳນາດການປົກຄອງບ້ານ ໄດ້ກຳນົດເອົາ ໜອງລຳປາເຕົາ ໄວ້ເປັນເຂດທ່ອງທ່ຽວໃນອານາຄົດ.

ຕາຕະລາງ 10: ເນື້ອທີ່ການຈັດສັນທີ່ດິນແຕ່ລະປະເພດ, ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ

| ລຳດັບ | ປະເພດທີ່ດິນ | ລະຫັດດິນ | ສີ | ເນື້ອທີ່ (ຮຕ) | ເປີເຊັນ % |
|---|---|---|---|---|---|
| **I** | **ດິນກະສິກຳ** | **AZ** | | **454.80** | **34.28** |
| 1 | ທີ່ດິນນາ | | | 423.20 | 31.90 |
| 2 | ທີ່ດິນປູກພືດກະສິກຳ ທົ່ວໄປ | AZ_2 | | 30.43 | 2.29 |
| 3 | ທີ່ດິນກໍ່ສ້າງໂຄ່ງລ່າງຊົນລະປະທານ | AZ_4 | | 1.17 | 0.09 |
| **II** | **ດິນປຸກສ້າງ** | **BZ** | | **28.33** | **2.14** |
| 1 | ດິນປຸກສ້າງບຸກຄົນ | BZ_1 | | 25.39 | 1.91 |
| 2 | ທີ່ດິນປຸກສ້າງລັດ ແລະ ດິນລວມບ້ານ | BZ_2 | | 2.94 | 0.22 |
| **III** | **ດິນວັດທະນະທຳ** | **CZ** | | **39.26** | **2.96** |
| 1 | ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ | CZ_1 | | 0.70 | 0.05 |
| 2 | ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ | CZ_2 | | 38.56 | 2.91 |
| **IV** | **ດິນປ່າໄມ້** | **FZ** | | **610.86** | **46.04** |
| 1 | ທີ່ດິນປ່າຊົມໃຊ້ທົ່ວໄປ ຫຼື ປ່າເຫຼົ່າ | FZ_1 | | 234.23 | 17.65 |
| 2 | ທີ່ດິນປ່າສະຫງວນບ້ານ | FZ_24 | | 376.64 | 28.39 |
| **V** | **ທີ່ດິນຄົມມະນາຄົມ** | **RZ** | | **8.18** | **0.62** |
| 1 | ທີ່ດິນທາງດິນແດງ ແລະ ທາງປູຢາງ | RZ_2 | | 7.29 | 0.55 |
| 2 | ທີ່ດິນແຮຂະຫຍາຍເສັ້ນທາງ | RZ_3 | | 0.89 | 0.07 |
| **VI** | **ດິນບໍລິເວນນ້ຳ** | **WZ** | | **185.42** | **13.97** |
| 1 | ທີ່ດິນແມ່ນ້ຳ, ຫ້ວຍນ້ຳ | WZ_1 | | 106.44 | 8.02 |
| 2 | ທີ່ດິນໜອງນ້ຳທຳມະຊາດ | WZ_2 | | 33.50 | 2.53 |
| 3 | ທີ່ດິນສະຫງວນແຄມນ້ຳ | WZ_4 | | 45.47 | 3.43 |
| **ລວມທັງໝົດ** | | | | **1,326.84** | **100** |

ແຫຼ່ງຂໍ້ມູນ: ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ, ປີ 2025




ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງສອງຄອນ, ປີ 2025

ຮູບທີ 4: ແຜນທີ່ ການຈັດສັນທີ່ດິນຂອງ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ

ຕາຕະລາງ 11: ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ດິນຂອງແຜນຈັດສັນການນຳໃຊ້ທີ່ດິນ

| ຊື່ປະເພດດິນ | ເນື້ອທີປັດຈຸບັນ | ເນື້ອທີ່ ຈັດສັນ | ເນື້ອທີ່ ຫຼຸດ-ເພີ່ມ | ເປີເຊັນ ດິນປະຈຸບັນ | ເປີເຊັນ ດິນຈັດສັນ | ເປີເຊັນ ຫຼຸດ-ເພີ່ມ |
|---|---|---|---|---|---|---|
| ດິນກະສິກຳ | 464.59 | 628.54 | -163.94 | 35.02 | 47.37 | -12.36 |
| ດິນປຸກສ້າງ | 31.35 | 28.33 | 3.02 | 2.36 | 2.14 | 0.23 |
| ດິນວັດທະນະທຳ | 40.12 | 39.26 | 0.86 | 3.02 | 2.96 | 0.06 |
| ດິນປກສ-ປກຊ | 0.00 | 0.00 | 0.00 | 0.00 | 0.00 | 0.00 |
| ດິນປ່າໄມ້ | 643.11 | 437.13 | 205.98 | 48.47 | 32.94 | 15.52 |
| ດິນອຸດສາຫະກຳ | 0.00 | 0.00 | 0.00 | 0.00 | 0.00 | 0.00 |
| ດິນຄົມມະນາຄົມ | 7.34 | 8.18 | -0.84 | 0.55 | 0.62 | -0.06 |
| ດິນບໍລິເວນນ້ຳ | 140.33 | 185.42 | -45.08 | 10.58 | 13.97 | -3.40 |

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ປີ 2025)




ຮູບທີ 5 : ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງ ການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ




ຮູບທີ 6 : ສະແດງເຖິງຄວາມແຕກຕ່າງການນຳໃຊ້ດິນປະຈຸບັນ ແລະ ການຈັດສັນທີ່ດິນ

## IV. ທິດທາງການວາງແຜນພັດທະນາທີ່ດິນ

### 4.1. ທ່າແຮງໃນການພັດທະນາຂອງບ້ານ

ບ້ານ ສອງຄອນ ແມ່ນ ເປັນບ້ານໜຶ່ງທີ່ ມີຄວາມອຸດົມສົມບູນດ້ານຊັບພະຍາກອນທຳມະຊາດ, ປ່າໄມ້, ແມ່ນ້ຳລຳເຊ, ເຊິ່ງເປັນທ່າແຮງໃຫ້ແກ່ການສົ່ງເສີມການລົງທຶນດ້ານກະສິກຳຕິດພັນກັບການທ່ອງທ່ຽວທາງທຳມະຊາດ, ຮີດຄອງປະເພນີ ແລະ ວັດທະນະທຳ ທີ່ເປັນເອກະລັກຂອງປະຊາຊົນບັນດາເຜົ່າ ແລະ ມີມູນເຊື້ອໃນການຜະລິດປູກຝັງ-ລ້ຽງສັດ ເຊິ່ງມີເນື້ອທີ່ທຳການຜະລິດ 454.80 ເຮັກຕາ ກວມເອົາ 34.28 ເປີເຊັນຂອງເນື້ອທີ່ທັງໝົດ 1,326.84 ເຮັກຕາ. ເໝາະແກ່ການ ປູກເຂົ້າ, ປູກພືດ ແລະ ປູກໄມ້ອຸດສາຫະກຳເປັນສິນຄ້າ.

ທາງບ້ານກໍ່ໄດ້ກຳນົດເອົາພື້ນທີ່ເພື່ອສ້າງຕະຫລາດ ເພື່ອເປັນການບໍລິການ, ຄ້າຂາຍ ພາຍໃນບ້ານ ແລະ ອີກຢ່າງໜຶ່ງບ້ານ ສອງຄອນ ແມ່ນບ້ານທີ່ຈະສ້າງໃຫ້ເປັນບ້ານພັດທະນາຮອບດ້ານຈະຕ້ອງມີທຸກຢ່າງໃຫ້ຄົບວົງຈອນ ແລະ ກຳນົດໃຫ້ມີການຂະຫຍາຍເສັ້ນທາງໃໝ່.

ພາຍໃນບ້ານໄດ້ເຫັນດີເປັນເອກະພາບກັນສ້າງສະຖານທີ່ຖິ້ມຂີ້ເຫຍື່ອ ເນື່ອງຈາກວ່າປະຊາກອນພາຍໃນບ້ານນັບມື້ນັບເພີ່ມຂຶ້ນ, ດັ່ງນັ້ນບັນຫາມົນລະພິດ ແລະ ສິ່ງເສດເຫຼືອຕ່າງໆກໍ່ເກີດຂຶ້ນໄປຕາມໆກັນ. ສະນັ້ນທາງບ້ານກໍ່ໄດ້ເຫັນຄວາມສຳຄັນທີ່ຈະຕ້ອງຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ ພາຍໃນບ້ານໃຫ້ດີຂຶ້ນເປັນກ້າວໆໄປ.

### 4.2. ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ກໍ່ຄືຂອງເມືອງ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານແມ່ນມີ 1 ໂຄງການ ແລະ 2 ບຸລິມະສິດຕົ້ນຕໍດັ່ງລຸ່ມນີ້:

1. ການຜະລິດເຂົ້າ: ໂດຍເລັ່ງໃສ່ຂະຫຍາຍເພີ່ມເນື້ອທີ່ນາຢູ່ເຂດທີ່ມີລະບົບຊົນລະປະທານ ແລະ ເຂດທີ່ມີເງື່ອນໄຂ ຢູ່ເຂດບ້ານສອງຄອນ.

– ຫຼຸດເນື້ອທີ່ສວນປູກເຂົ້າປະສົມປະສານໂດຍເລັ່ງໃສ່ ບ້ານທີ່ຂຶ້ນກຸ່ມບ້ານ ໃຫ້ຫັນໃສ່ການ ປູກເຂົ້າ ມາເຮັດນາປີ, ນາແຊງໃຫ້ຫຼາຍຂຶ້ນ.

## V. ລະບຽບການໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ

ພາຍຫຼັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ ແລະ ສ້າງເປັນແຜນ ທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວມອບແຜນຈັດສັນທີ່ດິນດັ່ງກ່າວ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ, ບັນດາຂະແໜງການຕ່າງໆຂອງເມືອງ ແລະ ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້, ກວດກາຕິດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງລະບຽບກົດໝາຍໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

### 5.1. ການຄຸ້ມຄອງທີ່ດິນກະສິກຳ

ທີ່ດິນກະສິກຳປະກອບມີ: ດິນນາ, ດິນສວນປູກພືດຕ່າງໆ ແລະ ດິນກະສິກຳທົ່ວໄປທີ່ໄດ້ກຳນົດໄວ້ແຜນ ທີ່ຈັດສັນ ແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນປະເພດອື່ນ, ຫ້າມຈັບຈ່ອງ ແລະ ຖິ້ມທີ່ດິນກະສິກຳ ເພື່ອຈຸດປະສົງອື່ນໆ ຖ້າຈະຫັນປ່ຽນທີ່ດິນກະສິກຳໄປເປັນປະເພດອື່ນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

### 5.2. ການຄຸ້ມຄອງທີ່ດິນປຸກສ້າງ

ທີ່ດິນປຸກສ້າງປະກອບມີ: ດິນປຸກສ້າງປະຈຸບັນ, ດິນປຸກສ້າງໃໝ່, ແລະ ດິນໂຮງຮຽນ,ຫ້ອງການບ້ານ ແລະ ດິນປຸກສ້າງອື່ນໆຂອງບຸກຄົນ ການຄຸ້ມຄອງປົກປັກຮັກສາ ແມ່ນປະຕິບັດຕາມລະບຽບກົດໝາຍຂອງ ພາກ ສ່ວນທີ່ກ່ຽວຂ້ອງວາງອອກ.

### 5.3. ການຄຸ້ມຄອງທີ່ດິນປ່າໄມ້

ທີ່ດິນປ່າໄມ້ປະກອບມີ: ປ່າຊົມໃຊ້ຂອງບ້ານ, ປ່າປ້ອງກັນ ແລະ ປ່າສະຫງວນຫວງຫ້າມ ການຄຸ້ມຄອງແມ່ນມອບໃຫ້ອຳນາດການປົກຄອງບ້ານເປັນຜູ້ຄຸ້ມຄອງຕາມລະບຽບຂອງຂະແໜງການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

### 5.4. ການຄຸ້ມຄອງທີ່ດິນຄົມມະນາຄົມ

ການຄຸ້ມຄອງ ແລະ ປົກປັກຮັກສາ ແມ່ນມອບໃຫ້ອຳນາດການປົກຄອງບ້ານ ແລະ ຂະແໜງໂຍທາທິການ ທີ່ກ່ຽວຂ້ອງຕິດຕາມກວດກາປະຕິບັດຕາມລະບຽບ ແລະ ກົດໝາຍຢ່າງເຂັ້ມງວດ.

### 5.5. ການຄຸ້ມຄອງທີ່ດິນວັດທະນາທຳ

ທີ່ດິນວັດທະນາທຳ ປະກອບມີ: ດິນປ່າມະເຫສັກ, ດິນປ່າຊ້າ ການຄຸ້ມຄອງແມ່ນ ບ້ານເປັນຜູ້ຄຸ້ມຄອງ ຕາມລະບຽບ ກົດໝາຍ ຫ້າມນຳໃຊ້ທີ່ດິນດັ່ງກ່າວໃນຈຸດປະສົງອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

### 5.6. ການຄຸ້ມຄອງທີ່ດິນບໍລິເວນນ້ຳ

ການຄຸ້ມແມ່ນໄດ້ກຳນົດເອົາ ສາຍນ້ຳ, ສາຍເຊ, ຫ້ວຍ, ໜອງທຳມະຊາດ ພາຍໃນບ້ານມີເຊ 02 ແຫ່ງ ຄື: ເຊຈຳພອນ, ເຊບັງຫຽງ, ໜອງທຳມະຊາດຫຼາຍແຫ່ງ ແລະ ມີ 02 ຫ້ວຍ ຄື: ຫ້ວຍສາລາ ແລະ ຫ້ວຍເກົ່າ.

- ເຊຈຳພອນ ແມ່ນເຊິ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 20 ແມັດ;
- ເຊບັງຫຽງ ແມ່ນເຊິ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 25 ແມັດ.
- ທາງອຳນາດການປົກຄອງບ້ານ ໄດ້ກຳນົດເອົາ ໜອງລຳປາເຕົ່າ ໄວ້ເປັນເຂດທ່ອງທ່ຽວໃນອານາຄົດ.

## VI. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນຳໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກຳນົດໄວ້ໃນບົດແຜນຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນຳສະເພາະສະບັບເລກທີ່໑໐໙໕/ກຊສ,ລົງວັນທີ 18 ມິຖຸນາ 2024).

## VII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ, ດັ່ງນັ້ນ, ອຳນາດການປົກຄອງເມືອງ, ອຳນາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນຳ-ນຳພາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນດັ່ງນີ້:

### 6.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕຳແໜ່ງທີ່ສຳຄັນໃນອຳນາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນຳ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07).

### 6.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼອນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

### 6.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄຳສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້.
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທຳການຜະລິດ ໃຫ້ແຕ່ລະຄອບຄົວ, ຊີ້ນຳແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້, ຟື້ນຟູປ່າ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ, ສັດປ່າ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ.
- ຕິດຕາມ, ເກັບກາສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ.
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ.
- ສົ່ງເສີມການເຮັດອາຊີບກະສິກຳຄົງທີ່ ໃຫ້ປະຊາຊົນໃນບ້ານຕົນ ແນໃສ່ຈຳກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທຳລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທຳມະຊາດ ເຮັດໃຫ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ.

### 6.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວອັນບໍ່ດີທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມເຊັ່ນ: ການລັກລອບຕັດໄມ້, ຈູດປ່າ ແລະ ສະກັດກັ້ນທຸກການກະທຳ ທີ່ເປັນການທຳລາຍຕໍ່ຊັບພະຍາກອນປ່າໄມ້, ສັດນ້ຳ, ສັດປ່າ ແລະ ແຫຼ່ງນ້ຳຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ .
- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

### 6.5. ລະບອບແບບແຜນວິທີເຮັດວຽກ

ລະບອບແບບແຜນວິທີເຮັດວຽກ ຂອງຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ມີດັ່ງນີ້:

- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ເຮັດວຽກຢ່າງມີແຜນການ, ມີແຜນກິດຈະກຳລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ມີເປົ້າໝາຍ ແລະ ຄາດໝາຍແຕ່ລະໄລຍະ.
- ການເຄື່ອນໄຫວວຽກງານບົນພື້ນຖານການປະສານສົມທົບຢ່າງແໜ້ນແຟ້ນ, ມີຄວາມເປັນເອກະພາບພາຍໃນ.
- ທຸກໜ້າວຽກຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້ຜົນເສຍລວມທັງສາເຫດຕ່າງໆຢ່າງຖືກຕ້ອງ ແທດເໝາະກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານ, ຂໍຄຳເຫັນ ແລະ ທິດຊີ້ນຳຈາກຂັ້ນເທິງເປັນປະຈຳ.

### 6.6. ການຕິດຕາມກວດກາ

ການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນ ໄດ້ມີການຈັດພິທີປະກາດມອບຮັບ. ການຕິດຕາມກວດກາ ແມ່ນເພື່ອເປັນການກະຕຸ້ນ ແລະ ເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວ ກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງ ກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈາລະນາຄືນ ແລະ ດັດແປງ ເພື່ອໃຫ້ອົງການຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີໃນໄລຍະທຳອິດຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງ ເຊັ່ນ: ແຂວງ, ເມືອງ, ກຸ່ມບ້ານ ຕະຫລອດຮອດໂຄງການທີ່ກ່ຽວຂ້ອງ.

# ເອກະສານອ້າງອີງ


1. ກົດໝາຍວ່າດ້ວຍປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
2. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
3. ກົດໝາຍວ່າດ້ວຍທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
4. ກົດໝາຍ ວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017, 2020 ແລະ 2022
5. ດຳລັດວ່າດ້ວຍປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດວ່າດ້ວຍ ທີ່ດິນບໍລິເວນນໍ້າ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍທີ 1: ແບບຟອມເກັບກຳຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານສອງຄອນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ແບບພິມເກັບກຳຂໍ້ມູນ
# ເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານສອງຄອນ

## 1. ປະຫວັດຄວາມເປັນມາບ້ານ

ບ້ານສອງຄອນເປັນບ້ານໜຶ່ງທີ່ມີປະຫັວດການສ້າງຕັ້ງອັນຍືດເຍື້ອຍາວນາເຊິ່ງເລີ່ມແຕ່ທ້າຍສັດຕະວັດທີ XVII ສະ ໄໝອານາຈັກລາວລ້ານຊ້າງຂອງພວກເຮົາໄດ້ຕົກເປັນຫົວເມືອງຂຶ້ນຂອງສັກດີນາສະຫຍາມ (ລາຊະອານາຈັກໄທ ໃນປະຈຸບັນ) ຫຼື ເອີ້ນ ຍຸກສະໄໝ ເອີກຊ່ອຍແກວ- ແກວຊ່ອຍໄທ, ຍຸກແກວໄລ່-ໄທກວດ (ໜ້າທີ 100-101 ຂອງ ປື້ມນະຄອນຫຼວງວຽງຈັນ 450 ປີ) ແລະ ເປັນໄລຍະຂອງເຈົ້າອິງບຸນ ຫຼື ເຈົ້າ ສິລິບຸນຍະສານ (ຄສ 1730-1780) ທີ່ ປົກຄອງອານາຈັກວຽງຈັນແຕ່ງຕັ້ງຍາຫຼວງ ອຸ່ນແກ້ວ ລົງມາປົກຄອງເມືອງສອງຄອນ (ຄສ 1770) ໂດຍກຳນົດບ້ານ ລະຫາໂຄກ ເມືອງສອງຄອນປະຈຸບັນ ເປັນທີ່ວ່າການປົກຄອງເມືອງສອງຄອນໃນໄລຍະນັ້ນ ຍາຫຼວງອຸ່ນແກ້ວ ຫຼື ພະ ຍາຂຽດໂມ້ ມີພັນລະຍາຊື່ ນາງ ຫຼາວທອວ ແລະ ມີລູກກັນ 2 ຄົນຄື: ທ. ໂກກ ແລະ ທ. ພິມ. ພໍຢູ່ມາໄດ້ຫຼາຍປີ ຈຶ່ງ ຊອກຫາຈຸດທີ່ຕັ້ງຂອງບ້ານ ດັ່ງນັ້ນ ໝໍໂຫນ ຊື່ດັງຢູ່ໂຫນລຳຫວາຍ ຈຶ່ງໄດ້ແນະນຳໃຫ້ສອງອ້າຍນ້ອງວ່າໃຫ້ໄປຫາສະ ຖານທີ່ຕັ້ງບ້ານຢູ່ຝັ່ງຂວາ ຂອງເຊບັ້ງຫຽງ ຍ້ອນວ່າມີນ້ຳເຊນ້ອຍ ແລະ ເຊບັ້ງຫຽງໄຫຼຜ່ານອ້ອມ ເປັນບ່ອນທີ່ມີຄວາມ ອຸດົມສົມບູນໄປດ້ວຍ ຫ້ວຍ, ໜອງ,ຄອງບຶງ ແລະ ປ່າເຂົາລຳເນົາ ຈຶ່ງມີຄວາມອຸດົມສົມບູນ ແລະ ມີຄວາມຮຸ່ງເຮືອງ ສີວິໄລ ໃນອານາຄົດ ຈາກນັ້ນຫຼວງພະຈຳເລີນ ພົນນະລົບ ແລະ ຫຼວງພະພິມ ພ້ອມດ້ວຍພໍ່ແມ່ປະຊາຊົນເລົ່ານັ້ນ ກໍ່ ໄດ້ມາພັກເຊົາຢູ່ຊົ່ວຄາວ ແຄມໜອງລຳຫວາຍ ໃຕ້ບ້ານສີງທ່າ (ເອີ້ນຕາມທາງກະແສນ້ຳໄຫຼ ໂດຍໄດ້ປູກໝາກມ່ວງຢູ່ ສອງຕົ້ນຄື: ຕົ້ນໜຶ່ງປູກໄວ້ຢູ່ແຄມໜອງລຳປະເຕົາ ແລະ ອີກຕົ້ນໜຶ່ງປູກໄວ້ຢູ່ທາງເຂົ້າທ່າໜອງລຳຫວາຍ. ຢູ່ຕໍ່ມາກໍ່ໄດ້ ຍ້າຍຂ້າມເຊບັ້ງຫຽງ ເບື້ອງຂວາໄກ້ໆ ກັບໜອງປະເຕົາ (ໜອງປ່ອຍເຕົ່າໃນເມື່ອກ່ອນ) ແລ້ວໃສ່ຊື່ວ່າ: ບ້ານສອງຄອນ ມາຮອດປະຈຸບັນ.

- ❖ ປະກອບມີ 14 ໜ່ວຍ ແບ່ງເປັນ 3 ຄຸ້ມ, ມີ 187 ຫຼັງຄາເຮືອນ; 226 ຄອບຄົວ.
- ❖ ພົນລະເມືອງທັງໝົດ 1161 ຄົນ; ຍິງ 585 ຄົນ;
- ❖ ປະກອບມີ 03 ຊົນເຜົ່າ; ຜູ້ໄທ, ລາວ, ກະຕາງ.
- ❖ ຊົນເຜົ່າ....ມີ....ຄອບຄົວ; ສາສະໜາ ພຸດ ( ລວມ: 100 % )
- ❖ ໄດ້ຮັບນາມມະຍົດເປັນບ້ານແມ່ຍິງ 3 ດີ
- ❖ ບ້ານປ້ອງກັນຄວາມສະຫງົບດີ.
- ❖ ບ້ານສາມັກຄີປອງດີ
- ❖ ບ້ານປອດຄະດີ
- ❖ ບ້ານສາທາລະນະສຸກແບບຢ່າງ
- ❖ ບ້ານພັດທະນາ

❖ ອັດຕາເພີ່ມ ແລະ ຫຼຸດລົງຂອງປະຊາກອນ.

- ການເກີດ 16 ຄົນ/ປີ;
- ການຕາຍ 25 ຄົນ/ປີ;
- ການຍົກຍ້າຍເຂົ້າ ບໍ່ມີ ຄົນ/5ປີ;
- ການຍ້າຍອອກ 3 ຄົນ/5ປີ/;

❖ ໂຄງປະກອບການຈັດຕັ້ງຂອງບ້ານ.

- ປະທານບ້ານ 01 ຄົນ; ຮອງນາຍບ້ານ 04 ຄົນ; ຍິງ 1 ຄົນ.
- ສະມາຊິກພັກ 15 ຄົນ; ຍິງ 5 ຄົນ;
- ກຳມະບານ 4 ຄົນ; ຍິງ 01 ຄົນ;
- ຊາວໜຸ່ມ 195 ຄົນ; ຍິງ 102 ຄົນ;
- ສະຫະພັນແມ່ຍິງ 218 ຄົນ.

**2. ທີ່ຕັ້ງ ແລະ ພູມສັນຖານຂອງບ້ານ**

❖ ທີ່ຕັ້ງ: ບ້ານສອງຄອນ ຕັ້ງຢູ່ລະຫວ່າງກາງຂອງແມ່ນ້ຳເຊບັ້ງຫຽງ ແລະ ເຊຈຳພອນ, ຕັ້ງຢູ່ທາງທິດຕາເວັນອອກຂອງເມືອງສອງຄອນ, ຫ່າງຈາກຕົວເມືອງປະມານ 15 ກມ.

❖ ນອນໃນບ້ານໃຫຍ່ເອກະລາດຂຶ້ນກັບເມືອງໂດຍກົງ;

❖ ມີເຂດຄຸ້ມຄອງຕິດກັບ: 4 ບ້ານ

- ທິດເໜືອຕິດກັບ: ບ້ານດົງບູນ, ເມືອງຊົນນະບູລີ
- ທິດໃຕ້ຕິດກັບ ລຳເຊບັ້ງຫຽງ
- ທິດຕາເວັນອອກຕິດກັບ ບ້ານດອນຍາໂນງ, ເມືອງຊົນນະບູລີ.
- ທິດຕາເວັນອອກສຽງໃຕ້ຕິດກັບ ດົງສະຫວ່າງ, ເມືອງສອງຄອນ
- ທິດຕາເວັນຕົກຕິດກັບ ບ້ານລະຫານ້ຳ, ເມືອງສອງຄອນ.

❖ ເນື້ອທີ່ທັງໝົດຂອງ ບ້ານ ..... ຮຕ

×ມີສາຍນ້ຳ/ນ້ຳເຊ: ມີ ☒ ; ບໍ່ມີ ☐ ; ມີ 02 ສາຍຄື:

1. ເຊບັ້ງຫຽງ, 2. ເຊຈາພອນ (ເຊນ້ອຍ)

×ມີຫ້ວຍ ມີ ☐ ; ບໍ່ມີ ☐ ; ມີ 2 ສາຍຄື:

1. ຫ້ວຍສາລາ, 2. ຫ້ວຍເກົ່າ

×ມີຜາ ( ພູ ) ມີ ☐ ; ບໍ່ມີ ☒ ; ມີ.................ພູຄື:

1

× ມີຖ້ຳ ມີ ☐ ; ບໍ່ມີ ☒ ມີ…….…... ຄື:

1........................................; 3……………………………….................

2…………………………..; 4……………………………………………

× ມີເສັ້ນທາງຄົມມະນາຄົມຈັກເສັ້ນ....02....ເສັ້ນ; ທາງຮ່ອມ.............9................ ເສັ້ນ

× ມີຊົນລະປະທານບໍ່? ມີ ☒ ; ບໍ່ມີ ☐ ; ຈັກແຫ່ງ...............2...............ແຫ່ງ

× ໜອງລວມບ້ານ ມີ ☒ ; ບໍ່ມີ ☐ ; ຈັກໜອງ......1.....................ໜອງ

**3. ສະພາບດ້ານເສດຖະກິດຂອງບ້ານ**

ລາຍຮັບຕົ້ນຕໍມີຫຍັງແດ່?:(1) ເຮັດນາ

❖ ລາຍຮັບສຳຮອງມີຫຍັງແດ່?: (1) ລ້ຽງສັດ ແລະ ປູກມັນຕົ້ນ

❖ ສະເລ່ຍ/ປີ ໂຕນ ຕໍ່ໜຶ່ງເຮັກຕາ 3,5 ໂຕນ/ຮຕ (ນາແຊງ)

❖ ແຮງງານຕົ້ນຕໍມີຈັກຄົນ: 534 ຄົນ; ແຮງງານສຳຮອງມີຈັກຄົນ: 374 ຄົນ

❖ ຈຳນວນຄົວເຮືອນທີ່ລຸດພົ້ນອອກຈາກຄວາມທຸກຍາກມີ ຄອບຄົວ, ຍັງບໍ່ທັນພົ້ນມີ 0 ຄອບຄົວ.

## 4. ຂໍ້ມູນດ້ານພື້ນຖານໂຄງລາງຂອງບ້ານ

| | | | |
|---|---|---|---|
| × ມີທາງເຂົ້າບ້ານບໍ? | ມີ ☒ | ບໍ່ມີ ☐ | ຖ້າມີ; ມີຈັກ…2……ເສັ້ນ |
| × ໄຟຟ້າເຂົ້າເຖິງບ້ານບໍ | ມີ ☒ | ບໍ່ມີ ☐ | |
| × ມີສຸກສາລາຫຼືໂຮງໝໍຕັ້ງຢູ່ເຂດບ້ານ | ມີ ☒ | ບໍ່ມີ ☐ | ຖ້າມີ; ມີຈັກ……1……ແຫ່ງ |
| × ມີຖົງຢາປະຈຳບ້ານບໍ? | ມີ ☐ | ບໍ່ມີ ☐ | |
| × ມີໂຮງຮຽນປະຖົມ? | ມີ ☒ | ບໍ່ມີ ☐ | ຖ້າມີ; ມີຈັກ……1…..ແຫ່ງ |
| × ມີຕະຫຼາດຊື້ຂາຍ ບໍ? | ມີ ☐ | ບໍ່ມີ ☒ | ຖ້າມີ; ມີຈັກ………..ແຫ່ງ |
| × ຫ້ອງການບ້ານ | ມີ ☒ | ບໍ່ມີ ☐ | ຖ້າມີ; ມີຈັກ……1…..ແຫ່ງ |
| × ລະບົບນໍ້າສະອາດ | ມີ ☒ | ບໍ່ມີ ☐ | ຖ້າມີ; ມີຈັກ……1…..ແຫ່ງ |
| × ຄົວລົດ | ມີ ☐ | ບໍ່ມີ ☒ | ຖ້າມີ; ມີຈັກ………..ແຫ່ງ |
| × ບ່ອນບຳບັດຂີ້ເຫຍື້ອ | ມີ ☐ | ບໍ່ມີ ☒ | ຖ້າມີ; ມີຈັກ………..ແຫ່ງ |
| × ທ່າເຮືອ | ມີ ☒ | ບໍ່ມີ ☐ | ຖ້າມີ; ມີຈັກ……1…..ແຫ່ງ |
| × ອື່ນໆ……………………………………………………………………………… | | | |

## 5. ຂໍ້ມູນດ້ານ ຄອບຄົວພາຍໃນບ້ານ

| ລ/ດ | ລາຍການ | ຈຳນວນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|
| 01 | ຄອບຄົວຄ້າຂາຍ | 10 | ຄ/ຄ | |
| 02 | ຄອບຄົວເຮັດກະສິກຳ | 221 | ຄ/ຄ | |
| 03 | ຄອບຄົວເຮັດອຸດສາຫະກຳ | 0 | ຄ/ຄ | |
| 04 | ຄອບຄົວເຮັດຫັດຖະກຳ | 3 | ຄ/ຄ | |
| 05 | ຄອບຄົວພະນັກງານລັດ | 28 | ຄ/ຄ | |
| 06 | ຄອບຄົວອື່ນໆ | 0 | ຄ/ຄ | |

## 6.ອາຊີບຕົ້ນຕໍພາຍໃນບ້ານ:

| ລ/ດ | ລາຍການ | ຈຳນວນຄົນ | ຍິງ/ຄົນ | ໝາຍເຫດ |
|---|---|---|---|---|
| 01 | ເຮັດນາ | 935 | 370 | |
| 02 | ໄຮ່ ( ໄຮ່ເຂົ້າ,ສວນໝາກໄມ້ ) | 0 | 0 | |
| 03 | ພະນັກງານລັດ | 35 | 20 | |
| 04 | ພະນັກງານວິສາຫະກິດ | 3 | 1 | |
| 06 | ກຳມະກອນທົ່ວໄປ | 323 | 160 | |
| 07 | ຄ້າຂາຍ | 10 | 10 | |
| 08 | ນັກຮຽນ,ນັກສຶກສາ | 110 | 50 | |
| 09 | ອາຊີບອື່ນໆ | 0 | 0 | |
| ລວມທັງໝົດ | | 1,416 | 611 | |

**7. ເກັບກຳຂໍ້ມູນການນຳໃຊ້ທີ່ດິນແຕ່ປະເພດພາຍໃນບ້ານ**

**7.1. ດິນລັດ, ດິນຊຸມຊົນ ແລະ ດິນລວມບ້ານ**

- ດິນ ໂຮງຮຽນ .... ຕອນ; ຊັ້ນໃດ ໂຮງຮຽນປະຖົມ. .... ແຫ່ງ
- ໂຮງຮຽນ ມັດທະຍົມສົມບູນ ..... ແຫ່ງ ແລະ ມັດທະຍົມ 1 ແຫ່ງ; ເນື້ອທີ່ .... ເຮັກຕາ ເອກະສານຢັ້ງຢືນ ☒
- ດິນ ຫ້ອງການບ້ານ .... ຕອນ; ເນື້ອທີ່ ເຮັກຕາ ມີເອກະສານຢັ້ງຢືນ ☐
- ດິນ ປ່າຊ້າ ..... ຕອນ; ເນື້ອທີ່ ເຮັກຕາ ມີເອກະສານຢັ້ງຢືນ ☐
- ດິນ ປ່າສັກສິດ/ດິນມະເຫສັກ .... ຕອນ; ເນື້ອທີ່… ເຮັກຕາ ມີເອກະສານຢັ້ງຢືນ ☐
- ດິນ ວັດ: ..... ຕອນ; ມີ ເນື້ອທີ່ ..................ເຮັກຕາ ມີເອກະສານຢັ້ງຢືນ ☒
- ດິນ ລວມບ້ານ (ດິນເປົ່າຫວ່າງ) ..... ຕອນ; ເນື້ອທີ່………… ມີເອກະສານຢັ້ງຢືນ ☐
- ດິນ ລວມບ້ານ (ທີ່ມອບໃຫ້ບຸກຄົນນຳໃຊ້) ບໍ່ມີ ຕອນ; ເນື້ອທີ່…………ມີເອກະສານຢັ້ງຢືນ ☐
- ດິນຊຸມຊົນ ບໍ່ມີ ຕອນ; ເນື້ອທີລວມ……ມີເອກະສານຢັ້ງຢືນ ☐

**7.2. ດິນເຊົ່າ - ສຳປະທານ (ດິນລັດ ແລະ ດິນລວມບ້ານ)**

❖ ດິນ ເຊົ່າພາຍໃນບ້ານ. ບໍ່ມີ ຕອນ; ໃຜເປັນຜູ້ເຊົ່າ

✓ ຕອນທີ1: ເນື້ອທີ່ .......ເຮັກຕາ; ເຊົ່າຈັກປີ………...ປີ; ແຕ່ປີ

✓ ເຊົ່າເຮັດຫຍັງ ເອກະສານຢັ້ງຢືນ ☐

✓ ເຊົ່າເຮັດຫຍັງ ເອກະສານຢັ້ງຢຢືນ ☐

✓ ເຊົ່າເຮັດຫຍັງ ເອກະສານຢັ້ງຢືນ ☐

**7.3. ການນຳໃຊ້ດິນແຕ່ລະປະເພດພາຍໃນບ້ານ**

**I. ດິນກະສິກຳ:**

1. ທີ່ດິນນາ..........................................ຕອນ, ເນື້ອທີ່..................ເຮັກຕາ.
2. ດິນຄັງລ້ຽງສັດ...................................ຕອນ, ເນື້ອທີ່.…………. ເຮັກຕາ.
3. ດິນໄຮ່............................................ ຕອນ, ເນື້ອທີ.….…..............ເຮັກຕາ.
4. ດິນສວນ..........................................ຕອນ, ເນື້ອທີ່.….…. ເຮັກຕາ.
5. ດິນກະສິກຳທົ່ວໄປ...............................ຕອນ, ເນື້ອທີ່ ….…. ເຮັກຕາ.
6. ດິນປູກໄມ້........................................ຕອນ, ເນື້ອທີ່.….…. ເຮັກຕາ.
7. ດິນຊົນລະປະທານ...............................ຕອນ, ເນື້ອທີ່....... ເຮັກຕາ.
8. ດິນເຂດສະຫງວນພັນພືດ.......................ຕອນ, ເນື້ອທີ່.........................ເຮັກຕາ.
9. ອື່ນໆ................

**II. ດິນປຸກສ້າງ:**

1. ດິນປຸກສ້າງບຸກຄົນ..............................ຕອນ, ເນື້ອທີ່.............................ເຮັກຕາ.
2. ດິນປຸກສ້າງຂອງລັດ.......................... ຕອນ, ເນື້ອທີ່..........................ເຮັກຕາ.
3. ດິນລວມບ້ານ.................................. ຕອນ, ເນື້ອທີ່........................................ເຮັກຕາ.
4. ດິນເປົ່າຫວ່າງ...................................ຕອນ, ເນື້ອທີ່........................................ເຮັກຕາ.
5. ດິນຈັບຈອງ......................................ຕອນ, ເນື້ອທີ່........................................ເຮັກຕາ.

**III. ດິນວັດທະນະທຳ**

1. ດິນປ່າສັກສິດ (ປ່າຊ້າ).........2............ ຕອນ, ເນື້ອທີ່...................................ເຮັກຕາ.

2. ດິນປ່າມະເຫສັກ........3.....ຕອນ, ເນື້ອທີ່...........................................................ເຮັກຕາ
3. ດິນວັດ 1 ຕອນ, ເນື້ອທີ່ ......... ຮັກຕາ.
4. ດິນສະຖານທີ່ທ່ອງທ່ຽວທາງດ້ານທຳມະຊາດ, ວັດທະນະທຳປະຫວັດສາດ ບໍ່ມີ ຕອນ, ເນື້ອທີ່.......ເຮັກຕາ.

**IV. ດິນປ້ອງກັນຊາດ**

1. ດິນຕັ້ງຄ້າຍສຳນັກງານອົງການ,ກົມກອງບ່ອນພັກເຊົາ,ໂຮງຮຽນ,ສະໜາມບິນ, ,ໂຮງໝໍ...1...ຕອນ, ເນື້ອທີ່.....................................................ເຮັກຕາ.
2. ດິນທຳການຜະລິດ..................ບໍ່ມີ............... ຕອນ, ເນື້ອທີ່........0.................ເຮັກຕາ.
3. ດິນສະໜາມຝຶກຊອບທາງຍຸດທະສາດ..................ຕອນ, ເນື້ອທີ່.........0.................ເຮັກຕາ.
4. ດິນທຳການຜະລິດ.....................ບໍ່ມີ................. ຕອນ, ເນື້ອທີ່........0..................ເຮັກຕາ.

**V. ປ້ອງກັນຄວາມສະຫງົບ**

1. ດິນຕັ້ງຄ້າຍສຳນັກງານອົງການ, ກົມກອງບ່ອນພັກເຊົາ, ໂຮງຮຽນ, ສະໜາມບິນ, ສາງ, ໂຮງໝໍ 1 ຕອນ, ເນື້ອທີ່.........................ເຮັກຕາ.
2. ດິນທຳການຜະລິດ.............ບໍ່ມີ..........................ຕອນ, ເນື້ອທີ່........0.........ເຮັກຕາ
3. ດິນສະໜາມຝຶກຊອບທາງຍຸດທະສາດ........ບໍ່ມີ.........ຕອນ, ເນື້ອທີ່........0.........ເຮັກຕາ.
4. ດິນທຳການຜະລິດ..................ບໍ່ມີ.....................ຕອນ, ເນື້ອທີ່........0.........ເຮັກຕາ.

**VI. ດິນປ່າໄມ້**

1. ດິນປ່າຜະລິດແຫ່ງຊາດ ບໍ່ມີ ຕອນ, ເນື້ອທີ່ .................ເຮັກຕາ.
2. ດິນປ່າຜະລິດຂອງແຂວງ.............ບໍ່ມີ...................... ຕອນ, ເນື້ອທີ່........0...........ເຮັກຕາ.
3. ດິນປ່າຜະລິດຂອງເມືອງ...........ບໍ່ມີ......................... ຕອນ, ເນື້ອທີ່........0...........ເຮັກຕາ.
4. ດິນປ່າຜະລິດບ້ານ............ບໍ່ມີ.............................. ຕອນ, ເນື້ອທີ່........0...........ເຮັກຕາ.
5. ດິນປ່າສະຫງວນແຫ່ງຊາດ..................................... ຕອນ, ເນື້ອທີ່.........0...........ເຮັກຕາ.
6. ດິນປ່າສະຫງວນ ຂອງແຂວງ ( ດົງພູວຽງ ),...................ຕອນ, ເນື້ອທີ່.....................ເຮັກຕາ.
7. ດິນປ່າສະຫງວນຂອງເມືອງ............................... ...ຕອນ, ເນື້ອທີ່.................. ເຮັກຕາ
8. ດິນປ່າສະຫງວນບ້ານ..........................................ຕອນ, ເນື້ອທີ່................. .ເຮັກຕາ.
9. ດິນປ່າປ້ອງກັນແຫ່ງຊາດ.............ບໍ່ມີ...................... ຕອນ, ເນື້ອທີ່ທີ່................. .ເຮັກຕາ.
10. ດິນປ່າປ້ອງກັນ ຂອງແຂວງ..........ບໍ່ມີ...................... ຕອນ, ເນື້ອທີ່....................ເຮັກຕາ.
11. ດິນປ່າປ້ອງກັນຂອງເມືອງ............ບໍ່ມີ...................... ຕອນ, ເນື້ອທີ່.................. ເຮັກຕາ.
12. ດິນປ່າປ້ອງກັນບ້ານ............ບໍ່ມີ............................ ຕອນ, ເນື້ອທີ່.................. ເຮັກຕາ.
13. ດິນປ່າຊົມໃຊ້ບ້ານ..............................................ຕອນ, ເນື້ອທີ່ ................... ເຮັກຕາ.
14. ດິນປ່າປູກໄມ້ອຸດສາຫະກຳ,ໄມ້ວິກ, ໄມ້ຢາງພາລາ, ໄມ້ສັກ,ໄມ້ເກດສະໜາ ແລະ ໄມ້ອື່ນໆ.....ຕອນ, ເນື້ອທີ່. ..... ເຮັກຕາ.
15. ດິນປ່າຟື້ນຟູ..........ບໍ່ມີ..................................... ຕອນ, ເນື້ອທີ່.......................ເຮັກຕາ.

**VII. ດິນອຸດສາຫະກຳ**

1. ເຂດທີ່ດິນອຸດສາຫະກຳ(ໂຮງຈັກ, ໂຮງງານຂະໜາດໃຫ່ຍ, ເຂື່ອນໄຟຟ້ານ້ຳຕົກ, ອື່ນໆ) ຈັກຕອນ: ບໍ່ມີ ຕອນ, ເນື້ອທີ່ ............................ເຮັກຕາ.
2. ແລວສາຍໄຟຟ້າ………ບໍ່ມີ…..............................ຕອນ, ເນື້ອທີ່.............0............. ເຮັກຕາ.
3. ສະຖານທີ່ບ່ອນຖິ້ມຂີ້ເຫຍື້ອ..............ບໍ່ມີ................ຕອນ, ເນື້ອທີ່...............0........... ເຮັກຕາ.

## VIII. ດິນໂຍທາທິການແລະຂົນສົ່ງ

1. ທ່າເຮືອ, ທ່າບັກ ບໍ່ມີ ຕອນ, ເນື້ອທີ່......0.......... ເຮັກຕາ.
2. ບໍ່ຫີນ, ບໍ່ດິນ, ບໍ່ຊາຍ, ແລະ ສະຖານທີ່ຄົບຫີນ ບໍ່ມີ ຕອນ, ເນື້ອທີ່.............0................ເຮັກຕາ.
3. ຄິວລົດ ມີ .ຕອນ, ເນື້ອທີ່......0...........ເຮັກຕາ.
4. ສະໜາມບິນ. ບໍ່ມີ ຕອນ, ເນື້ອທີ່......0...........ເຮັກຕາ.
5. ສະຖານທີ່ຕັ້ງຫລັກສັນຍານ 4 ຕອນ, ເນື້ອທີ່........0........ ເຮັກຕາ.
6. ສາງຕ່າງໆ : 1 ຕອນ, ເນື້ອທີ່................ ເຮັກຕາ.
7. ແລວທາງລົດໄຟ: ບໍ່ມີ ຈັກແລວ ....................0..................
8. ໂອງມົງ: ບໍ່ມີ ຈັກບ່ອນ ..........................0................
9. ເຂດສະຫງວນທາງ : ມີ 26 ເສັ້ນ
10. ທາງເບຕົງ/ປູຢາງ: ມີ ຈັກເສັ້ນ 8 ເສັ້ນ
11. ທາງດິນແດງ: ມີຈັກເສັ້ນ 17 ເສັ້ນ, ເນື້ອທີ່...........0.............ເຮັກຕາ.

## IX. ທີ່ດິນບໍລິເວນນ້ຳ

1. ສາຍນ້ຳມີຈັກສາຍ: 1 ສາຍ.
2. ສາຍຫ້ວຍມີຈັກສາຍ: 3 ສາຍ.
3. ດິນໜອງນ້ຳທຳມະຊາດ (ໜອງລວມບ້ານ) 1 ຕອນ, ເນື້ອທີ່..........0...........ເຮັກຕາ.
4. ວັງສະຫງວນຂອງບ້ານ 1 ຕອນ, ເນື້ອທີ..........................ເຮັກຕາ.
5. ອ່າງເກັບນ້ຳ 1 ຕອນ, ເນື້ອທີ່.........................................ເຮັກຕາ.
6. ດອນທາມ ບໍ່ມີ ຕອນ, ເນື້ອທີ່.........0........ເຮັກຕາ.
7. ເກາະດອນ ບໍ່ມີ ຕອນ, ເນື້ອທີ່..........0.........ເຮັກຕາ.

## 8. ເຂດທີ່ຖືກຜົນກະທົບຕໍ່ໄພພິບັດ

1. ເຂດພື້ນທີ່ນ້ຳຖ້ວມ

➢ ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພນ້ຳຖ້ວມຄືແນວໃດ? ທຸກໆປີ; 2-3 ປີ ແລະ ອື່ນໆ.ໃນໄລຍະຜ່ານມາ ບ້ານສອງຄອນ ແມ່ນ 2-3 ປີ ຖືກຜົນກະທົບຕໍ່ໄພນ້ຳຖ້ວມ.

✓ ເຂດທີ່ຖືກນ້ຳຖ້ວມມີຈັກບ່ອນ; ຢູ່ເຂດໃດຂອງບ້ານ: ບໍ່ມີຜົນກະທົບ

➢ ປະເພດດິນທີ່ຖືກນ້ຳຖ້ວມມີຄືແນວໃດ?

ດິນປຸກສ້າງ…..................ຮຕ, ດິນນາ.....310,9......ຮຕ; ດິນສວນພືດລົ້ມລຸກ........67.......ຮຕ; ດິນສວນໄມ້ໃຫ້ໝາກ.........................................................................................ຮຕ, ດິນສວນໄມ້ອຸດສາຫະກຳ.............................ຮຕ; ດິນຄັງລ້ຽງສັດ …......................ຮຕ ດິນອື່ນໆ

❖ **ລະດັບ ແລະ ໄລຍະນ້ຳຖ້ວມ.**

✓ ລະດັບ ນ້ຳຖ້ວມຂຶ້ນສູງສຸດ 6 ແມັດ ແລະ ຕ່ຳສຸດ 0,5 ແມັດ.

✓ ລະດັບນ້ຳສົ່ງຜົນຕໍ່ການຄົມມະນາຄົມຂອງບ້ານ: ເຮັດໃຫ້ການສັນຈອນໄປມາ ລະຫວ່າງບ້ານ ຕໍ່ບ້ານ ແມ່ນ ພົບຄວາມຫຍຸ້ງຍາກ ໄປມາລຳບາກ.

✓ ໄລຍະນ້ຳຖ້ວມສູງສຸດ 30 ວັນ ແລະ ຕ່ຳສຸດ 15 ວັນ.

✓ ຫ້ວຍມີນ້ຳຕະຫຼອດປີ ມີ 2 ຫ້ວຍ ແລະ ສະເພາະລະດູຝົນມີ 0 ຫ້ວຍ.

✓ ລະດັບນ້ຳຫ້ວຍໃນລະດູຝົນສູງສຸດແມ່ນ 4 ແມັດ ແລະ ຕ່ຳສຸດ 20 ຊັງຕີແມັດ.

**2. ເຂດພື້ນທີ່ແຫ້ງແລ້ງ.**

- ✓ ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພແຫ້ງແລ້ງຄືແນວໃດ? ທຸກໆປີ; 2-3 ປີ ແລະ ອື່ນໆ.

  ໄລຍະຜ່ານມາ ປີ 2021 ບ້ານສອງຄອນ ແມ່ນໄດ້ພົບໄພແຫ້ງແລ້ງຢ່າງໜັກ,ເຮັດໃຫ້ຜົນລະປູກຂອງປະຊາຊົນໄດ້ຮັບຜົນເສຍຫາຍ.
- ✓ ເຂດພື້ນທີ່ແຫ້ງແລ້ງ ແມ່ນໄດ້ກວມເອົາພື້ນທີ່ທຳການຜະລິດກະສິກຳຂອງບ້ານປະຊາຊົນບ້ານສອງຄອນ.
- ✓ ສາເຫດທີ່ພາໃຫ້ເກີດດິນແຫ້ງແລ້ງ ແມ່ນຍ້ອນສະພາບແວດລ້ອມມີການປ່ຽນແປງ.
- ➢ ເຂດແຫ້ງແລ້ງມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?
- ✓ ດິນນາ 0 ຮຕ; ດິນສວນພືດລົ້ມລຸກ 0 ຮຕ; ດິນສວນໄມ້ໃຫ້ໝາກ..................ຮຕ;

  ດິນສວນໄມ້ອຸດສາຫະກຳ 0 ຮຕ; ດິນຄັງລ້ຽງສັດ …ບໍ່ມີ…ຮຕ

  ດິນອື່ນໆ……………………………………………………………………….........

**3. ເຂດພື້ນທີ່ດິນເຊາະເຈື່ອນ.**

- ✓ ໄລຍະຜ່ານມາບ້ານຖືກຜົນກະທົບຈາກດິນເຊາະເຈື່ອນຄືແນວໃດ? ທຸກໆປີ ; 2-3 ແລະ ອື່ນໆ.

  ໄລຍະຜ່ານມາທຸກໆປີ ໃນຊວງລະດູຝົນຕາຝັ່ງເຊຈຳພອນ ແລະ ເຊບັ້ງຫຽງ ເກີດມີການເຊາະເຈື່ອນ.
- ✓ ເຂດພື້ນທີ່ດິນເຊາະເຈື່ອນມີ 2 ບ່ອນ ຢູ່ເຂດ: ແຄມຕາຝັ່ງເຊ ແລະ ເນື້ອທີ່ນາແຄມເຊ.
- ✓ ສາເຫດທີ່ພາໃຫ້ເກີດດິນເຊາະເຈື່ອນ ຍ້ອນວ່າເປັນຊ່ວງລະດູຝົນ.
- ➢ **ເຂດເຊາະເຈື່ອນມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?**

  ແມ່ນມີຜົນກະທົບໃສ່ດິນກຳສິກຳ: ບໍ່ມີຜົນກະທົບໃສ່ດິນກະສິກຳຂອງປະຊາຊົນ.
- ✓ ດິນນາ…0…..ຮຕ; ດິນສວນພືດລົ້ມລຸກ...0.....ຮຕ; ດິນສວນໄມ້ໃຫ້ໝາກ......0......ຮຕ;

  ດິນສວນໄມ້ອຸດສາຫະກຳ. 0 ຮຕ; ດິນຄັງລ້ຽງສັດ 0 ຮຕ ແລະ ດິນອື່ນໆ.

**4. ເຂດທີ່ມີຄວາມສ່ຽງຈາກລະເບີດບໍ່ທັນແຕກ**

- ✓ ໄລຍະຜ່ານມາບ້ານຖືກຜົນກະທົບຈາກລະເບີດບໍ່ທັນແຕກຄືແນວໃດ? ທຸກໆປີ 2-3 ປີ ແລະ ອື່ນໆ.

  ຜ່ານມາ ບ້ານສອງຄອນ ແມ່ນບໍ່ໄດ້ຮັບຜົນກະທົບຈາກລະເບີດທີ່ບໍ່ທັນແຕກ ແລະ ບໍ່ມີຄົນເສຍຊີວິດ

**5. ເຂດພື້ນທີ່ດິນ ລະເບີດບໍ່ທັນແຕກ: ມີອ້ອມ ບ້ານ, ຫຼື ຢູ່ໄຮ່, ສວນ, ບ່ອນທາການຜະລິດຂອງປະຊາຊົນ ແລະ ພາຍໃນບ້ານ.**

➢ ມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?

- ✓ ດິນນາ ບໍ່ມີ ຮຕ; ດິນສວນພືດລົ້ມລຸກ ບໍ່ມີ ຮຕ; ດິນສວນໄມ້ໃຫ້ໝາກ ບໍ່ມີ ຮຕ;

  ດິນສວນໄມ້ອຸດສາຫະກຳ ບໍ່ມີ ຮຕ; ດິນຄັງລ້ຽງສັດ ບໍ່ມີ ຮຕ;

  ດິນອື່ນໆ…………………………………

**6. ເຂດພື້ນທີ່ທີ່ຖືກຜົນກະທົບດ້ານອື່ນໆ.**

- ➢ ໂຄງການເຊົ່າ ແລະ ສຳປະທານທີ່ດິນພາຍໃນບ້ານມີຄືແນວໃດ?
- ✓ ໂຄງການຂຸດຄົ້ນບໍ່ແຮ່: ບໍ່ມີ
- ✓ ໂຄງການກໍ່ສ້າງຕ່າງໆ: ບໍ່ມີ
- ✓ ແລະ ໂຄງການອື່ນໆ: ບໍ່ມີ
- ➢ ບໍ່ມີໂຮງຈັກໂຮງງານ, ດິນເຊົ່າສຳປະທານ ແລະ ອື່ນໆ

  ຖ້າມີໄດ້ສິ່ງຜົນກະທົບໃສ່ບ້ານ (ຄ້ວນ, ນ້ຳເສຍ, ສານພິດ, ສຽງ ແລະອື່ນໆ

7. ວິທີການປ້ອງກັນ ແລະ ແກ້ໄຂຕໍ່ຜົນກະທົບຕ່າງໆ:

**<u>ໝາຍເຫດ</u>**: ແບບຟອມເກັບກາຂໍ້ມູນເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານ ສະບັບນີ້ເປັນພຽງການສອບຖາມຂໍ້ມູນຈາກທາງບ້ານເທົ່ານັ້ນ ບໍ່ສາມາດນຳໃຊ້ໃນນິຕິກຳອື່ນໆໄດ້.

| | | |
|---|---|---|
| ຮັບຮູ້ ແລະ ຢັ້ງຢືນ<br>ນາຍບ້ານ | ຜູ້ໃຫ້ຂໍ້ມູນ | ຜູ້ບັນທຶກ |
| ສົ້ມພັນແສງ ອາລຸນ | | ພູສອນມະໄລ ຜິວໂສດາລິດ |

ເອກະສານຊ້ອນທ້າຍທີ 2: ບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ແຂວງ ສະຫວັນນະເຂດ**

**ເມືອງ ສອງຄອນ** **ເລກທີ ................/ຈມ**

**ລົງວັນທີ ...................**

# ບົດບັນທຶກ

## ຂອບເຂດຄຸ້ມຄອງຂອງ ບ້ານສອງຄອນ ແລະ ບ້ານອ້ອມຂ້າງທີ່ມີເຂດແດນຕິດກັນລະຫວ່າງ: ບ້ານດອນຍາໂນງ, ບ້ານດົງບູນ, ບ້ານລະຫານ້ຳ, ບ້ານສີງທ່າ ແລະ ບ້ານດົງສະຫວ່າງ.

- ອີງຕາມ ຂໍ້ຕົກລົງ ຂອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1343/ກສຂ , ລົງວັນທີ 24 ພະຈິກ 2025, ວ່າດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມການສຳຫຼວດຈັດສັນທີ່ດິນ 8 ປະເພດໃນ 3 ບ້ານເປົ້າໝາຍຂອງ ເມືອງສອງຄອນ, ແຂວງສະຫວັນນະເຂດ.
- ອີງຕາມ ຂໍ້ຕົກລົງ ຂອງທ່ານເຈົ້າເມືອງ-ເມືອງສອງຄອນ ທີ 606/ຈມ ລົງວັນທີ 6 ພະຈິກ 2025, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນບ້ານ ຢູ່ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ.

1. **ທິດເໜືອ: ຕິດກັບ 2 ບ້ານຄື: ບ້ານດົງບູນ ແລະ ບ້ານດອນຍາໂນງ**

**ບ້ານສອງຄອນ ຕິດກັບ ບ້ານດົງບູນ** ເລີ່ມຈາກຈຸດຊາຍແດນ 3 ບ້ານ (ບ້ານລະຫານ້ຳ, ບ້ານດົງບູນ ແລະ ບ້ານສອງຄອນ) ເຊິ່ງເລີ່ມຈາກຈຸດພົບກັນລະຫວ່າສາຍເຊຈາພອນ, ສາຍເຊຊັ່ງຊອຍ ແລະ ເຊນ້ອຍ ແລ້ວຂຶ້ນເລາະໄປຕາມກາງສາຍເຊຊັ່ງຊອຍຈົນຮອດປາກຮ່ອງກົກງີ້ວຕາກ ຕົກໃສ່ເຊຊັ່ງຊອຍ ແມ່ນຈຸດສີ້ສຸດລະຫວ່າງບ້ານດົງບູນ ແລະ ບ້ານສອງຄອນ ເຊິ່ງມີໄລຍະທັງໝົດ 1894 ແມັດ.

ຕາຕະລາງ ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84

| **ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48)** | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532063 | 1803430 | ເຊຊັ່ງຊອຍ ແລະ ເຊຈຳພອນພົບກັນ | |
| 2 | 532726 | 1803140 | ສາຍເຊຊັ່ງຊອຍ | |
| 3 | 532878 | 1803320 | ສາຍເຊຊັ່ງຊອຍ | |
| 4 | 532678 | 1802940 | ສາຍເຊຊັ່ງຊອຍ | |
| 5 | 532267 | 1803520 | ສາຍເຊຊັ່ງຊອຍ | |
| 6 | 532567 | 1802780 | ສາຍເຊຊັ່ງຊອຍ | |

| | | | | |
|---|---|---|---|---|
| 7 | 532425 | 1802990 | ສາຍເຊຊັ້ງຊອຍ | |
| 8 | 532362 | 1803270 | ສາຍເຊຊັ້ງຊອຍ | |
| 9 | 532002 | 1797030 | ຈຸດກາງເຊບັ້ງຫຽງຕັດໃສ່ ໂຮງຮຽນມສ ສອງຄອນ | |
| **ລວມໄລຍະ** | | | | |

**ບ້ານສອງຄອນ ຕິດກັບ ດອນຍ່າໂນງ** ເລີ່ມແຕ່ປາກຮ່ອງກົກຍໍ້ອຕາກ ມາສຸດຢູ່ຮ່ອງຫູໝູ ເຊິ່ງມີໄລຍະທັງໝົດແມ່ນ 820 ແມັດ.

ຕາຕະລາງ ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84

| **ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48)** | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 533040 | 1803370 | ປາກຮ່ອງກຸດໂກກ | |
| 2 | 533642 | 1802810 | ປາກຮ່ອງກົກງິ້ວຕາກ | |
| **ລວມໄລຍະ** | | | | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

**2. ທິດຕາເວັນອອກ: ຕິດກັບ 1ບ້ານຄື:**

ບ້ານດົງສະຫວ່າງ ເລີ່ມມແຕ່ປາກຮ່ອງກຸດໂກກ ຕັດມາໃສ່ທາງເບຕົງຢູ່ຂີວສາລາແລ້ວຕັດມາໃສ່ທາງເບຕົງບ້ານດົງສະຫວ່າງ ແລະ ລຽບໃສ່ຕາມທາງຊອຍດອນມ່ວງປ່າຊ້າ ຕັດມາໃສ່ໜອງຕາກ້າ ແລ້ວຕັດມາໃສ່ເຮືອນຫ້າງທອນ ຈາກນັ້ນຕໍ່ມາໃສ່ໂຮງຮຽນມັດທະຍົມ ຕັດໃສ່ກາງເຊບັ້ງຫຽງ ມີໄລຍະ 8220 ແມັດ.

ຕາຕະລາງ ຄ່າພິກັດບ້ານສອງຄອນ ກັບ ບ້ານດົງບູນ ກຸ່ມລະບົບ WGS 84

| **ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48)** | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532002 | 1797031 | ຈຸດກາງເຊບັ້ງຫຽງຕັດໃສ່ ໂຮງຮຽນມສ ສອງຄອນ | |
| 2 | 532216 | 1797251 | ເລາະຕາມເສັ້ນ | |
| 3 | 532911 | 1797472 | ເລາະຕາມເສັ້ນ | |
| 4 | 533286 | 1797978 | ເລາະຕາມເສັ້ນ | |
| 5 | 533457 | 1799497 | ເລາະຕາມເສັ້ນ | |
| 6 | 533907 | 1801019 | ເລາະຕາມເສັ້ນ | |
| 7 | 533642 | 1802810 | ກົກງິ້ວຕາກ | |
| **ລວມໄລຍະ** | | | | |

3. **ທິດໃຕ້: ຕິດກັບ 1 ບ້ານຄື: ບ້ານ ສີງທ່າ**

ບ້ານ ສອງຄອນ ຕິດກັບ ບ້ານ ສີງທ່າ: ເລີ່ມແຕ່ກາງເຊບັ້ງຫຽງໄປຫາລະຫວ່າງປາກເຊຈຳພອນແມ່ນຈຸດສຸດທ້າຍຂອງບ້ານສີງທ່າມີໄລຍະລວມທັງໝົດແມ່ນ 2642 ແມັດ.

ຕາຕະລາງ ຄ່າພິກັດ ຫ້ອຍຄໍ້ ກັບບ້ານ ກຸ່ມລະບົບ WGS 84

| **ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48)** | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 530652 | 1799290 | ຈຸດເຊນ້ອຍ ແລະ ເຊບັ້ງຫຽງພົບກັນ | 0 |
| 2 | 530795 | 1798950 | ເຊບັ້ງຫຽງ | |
| 3 | 531044 | 1798550 | ເຊບັ້ງຫຽງ | |
| 4 | 531369 | 1798040 | ເຊບັ້ງຫຽງ | |
| 5 | 531708 | 1797500 | ເຊບັ້ງຫຽງ | |
| 6 | 532002 | 1797030 | ຈຸດເຊບັ້ງຫຽງຕັດຂຶ້ນໃສ່ ມສ ສອງຄອນ | |
| **ລວມໄລຍະ** | | | | |

ແຫຼ່ງຂໍ້ມູນ: ອຳນາດການປົກຄອງບ້ານ ແລະ ການວິເຄາະທີມງານ ປີ 2025

4. **ທິດຕາເວັນຕົກ: ຕິດກັບ 1 ບ້ານ ຄື: ບ້ານລະຫານໍ້າ**

ບ້ານ ສອງຄອນ ຕິດກັບ ບ້ານລະຫານໍ້າ: ຈາກປາກເຊຈຳພອນຕົກມາໃສ່ກາງເຊບັ້ງຫຽງ ແລ້ວຕັດໄປໃສ່ເໜືອວັງສະຫງວນ ແລະ ຕັດໄປໃສ່ເໜືອປາກຫ້ອຍສາລາເກົ່າເຂດສຸດວັງສະຫງວນ ຕັດໄປໃສ່ວັງຝັ່ງແດງ ແລະ ລຽບຕາມເຊຈຳພອນໄປຈົນຮອດປາກເຊສັງຊອຍຕົກລົງມາໃສ່ເຊຈຳພອນ ມີໄລຍະທັງໝົດ 7748 ແມັດ

ຕາຕະລາງ ຄ່າພິກັດ ຫ້ອຍຄໍ້ ກັບບ້ານ ກຸ່ມລະບົບ WGS 84

| **ຄ່າພິກັດ GPS Gramin (ລະບົບ WGS 1984 UTM Zone 48)** | | | | |
|---|---|---|---|---|
| **ລຳດັບ** | **E** | **N** | **ຊື່ຈຸດ** | **ໄລຍະ (m)** |
| 1 | 532063 | 1803430 | ຈຸດເຊຊັງຊອຍ ແລະ ເຊຈຳພອນພົບກັນ | |
| 2 | 532048 | 1803200 | ເລາະຕາມເຊນ້ອຍ | |
| 3 | 532015 | 1801410 | ເລາະຕາມເຊນ້ອຍ | |
| 4 | 530957 | 1801950 | ເລາະຕາມເຊນ້ອຍ | |
| 5 | 530823 | 1800930 | ຫົວຫ້ວງຝາກແດງ | |
| 6 | 530554 | 1799530 | ຈຸດຕັດຂ້າມດອນແດງ | |
| 7 | 530567 | 1800570 | ທ່າລີງຂ້າມໄປບ້ານສີງທ່າ | |
| 8 | 530547 | 1799370 | ຈຸດເຊນ້ອຍ ເຊບັ້ງຫຽງພົບກັນນ | |
| **ລວມໄລຍະ** | | | | |

ດັ່ງນັ້ນ, ອຳນາດການປົກຄອງຂອງ ບ້ານສອງຄອນ ແລະ ບ້ານອ້ອມຂ້າງທີ່ກ່ຽວຂ້ອງທີ່ມີເຂດການຄຸ້ມຄອງທີ່ດິນ ລະຫວ່າງບ້ານຕໍ່ບ້ານ, ຈຶ່ງໄດ້ເຮັດບົດບັນທຶກເຂດຄຸ້ມຄອງສະບັບນີ້ຂຶ້ນມາ ເພື່ອຢັ້ງຢືນ ແລະ ເປັນຫຼັກຖານອ້າງອີງໃນຕໍ່ໜ້າ.

| | |
|---|---|
| ນາຍບ້ານ :ບ້ານ ສອງຄອນ | ຫົວໜ້າທີມງານ. |
| | ຂັນທອງ ວໍລະບຸດນາມມະວົງ |

<u>ເຊັນບ້ານອ້ອມຂ້າງ:</u>

| | | |
|---|---|---|
| ນາຍບ້ານ :ບ້ານ ດົງບຸນ | ນາຍບ້ານ :ບ້ານ ດອນຍາໂນງ | ນາຍບ້ານ: ບ້ານ ດົງສະຫວ່າງ |
| ດ່ອນ ເຄື່ອງເງິນ | | ເກີກ ໄຊເສດຖາ |
| ຫົວໜ້າຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງ | ນາຍບ້ານ : ບ້ານ ສີງທ່າ | ນາຍບ້ານ: ບ້ານ ລະຫານ້ຳ |
| ກັນຍາ ຊານຸລາດ | | |

| | |
|---|---|
| ເຫັນດີ ແລະ ຮັບຮອງຈາກ ເຈົ້າເມືອງໆ ສອງຄອນ. | ຫົວໜ້າຫ້ອງວ່າການ |
| ແກ້ວສົມສັກ ພົມມະຈັກ | ເລີດປິຊາ ບຸນມາວົງ |

ເອກະສານຊ້ອນທ້າຍທີ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ການກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງສອງຄອນ

ບ້ານສອງຄອນ ເລກທີ...................

ທີ່ ບ້ານສອງຄອນ, ວັນທີ..................

## ບົດບັນທຶກກອງປະຊຸມ
## ກ່ຽວກັບການວາງແຜນຈັດສັນ, ກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ

ໃນເວລາ ຕອນບ່າຍ 11:00 ໂມງ, ຂອງວັນທີ 14 ພະຈິກ 2025 ຢູ່ທີ່ບ້ານສອງຄອນ ໄດ້ຈັດກອງປະຊຸມຂຶ້ນ ເພື່ອປຶກສາຫາລືກ່ຽວກັບການວາງແຜນຈັດສັນ, ກຳນົດຂອບເຂດແດນບ້ານ ແລະ ກຳນົດປະເພດການນຳໃຊ້ທີ່ດິນຢູ່ເຂດບ້ານຫ້ວຍຄໍ້,ເມືອງສອງຄອນ, ແຂວງສະຫວັນນະເຂດ ໂດຍມີຄະນະທີມງານ ຈາກພະແນກກະສິກຳ ແລະສິ່ງແວດລ້ອມແຂວງ, ຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງ ອີງຕາມຂໍ້ຕົກລົງທ່ານເຈົ້າເມືອງ ວ່າດ້ວຍການແຕ່ງຕັ້ງພະນັກງານລົງຕິດຕາມ,ຊຸກຍູ້ ແລະ ເຄື່ອນໄຫວ ເພື່ອລົງສຳຫຼວດ, ເກັບກຳຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງມີ ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ ສະບັບເລກທີ 606/ຈມ, ລົງວັນທີ 6 ພະຈິກ 2025 ແລະ ອຳນາດການປົກຄອງບ້ານ ແລະ ພາກສ່ວນທີ່ກຽ່ວຂ້ອງຕ່າງໆ.

ຜ່ານການຄົ້ນຄວ້າ ແລະ ປະກອບຄຳເຫັນ ຜູ້ເຂົ້າຮ່ວມກອງປະຊຸມໄດ້ຕົກລົງເປັນເອກະພາບ ກ່ຽວກັບການວາງແຜນຈັດສັນ, ກຳນົດຂອບເຂດ, ກຳນົດປະເພດທີ່ດິນ ແລະ ສ້າງແຜນທີ່ການນຳໃຊ້ທີ່ດິນຂອງບ້ານດັ່ງກ່າວ, ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນຖືກຕ້ອງ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງບ້ານ, ກຸ່ມບ້ານ, ລະບຽບການ ແລະ ເໝາະສົມກັບສະພາບຄວາມເປັນຈິງຂອງບ້ານເພື່ອເຮັດໃຫ້ບ້ານ ກາຍເປັນບ້ານພັດທະນາທາງດ້ານເສດຖະກິດສັງຄົມຢ່າງຮອບດ້ານ.

ດັ່ງນັ້ນ, ອົງການປົກຄອງບ້ານ, ຄະນະກຳມະການບ້ານ ແລະ ທີມງານຈຶ່ງໄດ້ຄົ້ນຄວ້າປຶກສາຫາລືກັນ ແລະ ມີຄວາມເປັນເອກະພາບກັນໃນການກຳນົດເຂດ ແລະ ປະເພດທີ່ດິນຂອງບ້ານສອງຄອນ, ອອກເປັນ 3 ເຂດດັ່ງນີ້:

**1) ເຂດທີ່ດິນອະນຸລັກ**

ບ້ານສອງຄອນ ແມ່ນເປັນເຂດອະນຸລັກຂອງບ້ານສອງຄອນ ໄດ້ກຳນົດເອົາທີ່ດິນ 2 ປະເພດຄື:

- **ທີ່ດິນວັດທະນະທຳລວມມີ:**
  1. **ທີ່ດິນປ່າຊ້າ** ມີ 2 ແຫ່ງ . 2. **ດິນປ່າມະເຫສັກ** 1 ແຫ່ງ ແລະ 3.**ດິນວັດ** 1 ແຫ່ງ (ວັດບ້ານສອງຄອນ).
  - ທີ່ດິນບໍລິເວນນ້ຳມີ:

    1. ເຊບັ້ງຫຽງ ແລະ ເຊຈາພອນ

2. ສາຍຫ້ອຍ ມີ 2 ຫ້ອຍ ຄື: ຫ້ອຍສາລາ ແລະ ຫ້ອຍເກົ່າ.

2. **ເຂດທີ່ດິນນໍາໃຊ້ ຂອງ ບ້ານສອງຄອນ**

ປະຊາຊົນສ່ວນຫຼາຍພາຍໃນບ້ານ ແມ່ນໄດ້ນໍາໃຊ້ທີ່ດິນແບບຢູ່ຈຸດດຽວໃກ້ແຄມເຊບັງຫຽງ, ດິນປຸກສ້າງແມ່ນກວມເອົາເນື້ອທີ່ບໍ່ຫຼາຍ ໃນນັ້ນມີດິນປຸກສ້າງຂອງສໍານັກງານລັດ ແລະ ດິນປຸກສ້າງທີ່ຢູ່ອາໄສຂອງປະຊາຊົນ, ທີ່ດິນທໍາການຜະລິດ ມີເນື້ອທີ່ນາ, ເນື້ອທີ່ສວນ, ຝາຍຊົນລະປະທານ ສ່ວນຫຼາຍທໍາການຜະລິດທັງ, ສ່ວນເຂດດິນວັດທະນະທໍາພາຍໃນບ້ານປະກອບມີ: ປ່າຊ້າ, ປ່າມະເຫສັກ ແລະ ດິນວັດ.

3. **ເຂດພັດທະນາ**

ໝາຍເຖິງເຂດພື້ນທີ່ຈະຂະຫຍາຍ ລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງຂອງບ້ານ ເພື່ອຮອງຮັບການເພີ່ມຂຶ້ນຂອງປະຊາກອນພາຍໃນບ້ານ ໃນອະນາຄົດ ແລະ ເສດຖະກິດຂອງບ້ານ, ການຂະຫຍາຍພື້ນທີ່ດິນດັ່ງກ່າວແມ່ນໄດ້ກໍານົດເອົາ ຈຸດເພື່ອຂະຫຍາຍດິນປຸກສ້າງ,ຂະຫຍາຍເສັ້ນທາງໃນອານາຄົດ ແລະ ກໍານົດຈຸດທໍາການຜະລິດໃນອານາຄົດສະຫງວນໄວ້ເຮັດນາແຊງ.

- **ເຂດຫວງຫ້າມ** ໄດ້ກໍານົດເອົາທີ່ດິນບໍລິເວນນໍ້າແຄມເຊບັງຫຽງ, ແຄມເຊຈໍາພອນ ແລະ ທີ່ດິນປ່າມະເຫສັກ, ປ່າຊ້າ.

## I. ການກໍານົດເຂດ ແລະ ປະເພດການນໍາໃຊ້ທີ່ດິນ 8 ປະເພດທີ່ດິນ

1. **ການກໍານົດເຂດທີ່ດິນກະສິກໍາ**

ປະຊາຊົນສ່ວນຢູ່ພາຍໃນບ້ານສອງຄອນ ສ່ວນໃຫ່ຍແມ່ນມີອາຊີບ ກະສິກໍາ ປູກຝັງ, ເປັນຕົ້ນແມ່ນ: ເຮັດນາ, ແລະ ເຮັດສວນແບບປະສົມ ປະສານ ແລະ ການລ້ຽງສັດ, ການຫາປາ ເຂດເຮັດກະສິກໍາສ່ວນຫຼາຍແມ່ນຢູ່ລຽບຕາມສາຍຫ້ອຍ ແລະ ແຄມສາຍເຊບັງຫຽງ ແລະ ເຊຈໍາພອນ,

2. **ການກໍານົດເຂດດິນປຸກສ້າງ**

ເຂດທີ່ດິນປຸກສ້າງ ບ້ານສອງຄອນ ປະກອບມີ: ດິນປຸກສ້າງດິນລັດ, ດິນຫ້ອງການບ້ານ, ຫ້ອງການຈຸດສຸມດິນໂຮງຮຽນ, ດິນສຸກສາລາ, ແລະ ດິນປຸກສ້າງທີ່ຢູ່ອາໄສ, ສ່ວນຫຼາຍແມ່ນຕັ້ງຢູ່ໃຈກາງບ້ານໃນເຂດດິນປຸກສ້າງ ແລະ ຍັງກໍານົດສະຖານທີ່ຖິ້ມຂີ້ເຫຍື້ອຍຕິດກັບປ່າມະເຫສັກເທິງບ້ານ.

3. **ການກໍານົດທີ່ດິນວັດທະນາທໍາ**:

ປະຊາຊົນພາຍໃນ ບ້ານສອງຄອນ ແມ່ນໄດ້ນັບຖືສາສະໜາພຸດ, ສະນັ້ນ ດິນວັດທະນາທໍາ ບ້ານສອງຄອນຈຶ່ງມີຢູ່ 4 ແຫ່ງ ຄື: ປ່າມະເຫສັກ 2 ແຫ່ງ, ປ່າຊ້ຳ 1ແຫ່ງ ແລະ ດິນວັດ 1 ແຫ່ງ ຄື: ຈຸດທີ 1 ປ່າມະເຫສັກ ແມ່ນຕັ້ງຢູ່ຕິດກັບເຊບັງຫຽງຢູ່ເທິງດິນປຸກສ້າງ, ຈຸດທີ 2 ປ່າຊ້າ ແມ່ນຕັ້ງຢູ່ໃກ້ກັບປ່າມະເຫສັກ, ຈຸດທີ 3 ດິນວັດແມ່ນຕັ້ງຢູ່ຕິດກັບເຊບັງຫຽງ ຕິດກັບເຂດດິນປຸກສ້າງຂອງບ້ານ ແລະ ຍັງໄດ້ກໍານົດເຂດສະຫງວນທ່ອງທ່ຽວທໍາມະຊາດໜອງປາເຕົ່າໃກ້ກັບດິນປຸກສ້າງຫ້ອງການບ້ານ .

4. **ການກໍານົດດິນ ປກສ-ປກຊ.**

ການກໍານົດທີ່ດິນ ປກສ-ປກຊ ຢູ່ພາຍໃນບ້ານສອງຄອນ ແມ່ນບໍ່ໄດ້ກໍານົດ.

5. **ການກໍານົດທີ່ດິນປ່າໄມ້.**

ທີ່ດິນປ່າໄມ້ຂອງບ້ານສອງຄອນ ແມ່ນບໍ່ມີການກໍານົດເຂດພື້ນທີ່ດິນປ່າໄມ້, ສ່ວນໃຫຍ່ແມ່ນເປັນປ່າເລົ່າທີ່ປະຊາຊົນຈັບຈອງນໍາໃຊ້ລ້ຽງສັດ ແລະ ທໍາການຜະລິດແມ່ນກະຈາຍຢູ່ພາຍໃນບ້ານ ສວ່ນຫຼາຍແມ່ນຕິດກັບແຄມຫ້ອຍ ແລະ ເຊພາຍໃນບ້ານ.

**6. ການກຳນົດເຂດທີ່ອຸດສາຫະກຳ:**

ການກຳນົດທີ່ດິນອຸດສາຫະກຳ ຢູ່ພາຍໃນບ້ານສອງຄອນ ແມ່ນບໍ່ໄດ້ກຳນົດ.

**7. ການກຳນົດນົດທີ່ດິນຄົມມະນາຄົມ**

ແມ່ນໄດ້ກຳນົດເອົາ 1 ເສັ້ນຄື: ເສັ້ນທີ 1 ແມ່ນເສັ້ນແຕ່ ແມ່ນເສັ້ນທາງແຕ່ບ້ານຫາບ້ານ ເປັນເສັ້ນທາງເຊື່ອມຕໍ່ລະຫວ່າງເມືອງ ແມ່ນກຳນົດເອົາເບື່ອງລະ 6 ແມັດ, ສ່ວນທາງຕາຣ່ອມ ແລະ ທາງຊອຍພາຍໃນບ້ານແມ່ນໄດ້ກຳນົດເອົາເບື້ອງລະ 6 ແມັດ ເພື່ອການພັດທະນາພື້ນຖານໂຄງລ່າງໃນອານາຄົດ ແລະ ເປັນແຜນອານາຄົດພາຍໃນບ້ານໄວ້.

8. ການກຳນົດນົດທີ່ດິນບໍລິເວນນ້ຳ

ແມ່ນໄດ້ກຳນົດເອົາ ສາຍນ້ຳ, ສາຍເຊ, ຫ້ວຍ, ໜອງທຳມະຊາດ ພາຍໃນບ້ານມີເຊ 02 ແຫ່ງ ຄື: ເຊຈຳພອນ, ເຊບັງຫຽງ, ໜອງທຳມະຊາດຫຼາຍແຫ່ງ ແລະ ມີ 02 ຫ້ວຍ ຄື: ຫ້ວຍສາລາ ແລະ ຫ້ວຍເກົ່າ.

- ເຊຈຳພອນ ແມ່ນເຊິ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 20 ແມັດ;
- ເຊບັງຫຽງ ແມ່ນເຊິ່ງໄດ້ກຳນົດເຂດສະຫງວນຮັກສາແຄມນ້ຳໄວ້ເບື້ອງລະ 25 ແມັດ.
- ທາງອຳນາດການປົກຄອງບ້ານ ໄດ້ກຳນົດເອົາ ໜອງລຳປາເຕົ່າ ໄວ້ເປັນເຂດທ່ອງທ່ຽວໃນອານາຄົດ.

ດັ່ງນັ້ນຈຶ່ງໄດ້ເຮັດເປັນບົດບັນທຶກ ການວາງແຜນຈັດສັນ, ກຳນົດເຂດ ແລະ ການກຳນົດທີ່ດິນແຕ່ລະປະເພດ ໃຫ້ທ່ານໄດ້ຮັບຊາບ ແລະ ເປັນບ່ອນອີງໃນຂັ້ນຕໍ່ໄປ

ທີ່ບ້ານສອງຄອນ, ວັນທີ ...........................

ນາຍບ້ານສອງຄອນ

ຄະນະທີມງານວິຊາການ

1. ..............................
2. ..............................
3. ..............................
4. ..............................
5. ..............................
6. ..............................
7. ..............................
8. ..............................
9. ..............................
10. ..............................

**ເອກະສານຊ້ອນທ້າຍທີ 4: ຂໍ້ຕົກລົງພະແນກກະສິກຳ ແລະ ສິ່ງແວດລ້ອມວ່າດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມວຽກສຳຫຼວດຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍເມືອງສອງຄອນ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສະຫວັນນະເຂດ
ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ເລກທີ.1343 ກສຂ.
ສະຫວັນນະເຂດ, ວັນທີ 24.ພ.ຈ.2025

## ຂໍ້ຕົກລົງ
**ວ່າດ້ວຍການແຕ່ງຕັ້ງພະນັກງານໄປຮ່ວມກອງປະຊຸມ**

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດ ລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
- ອີງຕາມ ໜັງສືເຊີນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມທອງສອງຄອນ ສະບັບເລກທີ 478/ຫຊສ, ລົງວັນທີ 10 ພະຈິກ 2025.

**ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

**ມາດຕາ 1** ເຫັນດີ ແຕ່ງຕັ້ງພະນັກງານວິຊາການ ພະແນກກະສິກຳ ແລະ ສິ່ງແວດລ້ອມ ເຂົ້າຮ່ວມກອງປະຊຸມນຳສະເໜີຈຸດປະສົງຂັ້ນບ້ານ ເພື່ອແນະນຳກ່ຽວກັບການຈັດສັນທີ່ດິນ 08 ປະເພດຂັ້ນບ້ານ ແລະ ລົງສຳຫຼວດຈັດສັນທີ່ດິນຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ຢູ່ເມືອງສອງຄອນ ໃນລະຫວ່າງ ວັນທີ 13 ພະຈິກ - 07 ທັນວາ 2025 ມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ບຸນທະວີ ວິຊຽນ — ວິຊາການຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ
2. ທ່ານ ສີສະຫວັນ ໄຊຍະວົງ — ວິຊາການຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ
3. ທ່ານ ນ.ປານຄຳ ສຸວັນນາລີ — ວິຊາການຂະແໜງຊັບພະຍາກອນນ້ຳ,ອຸຕຸນິຍົມ-ອຸທົກກະສາດ.

**ມາດຕາ 2** ຜູ້ທີ່ຖືກແຕ່ງຕັ້ງຕາມ ມາດຕາ 01 ມີໜ້າທີ່ປະຕິບັດໜ້າວຽກຂອງຕົນໃຫ້ສຳເລັດຜົນເປັນຢ່າງດີ.
- ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ກ່ຽວຕາມຄວາມເໝາະສົມ,ພາຍຫຼັງສຳເລັດວຽກງານແລ້ວ ລາຍງານຄືນໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ;
- ສຳລັບງົບປະມານແມ່ນນຳໃຊ້ ຂອງໂຄງການດັ່ງກ່າວ.

**ມາດຕາ 3** ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງ **ຫົວໜ້າພະແນກ**

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ

ບູລີກາ ອິນທິລາດ

ເອກະສານຊ້ອນທ້າຍທີ 5: ຂໍ້ຕົກລົງທ່ານເຈົ້າເມືອງສອງຄອນດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມວຽກສໍາຫຼວດຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍເມືອງສອງຄອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າເມືອງ

ເລກທີ...606.../ຈມ

ເມືອງສອງຄອນ, ວັນທີ06......ພະຈິກ 2025

## ຂໍ້ຕົກລົງ

### ຂອງທ່ານເຈົ້າເມືອງສອງຄອນ

ວ່າດ້ວຍການແຕ່ງຕັ້ງພະນັກງານລົງຕິດຕາມຊຸກຍູ້ ແລະ ເຄື່ອນໄຫວວຽກງານຂອງໂຄງການ ຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນ ການອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ເພື່ອລົງສໍາຫຼວດເກັບກໍາຂໍ້ມູນກ່ຽວ ກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນຄື:

ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ ສພຊ, ລົງວັນທີ 14 ທັນວາ 2015 ພາກທີ IV ໝວດທີ IV ມາດຕາ 40 ຂໍ້ທີ 7.
- ອີງຕາມ ໜັງສືສະເໜີຂອງຫ້ອງການ ຊສ ເມືອງ ສະບັບເລກທີ 446, ລົງວັນທີ 20/10/2025 ເພື່ອລົງສໍາຫຼວດເກັບກໍາຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນ.
- ອີງຕາມ ແຜນກິດຈະກໍາການສໍາຫຼວດຈັດສັນທີ່ດິນ 8 ປະເພດ ຂອງບ້ານເປົ້າຫມາຍ 3 ບ້ານເປົ້າຫມາຍຂອງ ເມືອງສອງຄອນຄື: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້.

## ເຈົ້າເມືອງ ຕົກລົງ:

ມາດຕາ 01: ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາລວມປະກອບມີ:

| | | |
|---|---|---|
| 1. ທ່ານ ແກ້ວສົມສັກ ພິມມະຈັກ | ຮອງເຈົ້າເມືອງ | ປະທານ |
| 2. ທ່ານ ເລີດປີຊາ ບຸນມາວົງ | ຫົວໜ້າຫ້ອງວ່າການເມືອງ | ຮອງປະທານ |
| 3. ທ່ານ ກັນຍາ ຊານຸລາດ | ຫົວໜ້າຫ້ອງການກະສິກໍາເມືອງ | ຄະນະ |
| 4. ທ່ານ ຂັນທອງ ວໍລະບຸດນາມມະວົງ | ຮອງຫົວໜ້າຫ້ອງການ ຊສ ເມືອງ | ຄະນະ |
| 5. ທ່ານ ອໍາພາວັນ ດອກກຸສິນ | ຮອງຫົວໜ້າຫ້ອງການ ຍທຂ ເມືອງ | ຄະນະ |
| 6. ນາງ ພູມສະຫວັນ ລາດວົງສາ | ປະທານສະຫະພັນແມ່ຍິງເມືອງ | ຄະນະ |
| 7. ທ່ານ ເພັດສ່ອງແສງ ສຸລິກາ | ການຫ້ອງວັດຖະນະທໍາ ແລະ ຫ້ອງທ່ຽວ | ຄະນະ |

ມາດຕາ 02 : ແຕ່ງຕັ້ງ ພະນັກງານ ລົງຕິດຕາມຊຸກຍູ້ ແລະ ເຄື່ອນໄຫວວຽກງານຂອງໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ, ເພື່ອລົງສຳຫຼວດເກັບກຳຂໍ້ມູນກ່ຽວກັບການຈັດສັນທີ່ດິນ 8 ປະເພດຢູ່ 3 ບ້ານເປົ້າໝາຍຂອງເມືອງສອງຄອນ: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ປະກອບມີລາຍຊື່ດັ່ງນີ້:

1. ທ່ານ ພູສອນມະໄລ ພົວໂສດາລົດ — ຫ້ອງການ ຊສ ເມືອງ
2. ທ່ານ ບັນດິດ ຈັນທະລືໄຊ — ຫ້ອງການ ຊສ ເມືອງ
3. ທ່ານ ຄຳພູວັນ ແກ້ວວົມະນີໃສ — ຫ້ອງການ ຊສ ເມືອງ
4. ທ່ານ ພູດົງ ມູນລະວົງ — ຫ້ອງການກະສິກຳເມືອງ
5. ທ່ານ ນາຍບ້ານທັງ 3 ບ້ານ ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້
6. ປະທ່ານກຸ່ມ 3 ບ້ານ ຄື: ບ້ານສອງຄອນ, ບ້ານແກ້ງໂດນ, ບ້ານຫ້ວຍຄໍ້

ມາດຕາ 03: ມອບໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ, ບັນດາຫ້ອງການທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນປະສານ ສົມທົບເພື່ອຈັດຕັ້ງປະຕິບັດ, ພາຍຫຼັງສຳເລັດແລ້ວໃຫ້ລາຍງານການຈັດຕັ້ງທີ່ກ່ຽວຂ້ອງຮັບຊາບ.

ມາດຕາ 04 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ ນັບຕັ້ງແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການເຈົ້າເມືອງ

ແກ້ວສິນສັກ ພົມມະຈັກ

ເອກະສານຊ້ອນທ້າຍທີ 6: ບົດບັນທຶກກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ກອງປະຊຸມ ປຶກສາຫາລື ຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍ (ບ້ານຫ້ວຍຄໍ້, ບ້ານແກ້ງໂດນ ແລະ ບ້ານສອງຄອນ) ເມືອງສອງຄອນ, ແຂວງສະຫວັນນະເຂດ

ໃນຕອນເຊົ້າຂອງ ວັນທີ 08 ທັນວາ 2025 ເວລາ 9:00 ໂມງ ທີ່ ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງສອງຄອນ ແຂວງສະຫວັນນະເຂດ, ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ (ຫກສ) ໄດ້ຈັດກອງປະຊຸມປຶກສາຫາລືຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍ ຂອງເມືອງສອງຄອນ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ ຂຶ້ນ ໂດຍໃຫ້ກຽດເປັນປະທານຂອງ ທ່ານ ແກ້ວສິມສັກ ພົມມະຈັກ ຮອງປະທານຄະນະກຳມະການປົກຄອງເມືອງສອງຄອນ ໃຫ້ກຽດກ່າວເປີດກອງປະຊຸມ. ຫຼັງຈາກນັ້ນ ທ່ານ ບຸລິກາ ອິນທິລາດ ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ເປັນປະທານຮ່ວມ ມີພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ: ພະແນກກະສິກຳ ແລະ ສິ່ງແວດລ້ອມ (ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ຂະແໜງຊັບພະຍາກອນນ້ຳ-ອຸຕຸນິຍົມ ແລະ ຂະແໜງຄຸ້ມຄອງແຂວງ), ຄະນະຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມວິຊາການ ແລະ ຫ້ອງການອ້ອມຂ້າງຂອງເມືອງສອງຄອນ, ຄະນະບ້ານ 3 ບ້ານເປົ້າໝາຍໂຄງການ (ບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ). ນອກຈາກນີ້ຍັງມີພະນັກງານໂຄງການພາກສະໜາມປະຈຳແຂວງ ຂອງ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ຊຶ່ງມີຜູ້ເຂົ້າຮ່ວມ ລວມທັງໝົດ ຈຳນວນ 43 ທ່ານ, ຍິງ ...4.... ທ່ານ (ລາຍຊື່ຜູ້ເຂົ້າຮ່ວມຄັດຕິດມາພ້ອມນີ້).

ຈຸດປະສົງ ຂອງກອງປະຊຸມຄັ້ງນີ້ ເພື່ອຜ່ານ ແລະ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານເປົ້າໝາຍ. ພາຍຫຼັງປະທານໄດ້ກ່າວເປີດ ແລະ ໃຫ້ຄຳເຫັນຕໍ່ກອງປະຊຸມແລ້ວຜູ້ເຂົ້າຮ່ວມກໍ່ໄດ້ຮັບຟັງການນຳສະເໜີລາຍງານສະພາບລວມຂອງໂຄງການ IWRM-EbA ແລະ ນຳສະເໜີຂະບວນການສ້າງ ແລະ ເນື້ອໃນຂອງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວ (ເຫດຜົນຄວາມຈຳເປັນຂອງການສ້າງແຜນຈັດສັນການນຳໃຊ້ທີ່ດິນ, ວິທີການສຳຫຼວດ, ເກັບກຳຂໍ້ມູນການຈັດສັນທີ່ດິນ 8 ປະເພດ ພາຍໃນ 3 ບ້ານເປົ້າໝາຍ, ໂຄງປະກອບໂດຍລວມ ແລະ ເນື້ອໃນຕົ້ນຕໍປະກອບດ້ວຍ ແປດ ພາກ ດັ່ງນີ້: ພາກທີໜຶ່ງ ແມ່ນ ໄດ້ກຳນົດຈຸດປະສົງ, ລະດັບຄາດໝາຍ, ຂັ້ນຕອນໃນການຈັດຕັ້ງປະຕິບັດ ແລະ ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ, ພາກທີສອງ ແມ່ນການລາຍງານ ສະພາບລວມຂອງບ້ານ, ທີ່ຕັ້ງພູມສັນຖານ, ດ້ານການປົກຄອງ, ດ້ານເສດຖະກິດ-ສັງຄົມ, ດ້ານວັດທະນະທຳ ແລະ ຮີດຄອງປະເພນີ, ພາກທີສາມ ແມ່ນການສະພາບການນຳໃຊ້ທີ່ດິນປະຈຸບັນ, ການກຳນົດຈຸດທີ່ຕັ້ງຂອງບ້ານ, ເຂດຄຸ້ມຄອງຂອງບ້ານ, ພາກທີສີ່ ແມ່ນການກຳນົດເຂດທີ່ດິນຂອງບ້ານ (ເຂດທີ່ດິນອະນຸລັກ, ເຂດທີ່

ດິນນຳໃຊ້, ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ), ການກຳນົດປະເພດທີ່ດິນຂອງບ້ານ, ພາກທີຫ້າແມ່ນການການກຳນົດທ່າແຮງໃນການພັດທະນາທີ່ດິນຂອງບ້ານ ແລະ ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານໃນມະສະຫວ່າງ, ພາກທີຫົກ ແມ່ນການກຳນົດລະບຽບການໃລະບຽບໃນການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ (ການຄຸ້ມຄອງ ທີ່ດິນກະສິກຳ, ທີ່ດິນປຸກສ້າງ, ທີ່ດິນວັດທະນາທຳ, ທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ, ທີ່ດິນປ່າໄມ້, ທີ່ດິນໂຍທາທິການ ແລະ ຂົນສົ່ງ ແລະ ທີ່ດິນບໍລິເວນນໍ້າ), ພາກທີເຈັດແມ່ນການຫັນປ່ຽນປະເພດທີ່ດິນ ແລະ ພາກທີ່ແປດແມ່ນກຳນົດກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ. ພາຍຫຼັງຮັບຟັງການລາຍງານແລ້ວຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄຳເຫັນ ຢ່າງກົງໄປກົງມາ ແລະ ຄຳສະເໜີ ດັ່ງນີ້:

- ສະເໜີໃຫ້ຄະນະຮັບຜິດຊອບຈັດສັນທີ່ດິນຂັ້ນເມືອງສົມທົບແຂວງ ປັບປຸງແຜນທີ່ຈັດສັນທີ່ດິນບ້ານຫ້ວຍຄໍ້ ແລະ ແກ້ງໂດນ ໃຫ້ຄົບ 8 ປະເພດທີ່ດິນຕາມກົດໝາຍກຳນົດ;
- ສຳລັບບ້ານສອງຄອນແມ່ນໃຫ້ເອົາຕາມໂຄງການຊົວະນາໆພັນກຳນົດແລ້ວປ່ຽນຊື່ແຜນທີ່ ແລະ ເພີ່ມໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂລໂກ້ IWRM-EbA, ໂລໂກ້ gef ແລະ ໂລໂກ້ UNDP ເຂົ້າຮ່ວມກັບໂລໂກຂອງພາກສ່ວນສະໜັບສະໜູນໂຄງການຊົວະນາໆພັນເຂດດິນບໍລິເວນນໍ້າ.
- ໃຫ້ປຸງແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ແລະ ແຜນທີ່ຈັດສັນທີ່ດິນ 8 ປະເພດທີ່ດິນ ໃຫ້ເອົາຊື່ປະເພດທີ່ດິນຕາມກົດໝາຍຄື: 1. ທີ່ດິນກະສິກຳ; 2. ທີ່ດິນປ່າໄມ້; 3. ທີ່ດິນບໍລິເວນນໍ້າ; 4. ທີ່ດິນອຸດສາຫະກຳ; 5. ທີ່ດິນຄົມມະນາຄົມ; 6. ທີ່ດິນວັດທະນະທຳ; 7. ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; 8. ທີ່ດິນປຸກສ້າງ.
- ບ້ານໜຶ່ງ ມີ 3 ແຜນທີ ສຳລັບເບື້ອງເທິງແຜນທີ່ແຕ່ລະແຜ່ນໃຫ້ໃສ່ໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມດ້ວຍໂຄງການ IWRM-Eba (ເບື້ອງຊ້າຍມື) ກາງເຄິ່ງໃຫ້ຂຽນຊື່ແຜນທີ່ທັງພາສາລາວ ແລະ ອັງກິດໃສ່ ແລະ ເບື້ອງຂວາມືໃຫ້ໃສ່ໂລໂກ້ gef ແລະ ໂລໂກ້ UNDP:
- ສະເໜີໃຫ້ຄະນະຮັບຜິດຊອບຂັ້ນເມືອງເລັ່ງປັບປຸງ ພ້ອມທັງເອົາຂໍ້ມູນເຂົ້າແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 3 ບ້ານເປົ້າໝາຍໃຫ້ສຳເລັດໂດຍໄວ.

**ສະຫຼຸບ:**

ປະທານໄດ້ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ໂດຍສະເພາະກໍ່ແມ່ນ ຄະນະຮັບຜິດຊອບສ້າງແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານໃຫ້ກວດກາ ແລະ ຮຽບຮຽງຄືນບັນດາຄຳສັບ, ໄວຍາກອນໃນການຂຽນແຜນ, ປັບປຸງແຜນທີຈັດສັນທີ່ດິນບ້ານຫ້ວຍຄໍ້ ແລະ ແກ້ງໂດນໃຫ້ຄົບ 8 ປະເພດທີ່ດິນໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ແທດເໝາະກັບສະພາບຕົວຈິງ ສຳລັບບ້ານສອງຄອນແມ່ນໃຫ້ເອົາຕາມໂຄງການຊົວະນາໆພັນກຳນົດແລ້ວປ່ຽນຊື່ແຜນທີ່ ແລະ ເພີ່ມໂລໂກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ໂລໂກ້ IWRM-EbA, ໂລໂກ້ gef ແລະ ໂລໂກ້ UNDP ເຂົ້າຮ່ວມກັບໂລໂກຂອງພາກສ່ວນສະໜັບສະໜູນໂຄງການຊົວະນາໆພັນເຂດດິນບໍລິເວນນໍ້າ. ພາຍຫຼັງປັບປຸງແຜນຈັດສັນການນຳໃຊ້ທີ່ດິນດັ່ງກ່າວນີ້ສຳເລັດແລ້ວ ໃຫ້ ຫຊສ ເມືອງສອງຄອນ ເຮັດໜັງສືລາຍງານ ພ້ອມທັງຂໍ້ຕົກລົງເພື່ອນຳສະເໜີທ່ານເຈົ້າເມືອງສອງຄອນພິຈາລະຮັບຮອງ ແລະ ປະກາດນຳໃຊ້ແຜນຈັດສັນການນຳໃຊ້ທີ່ດິນສະບັບດັ່ງກ່າວນີ້ໃຫ້ມີປະສິດພາບ, ປະສິດທິຜົນສູງ.

ຄຽງຄູ່ກັນນີ້, ຄະນະຮັບຜິດຊອບຂັ້ນເມືອງຍັງຈະໄດ້ມີການຈັດພິມປຶ້ມແຜນຈັດສັນການນຳໃຊ້ທີ່ດິນບ້ານ, ພິມປ້າຍແຜນທີຈັດສັນການນຳໃຊ້ທີ່ດິນ 3 ບ້ານເປົ້າໝາຍໃຫ້ສຳເລັດຕາມໄລຍະເວລາກຳນົດ.

ນອກຈາກນີ້ກອງປະຊຸມຍັງໄດ້ມອບໃຫ້ການຈັດຕັ້ງບ້ານເປົ້າໝາຍໂຄສະນາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນພາຍໃນບ້ານ ແລະ ບ້ານໃກ້ຄຽງທີ່ມີຊາຍແດນຕິດຈອດໄດ້ຮັບຮູ້ຂໍ້ມູນຂ່າວສານ ແລະ ເຂົ້າໃຈກ່ຽວກັບປະເພດການນຳໃຊ້ທີ່ດິນເປັນແຕ່ລະໄລຍະ.

ກອງປະຊຸມດັ່ງກ່າວໄດ້ປິດລົງຢ່າງເປັນທາງການ ໃນເວລາ 16:30 ໂມງ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ.

ທີ່ ເມືອງສອງຄອນ, ວັນທີ 08 ທັນວາ 2025

ປະທານກອງປະຊຸມ

ເລີດປີຊາ ບຸນນາວົງ

ຜູ້ບັນທຶກ

ທູສອນມະໄລ ພົວໄສດາລິດ

ຮອງປະທານຄະນະກຳມະການປົກຄອງເມືອງສອງຄອນ

ແກ້ວສົມສັກ ພົມມະຈັກ

ຮກ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ
ເມືອງສອງຄອນ

ຂັນທອງ ວໍລະບຸດນາມມະວົງ

ເອກະສານຊ້ອນທ້າຍທີ 7: ໜັງສືສະເໜີ ກ່ຽວກັບພິຈາລະນາອະນຸມັດແຜນຈັດສັນການນາໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານທ້ອຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງສອງຄອນ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ເລກທີ..497../ຫກສມ

ເມືອງ ສອງຄອນ, ວັນທີ 12/12/25

**ໜັງສືສະເໜີ**

**ຮຽນ:** ທ່ານເຈົ້າເມືອງໆ ເມືອງ ສອງຄອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ສະເໜີ ພິຈາລະນາອະນຸມັດແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານຄື: ບ້ານແກ້ງໂດນ, ບ້ານທ້ອຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ.

- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ;
- ອີງຕາມ ແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານ ຄື: ບ້ານແກ້ງໂດນ, ບ້ານທ້ອຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ, ແຂວງສະຫວັນນະເຂດ ສະບັບເດືອນ ທັນວາ 2025;
- ອີງຕາມ ບົດບັນທຶກກອງປະຊຸມຜ່ານແຜນຈັດສັນການນຳໃຊ້ທີ່ດິນ 3 ບ້ານ ຄື: ບ້ານແກ້ງໂດນ, ບ້ານທ້ອຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງພາຍໃນເມືອງສອງຄອນ, ແຂວງສະຫວັນນະເຂດ, ຄັ້ງວັນທີ 08 ທັນວາ 2025.

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022. ໄລຍະຜ່ານມາຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການຂັ້ນແຂວງ ແລະ ເມືອງໄດ້ປະສານສົມທົບກັບນລົງການສຳຫຼວດຈັດສັນການນຳໃຊ້ທີ່ດິນ 8 ປະເພດ ຂອງ 3 ບ້ານຄື: ບ້ານແກ້ງໂດນ, ບ້ານທ້ອຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ ເລີ່ມແຕ່ ເດືອນ ພະຈິກ ຫາ ເດືອນ ທັນວາ ປີ 2025 ເປັນຕົ້ນມາຈົນສຳເລັດ.

ມາຮອດປະຈຸບັນ ຄະນະຮັບຜິດຊອບໂຄງການຂັ້ນແຂວງ ແລະ ເມືອງໄດ້ຮ່າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ພ້ອມທັງໄດ້ມີການປຶກສາຫາລືກັບຂະແໜງການກ່ຽວຂ້ອງຂັ້ນແຂວງ, ເມືອງ ແລະ ອຳນາດການປົກຄອງບ້ານ ລວມທັງປະຊາຊົນທັງໝົດພາຍໃນບ້ານເປົ້າໝາຍເຫັນດີເປັນເອກະພາບ. ນອກຈາກນີ້ ຄະນະທີມງານຍັງໄດ້ມີການປັບປຸງ ແລະ ຮຽບຮຽງຄືນບັນດາເນື້ອໃນຂອງຮ່າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ໄດ້ສຳເລັດຮຽບຮ້ອຍ ຕາມຄຳເຫັນຂອງບັນດາຜູ້ເຂົ້າຮ່ວມປະຊຸມ.

ສະນັ້ນ, ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິຜົນສູງ ຈຶ່ງຂໍຮຽນສະເໜີມາຍັງທ່ານເຈົ້າເມືອງສອງຄອນ ພິຈາລະນາລົງລາຍເຊັນໃສ່ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານແກ້ງໂດນ, ບ້ານຫ້ວຍຄໍ້ ແລະ ບ້ານສອງຄອນ, ເມືອງສອງຄອນ (ລາຍລະອຽດເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານ ແລະ ສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ.

ຫົວໜ້າຫ້ອງການ

ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ເມືອງສອງຄອນ

ຂັນທອງ ອໍລະບຸດນາມມະວົງ

**ເອກະສານຄັດຕິດ:**

1. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ 1 ສະບັບ;
2. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ 1 ສະບັບ;
3. ຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນຳໃຊ້ທີ່ດິນ 1 ສະບັບ;
4. ແຜນຈັດສັນການນຳໃຊ້ທີ່ດິນບ້ານຫ້ວຍຄໍ້ 3 ສະບັບ;
5. ແຜນຈັດສັນການນຳໃຊ້ທີ່ດິນບ້ານແກ້ງໂດນ 3 ສະບັບ;
6. ແຜນຈັດສັນການນຳໃຊ້ທີ່ດິນບ້ານສອງຄອນ 3 ສະບັບ.

**ຈັດຕັ້ງປະຕິບັດໂດຍ:**

**ສະໜັບສະໜູນໂດຍ:**

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ
ໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project

ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນ

ອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງຫລວງພະບາງ

ຫນ່ວຍງານຄຸ້ມຄອງໂຄງການ, ກົມຊັບພະຍາກອນນໍ້າ (ກຊນ)

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ (ກກສ)

laoiwrm-eba.com

IWRM -EbA Knowledge Hub